

ASSIST - ວິທີແກ້ໄຂບັນຫາຂອງອາຊຽນສຳລັບການລົງທຶນ, ການບໍລິການ ແລະ ການຄ້າ

ASSIST

ຊຸດເຄື່ອງມື

ຮູບພາບໂດຍ: Deborah Tomasowa ສຳລັບ US-ACTI

ຂໍ້ປະຕິເສດ: ເອກະສານນີ້ໄດ້ຮັບການຜະລິດດ້ວຍການຊ່ວຍເຫຼືອຂອງສະຫະພາບເອີຣົບ ແລະ ເປັນຄວາມຮັບຜິດຊອບຂອງໂຄງການ ARISE Plus ແຕ່ພຽງຜູ້ດຽວເທົ່ານັ້ນ ແລະ ບໍ່ໄດ້ສະທ້ອນໃຫ້ເຫັນເຖິງທັດສະນະຂອງສະຫະພາບເອີຣົບ.

ພາກສະເໜີກ່ຽວກັບຊຸດເຄື່ອງມື

ຈຸດປະສົງຂອງຊຸດເຄື່ອງມືນີ້ ແມ່ນເພື່ອໃຫ້ເຈົ້າໜ້າທີ່ລັດຖະບານຂອງບັນດາປະເທດສະມາຊິກອາຊຽນ ທີ່ໄດ້ຮັບມອບ ໝາຍໃຫ້ເຮັດໜ້າທີ່ເປັນຜູ້ຕິດຕໍ່ພົວພັນຫຼັກ ຫຼື ຜູ້ປະສານງານລະດັບປະເທດ ເພື່ອຈຸດປະສົງຂອງວິທີແກ້ໄຂບັນຫາສຳລັບການລົງທຶນ, ການບໍລິການ ແລະ ການຄ້າອາຊຽນ ຫຼື 'ASSIST', ພ້ອມທັງບັນດາຜູ້ຕາງໜ້າພາກທຸລະກິດ ແລະ ພາກເອກະຊົນ, ພ້ອມດ້ວຍຊຸດອຸປະກອນການຝຶກອົບຮົມ ເພື່ອຝຶກອົບຮົມຜູ້ທີ່ອາດຈະເປັນຜູ້ນຳໃຊ້ ASSIST ກ່ຽວກັບວິທີການນຳໃຊ້ ASSIST ເພື່ອຍື່ນຄຳຮ້ອງທຸກ ຫຼື ມີປະຕິສຳພັນກັບບັນດາລັດຖະບານຂອງປະເທດອາຊຽນທີ່ກ່ຽວຂ້ອງກັບປະເດັນບັນຫາການຄ້າຂ້າມຊາຍແດນຂອງອາຊຽນ.

ຈຸດປະສົງຂອງ ASSIST ແມ່ນເພື່ອໃຫ້ມີວິທີການແບບກະທັດຫັດງ່າຍດາຍໃຫ້ແກ່ພາກເອກະຊົນຂອງອາຊຽນໃນການແກ້ໄຂບັນຫາກ່ຽວກັບບັນດາມາດຕະການທີ່ບໍ່ແມ່ນດ້ານພາສີອາກອນ, ອຸປະສັກທີ່ບໍ່ແມ່ນດ້ານພາສີອາກອນ, ຄວາມຜິດເຄື່ອງດ້ານການຄ້າ ຫຼື ບັນຫາການຄ້າທີ່ອາດຈະເປັນສິ່ງກີດຂວາງຕໍ່ການຄ້າດ້ານສິນຄ້າ ຫຼື ດ້ານການບໍລິການໃນພາກພື້ນ, ດ້ວຍການຍົກບັນຫາ ຫຼື ຄວາມກັງວົນໃຈ ໃນບ່ອນທີ່ອາດຈະບໍ່ໄດ້ຈັດຕັ້ງປະຕິບັດຕາມກົນໄກການເຊື່ອມໂຍງເຂົ້າກັນຢ່າງເຕັມສ່ວນ ຫຼື ບໍ່ໄດ້ຈັດຕັ້ງປະຕິບັດຕາມຂໍ້ຕົກລົງສັນຍາສະເພາະຂອງພາກພື້ນໃນລະດັບປະເທດ. ປະຈຸບັນນີ້ ASSIST ອະນຸຍາດໃຫ້ພຽງແຕ່ໃຫ້ມີຄຳຮ້ອງທຸກທີ່ກ່ຽວຂ້ອງກັບການຄ້າດ້ານສິນຄ້າ ແລະ ການຄ້າດ້ານການບໍ ລິການຂ້າມຊາຍແດນເທົ່ານັ້ນ ພາຍໃນພາກພື້ນອາຊຽນທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດຕາມຂໍ້ຕົກລົງສັນຍາດ້ານເສດຖະກິດອາຊຽນ ແລະ ໃນຂອບເຂດປະຊາຄົມເສດຖະກິດອາຊຽນ (AEC).

ຊຸດເຄື່ອງມືນີ້ສ້າງຂຶ້ນໂດຍໂຄງການທີ່ໄດ້ຮັບການສະໜັບສະໜູນຂອງສະຫະພາບເອີຣົບຕໍ່ການເຊື່ອມໂຍງພາກພື້ນອາ ຊຽນ (ARISE) Plus ຊຶ່ງແມ່ນໂຄງການທີ່ໄດ້ຮັບທຶນຈາກສະຫະພາບເອີຣົບເພື່ອສະໜັບສະໜູນພາກພື້ນອາຊຽນເພື່ອອຳນວຍຄວາມສະດວກໃຫ້ແກ່ການຄ້າ ແລະ ການເຊື່ອມໂຍງເສດຖະກິດ. ການສ້າງຊຸດເຄື່ອງມືນີ້ ແມ່ນອີງຕາມຄຳຮ້ອງຂໍຂອງກອງປະຊຸມເຈົ້າໜ້າທີ່ອາວຸໂສດ້ານເສດຖະກິດຂອງອາຊຽນ (SEOM) ແລະ ຄະນະກຳມະການທີ່ປຶກສາດ້ານການ ອຳນວຍຄວາມສະດວກຮ່ວມກັນດ້ານການຄ້າອາຊຽນ (ATF-JCC).

ເຄື່ອງມື

1. ຕົວຢ່າງການນຳສະເໜີ PowerPoint - PowerPoint ອະທິບາຍວ່າ ASSIST ແມ່ນຫຍັງ ແລະ ໂຄງສ້າງຂອງອົງການ (ເຊັ່ນ: ການສ້າງ ຕັ້ງ, ພື້ນຖານດ້ານກົດໝາຍ, ຂອບເຂດ, ຜູ້ມີສ່ວນກ່ຽວຂ້ອງທີ່ສຳຄັນ ແລະ ລັກສະນະທີ່ສຳຄັນ), ແລະ ສະແດງໃຫ້ເຫັນເຖິງຂັ້ນຕອນຂອງ ASSIST ຜ່ານກະແສແຜນວາດແບບກະທັດຫັດງ່າຍດາຍຂອງກົນໄກ ASSIST ແລະ ກຳນົດເວລາທີ່ກ່ຽວຂ້ອງ.
2. ປຶ້ມຄູ່ມືຂອງຜູ້ນຳໃຊ້ ASSIST ສຳລັບພາກເອກະຊົນ - ຄູ່ມືດັ່ງກ່າວໃຫ້ຄຳແນະນຳ ແລະ ຂັ້ນຕອນຕ່າງໆ ສຳລັບພາກເອກະຊົນຂອງອາຊຽນ ຫຼື 'ວິສະຫະກິດຂອງອາຊຽນ' ກ່ຽວກັບກົນໄກການປຶກສາຫາລືໂດຍບໍ່ເສຍຄ່າ, ອີງໃສ່ອິນເຕີເນັດ ແລະ ບໍ່ມີຂໍ້ຜູກມັດຂອງ 'ASSIST'.
3. ການສອນເພີ່ມຂອງ ASSIST- ເພື່ອໃຫ້ຜູ້ນຳໃຊ້ສາມາດຄຸ້ນເຄີຍກັບກົນໄກຂອງ ASSIST, ໄດ້ສ້າງການສອນພິເສດທີ່ແນະນຳ 5 ຂັ້ນຕອນ ໂດຍອີງໃສ່ກ້ວນນິສຶກສາແບບສົມມຸດຕິຖານທີ່ໄດ້ສະໜອງໃຫ້ໃນຄູ່ມືຜູ້ນຳໃຊ້ ASSIST. ຈຸດປະສົງຂອງການສອນເພີ່ມແມ່ນເພື່ອຊ່ວຍໃຫ້ຜູ້ນຳໃຊ້ເຂົ້າໃຈດີຂຶ້ນກ່ຽວກັບຂັ້ນຕອນຂອງ ASSIST ແລະ ພາລະບົດບາດຂອງຫຼາກຫຼາຍຜູ້ມີສ່ວນກ່ຽວຂ້ອງ. ຍັງສາມາດດາວໂຫຼດບັນດາບົດສອນພິເສດດັ່ງກ່າວ ໄດ້ໃນເວັບໄຊທ໌ຂອງ ASSIST: http://assist.asean.org.

Photo credit: Deborah Tomasowa for US-ACTI

ການນຳສະເໜີສະໄລ້:
ວິທີແກ້ໄຂບັນຫາຂອງອາຊຽນ ສຳລັບການລົງທຶນ, ການບໍລິການ ແລະ ການຄ້າ (ASSIST)
ໂອກາດສຳລັບພາກເອກະຊົນ


Photo credit: Nathan Associates - PSDA Project, Myanmar


Photo credit: Nathan Associates - PSDA Project, Myanmar

Photo credit: Paul Kent for Nathan Associates

ASSOCIATION OF SOUTHEAST ASIAN NATIONS

ASSIST

ASEAN Solutions for Investments, Services and Trade

ວິທີແກ້ໄຂບັນຫາຂອງອາຊຽນ ສຳລັບການລົງທຶນ, ການບໍລິການ ແລະ ການຄ້າ (ASSIST) ໂອກາດສຳລັບພາກເອກະຊົນ

[ຊື່ຂອງຜູ້ນຳສະເໜີ]

[ຊື່ຂອງກະຊວງ/ອົງການ/ສະມະຄົມການຄ້າ/ບໍລິສັດ]

ງານຝຶກອົບຮົມ ASSIST ທີ່ [ຊື່ງານ] [ສະຖານທີ່ ແລະ ວັນທີ]

ASSIST ແມ່ນຫຍັງ?

- ເປັນ Portal ທີ່ອີງໃສ່ເວັບໄຊ້ແບບເປັນມິດກັບຜູ້ນຳໃຊ້ເວບໄຊທ໌ (http://assist.asean.org) ທີ່ສາມາດຊອກຫາໄດ້ງ່າຍ ແລະ ເຂົ້າເຖິງໄດ້ງ່າຍ, ຈັ່ງ່າຍ, ຄຸ້ມຄອງງ່າຍ, ເຊື່ອຖືໄດ້, ມີປະສິດຕິພາບ ແລະ ບໍ່ເສຍຄ່າ ຫຼື ແບບຄຸ້ມຄ່າ (ບໍ່ມີຄ່າທຳນຽມ ແລະ ຂັ້ນຕອນແບບກະທັດຫັດງ່າຍດາຍ, ບໍ່ແມ່ນຂັ້ນຕອນຂອງລະບົບຍຸຕິທຳ).
- ຈຸດປະສົງແມ່ນເພື່ອໃຫ້ພາກເອກະຊົນຂອງອາຊຽນມີວິທີງ່າຍໆ ເພື່ອແຈ້ງໃສ່ແກ້ໄຂບັນຫາກ່ຽວກັບດ້ານມາດຕະການທີ່ບໍ່ແມ່ນພາສີອາກອນ, ສິ່ງກີດຂວາງທີ່ບໍ່ແມ່ນພາສີອາກອນ, ຄວາມຝືດເຄືອງດ້ານການຄ້າ ຫຼື ບັນຫາການຄ້າທີ່ກ່ຽວຂ້ອງກັບປະເດັນບັນຫາຂ້າມຊາຍແດນ (ຕົວຢ່າງ: ເມື່ອວິສາຫະກິດອາຊຽນປະສົບບັນຫາການຄ້າໃນເວລາສົ່ງອອກສິນຄ້າ ຫຼື ການບໍລິການຂອງຕົນ ຫຼື ໃນເວລາລົງທຶນໃນປະເທດອື່ນຂອງອາຊຽນ).
- ບັນດາວິສາຫະກິດອາຊຽນ ອາດຈະນຳໃຊ້ ASSIST ໂດຍກົງ (ບໍລິສັດ ຫຼື ອົງການຕົວແທນຂອງບໍລິສັດດ້ວຍເຫດຜົນບໍ່ເປີດເຜີຍຕົວຕົນ (ເຊັ່ນ: ສະມາຄົມການຄ້າ, ສະພາການຄ້າ, ສະພາທຸລະກິດ, ສະຫະພັນທຸລະກິດ, ຫຼື ທະນາຍຄວາມ ຫຼື ບໍລິສັດກົດ ໝາຍຂອງຕົນທີ່ໄດ້ຮັບການແຕ່ງຕັ້ງຈາກອາຊຽນ). ຮຽກຮ້ອງໃຫ້ມີຫຼັກຖານຢັ້ງຢືນການຈົດທະບຽນ.

- ASSIST ແມ່ນພຽງແຕ່ສຳລັບປະເດັນບັນຫາການຄ້າຂ້າມຊາຍແດນຂອງອາຊຽນລະຫວ່າງບັນດາວິສາຫະກິດອາຊຽນເທົ່ານັ້ນ (ເຊັ່ນ: ບໍລິສັດ, ບໍ່ແມ່ນສ່ວນບຸກຄົນ) ທີ່ໄດ້ຈົດທະບຽນຢ່າງຖືກຕ້ອງຕາມກົດໝາຍໃນປະເທດສະມາຊິກອາຊຽນໃດໜຶ່ງ ແລະ ລັດຖະບານຂອງປະເທດໃດໜຶ່ງ ໃນ 9 ປະເທດສະມາຊິກອາຊຽນ. ບໍ່ສາມາດຍື່ນປະເດັນບັນຫາພາຍໃນປະ ເທດລ້ວນໆເຂົ້າມາ - ລະຫວ່າງລັດຖະບານ ແລະ ວິສາຫະກິດໃນປະເທດດຽວກັນຜ່ານ ASSIST ໄດ້.

ASSIST ແມ່ນຫຍັງ?

- ASSIST ເປັນກົນໄກແບບບໍ່ຜູກມັດ ແລະ ໃຫ້ຄຳປຶກສາເພື່ອຊອກຫາວິທີແກ້ໄຂໄດ້ຢ່າງເວັ່ງດ່ວນ ແລະ ມີປະສິດທິຜົນຕໍ່ບັນຫາທີ່ບັນດາວິສາຫະກິດອາຊຽນປະເຊີນໃນເວລາດຳເນີນທຸລະກິດຂ້າມຊາຍແດນທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດຂໍ້ຕົກລົງສັນຍາເສດຖະກິດອາຊຽນພາຍໃນຂອບເຂດມາດຕາ 1 (1) ຂອງອະນຸສັນຍາອາຊຽນວ່າດ້ວຍກົນໄກການແກ້ໄຂຂໍ້ຂັດແຍ່ງທີ່ໄດ້ຮັບການປັບປຸງ.
- ບໍ່ຜູກມັດ ໝາຍຄວາມວ່າ ບັນດາປະເທດສະມາຊິກອາຊຽນ ອາດຈະຕັດສິນໃຈວ່າ ບໍ່ຍອມຮັບເອົາຄຳຮ້ອງທຸກ ຫຼື ບໍ່ສະເໜີວິທີແກ້ໄຂ ເມື່ອຍື່ນຄຳຮ້ອງທຸກເຂົ້າມາໃນລະບົບ ASSIST. ເຖິງແມ່ນວ່າ ASSIST ຈະບໍ່ຜູກມັດ, ບັນດາປະເທດສະມາຊິກອາຊຽນຈະຈັດການກັບການຮ້ອງທຸກ ບົນພື້ນຖານຄວາມພະຍາຍາມທີ່ດີທີ່ສຸດ.
- ແບບປຶກສາ ໝາຍຄວາມວ່າ ບໍ່ແມ່ນລະບົບຍຸຕິທຳທີ່ເປີດເຜີຍຕໍ່ໜ້າສານລະດັບປະເທດ ຫຼື ລະດັບສາກົນ ແລະ ຈະບໍ່ໄດ້ຮັບການຄຸ້ມຄອງ ແລະ ຕັດສິນໂດຍຜູ້ພິພາກສາ, ຜູ້ຕັດສິນ, ຜູ້ໄກ່ເກ່ຍ, ຄະນະຜູ້ຊ່ຽວຊານ ຫຼື ອົງ ການພິພາກສາຂັ້ນ 3 ແບບອິດສະຫຼະ. ຈະໄດ້ເປີດເຜີຍໂດຍຜ່ານການປຶກສາຫາລືທາງອິນເຕີເນັດໂດຍກົງຜ່ານເວທີຊອບແວຂອງ ASSIST ລະຫว่ວ່ານວິສາຫະກິດອາ ຊຽນ ແລະ ບັນດາລັດຖະບານອາຊຽນ.
- ASSIST ອະນຸຍາດໃຫ້ພຽງແຕ່ຄຳຮ້ອງທຸກທີ່ກ່ຽວຂ້ອງກັບການຄ້າຂາຍສິນຄ້າ ແລະ ການຄ້າດ້ານການບໍລິການຂ້າມຊາຍແດນພາຍໃນອາຊຽນເທົ່ານັ້ນ.
- ສຳລັບ**ການຄ້າຂາຍສິນຄ້າ**, ພາລະບົດບາດສຳຄັນແມ່ນແນໃສ່ NTBs ທີ່ໄດ້ຮັບຮູ້ ແລະ NTMs ແລະ ATR ເພີ່ມເຕີມ ແບບທຳມະຊາດ (http://atr.asean.org).
- ສຳລັບ**ການຄ້າດ້ານການບໍລິການ**, ອັນນີ້ແມ່ນແນໃສ່ການແກ້ໄຂບັນຫາທີ່ກ່ຽວຂ້ອງກັບ 11 ຂະແໜງການສະໜອງການບໍລິການທີ່ກວ້າງຂວາງຊຶ່ງມີໃນບັນຊີການຈັດແບ່ງປະເພດຂະແໜງການບໍລິການພາຍໃຕ້ເອກະສານຂອງ WTO MTN/GNS/W/120.

ສະພາບການກ້ວາງຂວາງກ່ວາຂອງ ASSIST ແມ່ນຫຍັງ?

- ການຈັດຕັ້ງປະຕິບັດແຜນຜັງ **AEC Blueprint 2025** ແລະ ວາລະການປະສານງານດ້ານການຄ້າ: "82. *ເພື່ອຮັບປະກັນ ການ ຈັດຕັ້ງປະຕິບັດແຜນຜັງ AEC 2025 ຢ່າງມີປະສິດທິຜົນ, ຈະປະຕິບັດມາດຕະການຍຸດທະສາດ ດັ່ງຕໍ່ໄປນີ້:*

  iv. ບັນດາປະເທດສະມາຊິກອາຊຽນຍັງສາມາດເຂົ້າເຖິງກົນໄກອື່ນໆ ເຊັ່ນ: ວິທີແກ້ໄຂບັນຫາຂອງອາຊຽນສຳລັບການ ລົງທຶນ, ການບໍລິການ, ແລະ ການຄ້າ (ASSIST)";

- ອຳນວຍຄວາມສະດວກໃຫ້ແກ່ການຄ້າ, ການລົງທຶນ ແລະ ການເຊື່ອມໂຍງເສດຖະກິດພາກພື້ນອາຊຽນ ແລະ **ບົດບາດ ຂອງ 'ພາກເອກະຊົນ'** ໃນການຊ່ວຍລັດຖະບານ ເພື່ອກຳຈັດອຸປະສັກຕ່າງໆ;

- ***ຄວາມຕ້ອງການຂອງ'ພາກເອກະຊົນ',*** ໂດຍສະເພາະ SMEs (ການອຳນວຍຄວາມສະດວກດ້ານການຄ້າ, ຂັ້ນຕອນ ການເລັ່ງລັດ, ຄວາມສະດວກໃນການມີສ່ວນພົວພັນກັບເຈົ້າໜ້າທີ່, ການຫຼີກລ່ຽງຂໍ້ຂັດແຍ້ງ, ການແກ້ໄຂບັນຫາ ຕ່າງໆ);

- **ເພີ່ມທະວີຄວາມໂປ່ງໃສ**, ໂດຍສະເພາະ NTMs (ຕົ້ນຕໍແມ່ນສຸມໃສ່ສິນຄ້າ), ດ້ວຍການເຊື່ອມໂຍງກັບລະບົບຖານຂໍ້ ມູນດ້ານ ການຄ້າຂອງອາຊຽນ (ATR) ແລະ ລະບົບຖານຂໍ້ມູນດ້ານ ການຄ້າຂອງປະເທດ (NTRs) ທີ່AMSs ເກັບຮັກສາໄວ້ ຊຶ່ງເປັນ ບ່ອນທີ່ມີຂໍ້ມູນທີ່ກ່ຽວຂ້ອງກັບການຄ້າ.

ໃຜເປັນຜູ້ມີສ່ວນກ່ຽວຂ້ອງທີ່ສຳຄັນຂອງ ASSIST?



ໃຜເປັນຜູ້ມີສ່ວນກ່ຽວຂ້ອງທີ່ສຳຄັນຂອງ ASSIST?

- **AE: <u>ວິສາຫະກິດຢູ່ໃນອາຊຽນ</u>** ທີ່ຍົກປະເດັນບັນຫາ/ສອບຖາມ/ຮ້ອງທຸກຜ່ານ ASSIST. ໄດ້ສ້າງ ລັກສະນະໃໝ່ໃນຮູບແບບນິລະນາມຊຶ່ງອະນຸຍາດໃຫ້ອົງການຕົວແທນ: ສະມາຄົມການຄ້າ, ສະພາການຄ້າ, ສະພາທຸລະກິດ/ສະ ຫະພັນທຸລະກິດ, ທະນາຍຄວາມ ຫຼື ບໍລິສັດກົດໝາຍຍື່ນຄຳຮ້ອງທຸກແບບນິລະນາມ ຂອງ AEs. ທະນາຍຄວາມ ຫຼື ບໍລິສັດກົດໝາຍທີ່ໄດ້ຈົດທະບຽນຂອງອາຊຽນສາມາດນຳໃຊ້ກົດລະບຽບ ພິເສດນີ້.

- **CA: <u>ຜູ້ບໍລິຫານສູນກາງຂອງ ASSIST</u>**, ຮັບຜິດຊອບໃນການກວດກາຄວາມຄົບຖ້ວນສົມບູນຂອງຄຳ ຮ້ອງທຸກທີ່AE ຍື່ນເຂົ້າມາ, ເພື່ອຢັ້ງຢືນສະຖານະຂອງ AE ທີ່ຮ້ອງທຸກ ເພື່ອສົ່ງໃບຄຳຮ້ອງໄປທັງສອງຈຸດ ເຊັ່ນ: ບ່ອນຕິດຕໍ່ພົວພັນຂອງຕົ້ນທາງ (HCP) ແລະ ບ່ອນຕິດຕໍ່ພົວພັນຂອງປາຍທາງ (DCP)), ເພື່ອ ຕິດຕາມກວດກາຄວາມຄືບໜ້າ ຕາມກຳນົດເວລາທີ່ໄດ້ຕົກລົງກັນ, ແລະ ເພື່ອລາຍງານການຕອບກັບ/ ການແກ້ໄຂບັນຫາໃຫ້ແກ່ AE. CA ຍັງໄດ້ຄິດໄລ່ຄ່າທຳນຽມ ເພື່ອຮັກສາຄວາມຊື່ສັດຂອງ portal ຂອງ ASSIST.

- **<u>ກອງເລຂາອາຊຽນ</u>** ເຮັດໜ້າທີ່ເປັນ CA. ASSIST ແມ່ນຈັດການໂດຍ TFD ຂອງ ASEC ສຳລັບການຄ້າ ດ້ານສິນຄ້າ ແລະ ໂດຍ SID ສຳລັບການຄ້າດ້ານການບໍລິການ. ການລົງທຶນຂອງ ASSIST ສ່ວນຫຼາຍຈະ ແມ່ນ SID ເຊັ່ນກັນ, ແຕ່ຂຶ້ນກັບການຕັດສິນໃຈຂອງ ASEC ແລະ CCI.

ໃຜເປັນຜູ້ມີສ່ວນກ່ຽວຂ້ອງທີ່ສຳຄັນຂອງ ASSIST?

- **HCP: <u>ບ່ອນຕິດຕໍ່ພົວພັນຂອງຕົ້ນທາງ</u>** ຊຶ່ງແມ່ນອົງການຂອງປະເທດໃນປະເທດສະມາຊິກອາຊຽນຂອງ AE ທີ່ CA ໄດ້ຮັບແຈ້ງການກ່ຽວກັບການສອບຖາມ/ການຮ້ອງທຸກ.

- **DCP: <u>ບ່ອນຕິດຕໍ່ພົວພັນຂອງປາຍທາງ</u>**, ຊຶ່ງແມ່ນອົງການຂອງປະເທດໃນປະເທດສະມາຊິກອາຊຽນທີ່ໄດ້ຍົກປະເດັນດັ່ງກ່າວຂຶ້ນມາ ແລະ ມີຄວາມຮັບຜິດຊອບຕໍ່ການຍອມຮັບ (ຫຼື ການປະຕິເສດ) ແລະ ຫຼັງຈາກນັ້ນ ກໍປະສານງານກ່ຽວກັບວິທີແກ້ໄຂ/ຕອບໂຕ້ໂດຍເຈົ້າໜ້າທີ່ຜູ້ຮັບຜິດຊອບທີ່ກ່ຽວ ຂ້ອງ (RAs).

- **RA(s): <u>ເຈົ້າໜ້າທີ່ຜູ້ຮັບຜິດຊອບ</u>**ໃນປະເທດຂອງ DCP ທີ່ຈະສືບສວນປະເດັນບັນຫາ/ຄຳຮ້ອງທຸກ ແລະ ສະໜອງວິທີແກ້ໄຂ, ຖ້າເປັນໄປໄດ້.

- ຕ້ອງໄດ້ກຳນົດເອົາ HCPs/DCPs (ເຊັ່ນ: **ຈຸດປະສານງານຂອງ ASSIST)** ແລະ RAs ໃນແຕ່ລະ AMS, ໂດຍມີໂຄງສ້າງ, ມີການຝຶກອົບຮົມ ແລະ <u>ສ້າງເປັນເຄືອຂ່າຍລະດັບປະເທດ</u>, ຊຶ່ງມີ ປະ ສິດທິພາບ ແລະ ຕອບສະໜອງໄດ້. ເປັນຕົວຢ່າງຂອງການຄ້າດ້ານສິນຄ້າ ແລະ ການຄ້າດ້ານການບໍ ລິການ, ແລະ ຄວາມຄາດຫວັງຂອງ ASSIST ເພື່ອຂະຫຍາຍການລົງທຶນ.

ຄຸນລັກສະນະສຳຄັນຂອງ ASSIST ແມ່ນຫຍັງ?

- ASSIST ແນໃສ່ເປັນເຄື່ອງມືທີ່ມີປະສິດທິຜົນໃນ**ການອຳນວຍຄວາມສະດວກດ້ານການຄ້າ** ແລະ **ການ ເຊື່ອມໂຍງເສດຖະກິດພາກພື້ນ**;
- ຍັງຮັກສາລັກສະນະຂອງ**ການປຶກສາຫາລື** ແລະ **ບໍ່ຜູກມັດ**, ແຕ່ວ່າ ຕັ້ງໃຈຈະຄຸ້ມຄອງແບບມືອາຊີບ ແລະ ເຊື່ອຖືໄດ້;
- ບໍ່ມີຈຸດປະສົງທີ່ຈະກຳນົດວ່າໃຜຖືກ ແລະ ໃຜຜິດ, ແຕ່ວ່າ ຈະຊອກຫາ**ວິທີແກ້ໄຂບັນຫາຕົວຈິງດ້ານການຄ້າ;**
- ອາດຈະໄດ້ນຳໃຊ້ເພື່ອຊອກຫາ**ຄວາມໂປ່ງໃສດ້ານກົດລະບຽບ** ແລະ/ຫຼື **ການຕີຄວາມໝາຍ ໃຫ້ກະຈ່າງແຈ້ງຂຶ້ນ** (ເຊັ່ນ: ກົດລະບຽບຕົ້ນກຳເນີດ, ລະບອບພາສີອາກອນ, ການອອກໃບອະນຸຍາດ, ແລະອື່ນໆ);
- ມີຈຸດປະສົງເພື່ອໃຫ້ເປັນ**ຫນ້າເຊື່ອຖື, ໂປ່ງໃສ, ຕອບສະໜອງ** ແລະ **ມີປະສິດທິພາບ**;
- ອີງໃສ່ຮູບແບບ**ກະທັດຫັດງ່າຍດາຍ** ແລະ **ເປັນມິດກັບຜູ້ໃຊ້**, ໂດຍມີຄຳແນະນຳ ແລະ ຂັ້ນຕອນທີ່ຊັດເຈນ;
- **ການຮັກສາຄວາມລັບ** ແລະ ດຽວນີ້ຍັງເປັນແບບນິລະນາມອີກດ້ວຍ. ບັນດາບໍລິສັດບໍ່ຈຳເປັນຕ້ອງລະບຸຊື່ຂອງຕົນເອງອີກຕໍ່ໄປ ເພື່ອຍື່ນຄຳຮ້ອງທຸກ ຖ້າພວກເຂົາຢ້ານກົວຕໍ່ການແກ້ແຄ້ນ ຫຼື ການໂຄສະນາເຜີຍແຜ່ທີ່ບໍ່ດີ;

ຄຸນລັກສະນະສຳຄັນຂອງ ASSIST ແມ່ນຫຍັງ?

- ຜູ້ປະຕິບັດງານຫຼັກທັງໝົດ ຕ້ອງ**ມຸ່ງໝັ້ນ**ທີ່ຈະປະຕິບັດຕາມຂໍ້ກຳນົດດ້ານບໍລິຫານ ແລະ ດ້ານວິຊາການ ທີ່ໄດ້ຕົກລົງກັນ, ໃຫ້ທັນຕາມ**ກຳນົດເວລາທີ່ໄດ້ຮຽກຮ້ອງ** ແລະ ປະຕິບັດ**ຕາມຂັ້ນຕອນທີ່ໄດ້ກຳນົດ ໄວ້**;

- ມີພຽງແຕ່ **AEs ທີ່ໄດ້ຈົດທະບຽນຢ່າງຖືກຕ້ອງ**ເທົ່ານັ້ນ (ຫຼື ອົງການຕົວແທນຂອງພວກເຂົາ) ຊຶ່ງຍື່ນຄຳຮ້ອງທຸກຢ່າງຄົບຖ້ວນສົມບູນຈຶ່ງສາມາດໃຊ້ ASSIST. ເມື່ອຍື່ນຄຳຮ້ອງທຸກ, ຈະຮ້ອງຂໍໃຫ້ມີ**ຫຼັກຖານການ ລົງທະບຽນ**ຂອງ AE (ຫຼື ອົງການຕົວແທນຂອງຕົນ);

- CA **ເປັນເອກະລາດ**ຈາກ HCPs/DCPs ເພື່ອຮັກສາປະສິດຕິຜົນ ແລະ ຄວາມຊື່ສັດຂອງ portal

- ແຕ່ລະ AMS ຕ້ອງອຸທິດຊັບພະຍາກອນດ້ານສະຖາບັນ, ດ້ານການເງິນ ແລະ ຊັບພະຍາກອນມະນຸດທີ່ຈຳເປັນເພື່ອຮັກສາຈຸດປະສານງານຂອງຕົນ ແລະ ສ້າງເຄືອຂ່າຍຂອງ RAs ຊຶ່ງມີຄວາມສຳຄັນຕໍ່ຜົນສຳເລັດຂອງຕົນ. **ພາກເອກະຊົນຈະຕ້ອງລະມັດລະວັງ**;

- **ຊຸມຊົນນັກທຸລະກິດອາຊຽນຕ້ອງໃຊ້ປະໂຫຍດຢ່າງເຕັມສ່ວນຈາກໂອກາດທີ່ ASSIST ຍື່ນໃຫ້** ເພື່ອຊອກຫາວິທີແກ້ໄຂຕໍ່ຂໍ້ຈຳກັດຕ່າງໆທີ່ພວກເຂົາອາດຈະປະເຊີນໃນເວລາດຳເນີນການຄ້າພາຍໃນ ອາຊຽນ. ດຽວນີ້ພວກເຂົາ "ບໍ່ມີຂໍ້ແກ້ຕົວ" ອີກແລ້ວ ແລະ ສາມາດຕິດຕໍ່ພົວພັນໂດຍກົງກັບລັດຖະບານ AMS ເພື່ອຊອກຫາວິທີແກ້ໄຂບັນຫາດ້ານການຄ້າທີ່ພວກເຂົາກຳລັງປະສົບຢູ່;

ຄຸນລັກສະນະສຳຄັນຂອງ ASSIST ແມ່ນຫຍັງ?

- ດຽວນີ້ມີຮູບແບບນິລະນາມແລ້ວ ແລະ ມີລະບົບທີ່ກະທັດຫັດງ່າຍດາຍ, ໂດຍອີງໃສ່ອິນເຕີເນັດຢ່າງເຕັມສ່ວນ,ແບບບໍ່ເສຍຄ່າ, ແລະ ແບບເລັ່ງລັດ. AEs *"ບໍ່ມີຫຍັງທີ່ຈະເສຍຫາຍ"*;
- ASSIST ມີ '**ລະບົບຕິດຕາມ**' ແບບມີປະຕິສຳພັນ ແລະ ມີ "***ກະດານໄຟຈໍລະລອນ***" ຊຶ່ງຊ່ວຍໃຫ້ຜູ້ມີສ່ວນກ່ຽວຂ້ອງທີ່ສຳຄັນໄດ້ເຫັນຄວາມຄືບໜ້າຂອງແຕ່ລະຄຳຮ້ອງທຸກທາງອິນເຕີເນັດ (ສີຂຽວ: ຕາມຕາຕະລາງ; ສີເຫຼືອງ: ແຈ້ງເຕືອນ; ສີແດງ: ລັກຊ້ຳ).
- ເວບໄຊທ໌ ASSIST ປະຈຸບັນມີ**ທັງໝົດ 7 ພາສາອາຊຽນ**, ແຕ່ວ່າ ອາດຈະເກັບຮັກສາເອກະສານຂອງກໍລະນີ ເປັນພາສາອັງກິດເທົ່ານັ້ນ;
- ດຽວນີ້ມີການສອນເພີ່ມ**ແບບເທື່ອລະກ້າວ** ເພື່ອໃຫ້ຜູ້ໃຊ້ເຂົ້າໃຈດີຂຶ້ນ ກ່ຽວກັບຂັ້ນຕອນຂອງ ASSIST ໃນເວັບ ໄຊທ໌ຂອງ ASSIST ແລະ ມີທຸກພາສາຂອງອາຊຽນແລ້ວ;
- ມີ**ໜ້າສຳລັບຄຳຖາມທີ່ຖາມເລື້ອຍໆ (FAQs)** ຢູ່ໃນເວບໄຊທ໌;
- ຍັງມີ**ປຶ້ມຄູ່ມືສຳລັບຜູ້ໃຊ້** ສຳລັບ CA/HCPs/DCPs ຕາມຄຳຮ້ອງຂໍຂອງຜູ້ປະສານງານລະດັບປະເທດ ຫຼື ຈຸດປະ ສານງານສຳລັບ ASSIST ໃນ AMSs ທີ່ກ່ຽວຂ້ອງ. ປະຈຸບັນນີ້ກໍຍັງມີເປັນ**ທຸກພາສາຂອງອາຊຽນ**ອີກດ້ວຍ;
- ໃນອະນາຄົດ ຈະມີພາກ '***ເວທີສາທາລະນະ*** ໃນ portal ຂອງ ASSIST ເພື່ອສະໜອງຕົວເລກຂໍ້ມູນ/ສະຖິຕິກ່ຽວກັບຄຳຮ້ອງທຸກ, ຄຳແນະນຳຕໍ່ການດຳເນີນງານ, ບົດເລື່ອງຜົນສຳເລັດຕ່າງໆຂອງກໍລະນີທີ່ໄດ້ຮັບການແກ້ໄຂ, ຄຳເຫັນຕຳນິຕິຊົມຈາກຜູ້ໃຊ້/AEs, ແລະ ຄຳແນະນຳກ່ຽວກັບການນຳໃຊ້ ASSIST. ຈະບໍ່ລົງ ຂໍ້ມູນທີ່ເປັນຄວາມລັບໃນ*ເວທີສົນທະນາ*.

ວິທີການເຮັດວຽກຂອງ ASSIST ມີຄືແນວໃດ?

- ຜູ້ສະໝັກຈຳເປັນຕ້ອງລົງທະບຽນ ແລະ ໄດ້ຮັບເລກລະຫັດທີ່ມີການປົກປ້ອງ ເພື່ອເຂົ້າສູ່ລະບົບ;
- ໄດ້ສ້າງແບບຟອມຄຳຮ້ອງສະໝັກແບບອອນໄລນ໌ທີ່ໄດ້ມາດຕະຖານເພື່ອນຳໃຊ້;



ວິທີການເຮັດວຽກຂອງ ASSIST ມີຄືແນວໃດ?

- ຈະມີ**ລະຫັດເພື່ອຕິດຕາມ**ມອບໃຫ້ ຊຶ່ງແມ່ນຄອມພິວເຕີ້ສ້າງຂຶ້ນ, ໂດຍມີ CA/HCP ແຈ້ງໃຫ້ຊາບ;
- CA ຈະປະເມີນ (**ໃຊ້ເວລາສູງສຸດ 10 ມື້ເຮັດວຽກ**) *"ສະຖານະ - standing"* ແລະ ຄວາມຄົບຖ້ວນສົມບູນ ຂອງຄຳຮ້ອງທຸກ. CA ອາດຈະຮ້ອງຂໍໃຫ້ຜູ້ຮ້ອງທຸກສະໜອງຂໍ້ມູນ ຫຼື ໃຫ້ຄວາມກະຈ່າງແຈ້ງເພີ່ມເຕີມອີກ;
- CA ຈະແຈ້ງໃຫ້ AE ຮັບຊາບ ຫຼື, ສຳລັບຄຳຮ້ອງທຸກແບບນິລະນາມ ແມ່ນແຈ້ງໃຫ້ອົງການຕົວແທນໃນ ອາຊຽນ, ຫຼື ທະນາຍຄວາມ ຫຼື ບໍລິສັດກົດໝາຍທີ່ໄດ້ຂຶ້ນທະບຽນຂອງອາຊຽນຮັບຊາບ, ແລະ ຍື່ນຄຳ ຮ້ອງທຸກຕໍ່ DCP/ HCP, ຖ້າວ່າມີ *'ສະຖານະ- standing* ';
- ໄດ້ກຳນົດເວລາສູງສຸດ (**10 ມື້ເຮັດວຽກ**) ໃຫ້ DCP ຍອມຮັບ/ປະຕິເສດຄຳຮ້ອງທຸກ;
- **ໄດ້ກະຕຸກຊຸກຍູ້ໃຫ້** ການປະຕິເສດຕໍ່ຄຳຮ້ອງທຸກ **ຕ້ອງເປັນລາຍລັກອັກສອນພ້ອມດ້ວຍ ເຫດຜົນ**;
- ຖ້າຮັບເອົາແລ້ວ, DCP ຈະປະກອບມີ RA ແລະ ຈະນຳໃຊ້ກຳນົດເວລາໃນຂອບເຂດຈຳກັດ (**30 ຫາ 50 ມື້ ເຮັດວຽກ**);
- RAs/DCP ອາດຈະຮ້ອງຂໍໃຫ້ຕໍ່ເວລາເພີ່ມເຕີມໄດ້ພຽງຄັ້ງດຽວ (**ສູງເຖິງ 20 ມື້ເຮັດວຽກ**) ຖ້າມີບັນຫາ ແບບສັບສົນ;
- RAs/DCP **ຕ້ອງໃຫ້**ຄຳຕອບ/ການແກ້ໄຂ/ວິທີການແກ້ໄຂໃນຮູບແບບເປັນລາຍລັກອັກສອນ;
- CA ຈະຕິດຕາມ. ຖ້າວ່າ DCP/RAs **ບໍ່ຕອບສະໜອງ**, ປະເດັນບັນຫາຈະຖືກສົ່ງໄປຫາ AMSs;

ວິທີການເຮັດວຽກຂອງ ASSIST ມີຄືແນວໃດ?

- DCP ຈະສະໜອງການແກ້ໄຂຕໍ່ CA ຫຼື ໃຫ້ຄຳແນະນຳວ່າ ເປັນຫຍັງຈຶ່ງບໍ່ສາມາດແກ້ໄຂກໍລະນີ ດັ່ງກ່າວໄດ້;

- CA ຈະວາງທະບຽນວິທີແກ້ໄຂໃນ ASSIST ແລະ ສົ່ງໃຫ້ AE ຫຼື, ສຳລັບຄຳຮ້ອງທຸກແບບນິລະນາມແມ່ນອົງການຕົວແທນຢູ່ໃນອາຊຽນ ຫຼື ທະນາຍຄວາມ ຫຼື ບໍລິສັດກົດໝາຍທີ່ຂຶ້ນທະບຽນກັບອາຊຽນ. CA ຍັງຈະເຮັດສຳເນົາສົ່ງເຖິງ HCP ອີກດ້ວຍ;

- AE (ຫຼື ອົງການຕົວແທນ, ທະນາຍຄວາມ ຫຼື ບໍລິສັດກົດໝາຍ) ຈະແຈ້ງໃຫ້ CA ຮັບຊາບ ຖ້າພິຈາລະນາແລ້ວເຫັນວ່າໄດ້**ຮັບການແກ້ໄຂຢ່າງໜ້າພໍໃຈ**ຕໍ່ປະເດັນບັນຫາທີ່ (ຕົວຢ່າງ: ແກ້ໄຂ/ຕັດສິນ); ແລະ

- ຖ້າບໍ່ພໍໃຈ, AE (ຫຼື ອົງການຕົວແທນ ຫຼື ທະນາຍຄວາມ ຫຼື ບໍລິສັດກົດໝາຍ) ອາດຈະໃຫ້ຄຳແນະນຳຕໍ່ CA ກ່ຽວກັບການປະຕິບັດທີ່ຕົນຕ້ອງການ.

ຕາຕະລາງກະແສຂອງກົນໄກ ASSIST ແລະ ກຳນົດເວລາທີ່ກ່ຽວຂ້ອງ



ຕາຕະລາງກະເດສຂອງກົນໄກ ASSIST ແລະ ກຳນົດເວລາທີ່ກ່ຽວຂ້ອງ



ຕາຕະລາງກະແສຂອງກົນໄກ ASSIST ແລະ ກຳນົດເວລາທີ່ກ່ຽວຂ້ອງ

ການຈົດທະບຽນວິທີແກ້ໄຂຂອງ CA ແລະ ຈົດໝາຍວຽນເພື່ອແຈ້ງການຂອງ CA ສົ່ງໃຫ້ AE ຫຼື ອົງການຕົວແທນຢູ່ໃນອາຊຽນ

ແຈ້ງການຂອງ AE ຫຼື ອົງການຕົວແທນຢູ່ໃນອາຊຽນຕໍ່ CA ວ່າໄດ້ພິຈາລະນາແກ້ໄຂບັນຫາ/ຕັດສິນບັນຫາແລ້ວ ຫຼືບໍ່

ກອບເວລາໃນການແກ້ໄຂບັນຫາຂ້າມຊາຍແດນທີ່ຍື່ນເຂົ້າມາ ASSIST ຕ້ອງບໍ່ເກີນ 60 ມື້ເຮັດວຽກ ຫຼື 3 ເດືອນ ປະຕິທິນ

ຕົວເລກຂໍ້ມູນດ້ານສະຖິຕິຂອງການນຳໃຊ້ ASSIST

- ມີ 4 ກໍລະນີທີ່ໄດ້ຍື່ນເຂົ້າມາໃນ 29 ເດືອນທຳອິດຂອງການດຳເນີນງານ (8/2016 ເຖິງ 12/2018) ແລະ 7 ກໍລະນີທີ່ໄດ້ຍື່ນເຂົ້າມາ ໃນ 15 ເດືອນທີ່ຜ່ານມາ (1/2019 ເຖິງ 3/2020).

- ອັນນີ້ສອດຄ່ອງກັບ ການນຳໃຊ້ທີ່ເພີ່ມຂຶ້ນ 175% ນັບຕັ້ງແຕ່ມີການນຳໃຊ້ແບບບໍ່ລະບຸຊື່. ໃນຄວາມເປັນຈິງແລ້ວ, 5 ໃນ 7 ກໍລະນີ ທີ່ໄດ້ຍື່ນເຂົ້າມາ ນັບຕັ້ງແຕ່ເດືອນ 1/2019 ເປັນຕົ້ນມາ ແມ່ນສະພາທຸລະກິດ ຫຼື ສະຫະພັນທຸລະກິດເປັນຜູ້ຍື່ນເຂົ້າມາ.

- ບັນຫາຂອງທ່ານຈະເປັນບັນຫາຕໍ່ໄປບໍ?

ຂໍຂອບໃຈ

ຈົ່ງເຂົ້າເບິ່ງ link ນີ້: ***ASSIST - An Opportunity for the Private Sector***
ເພື່ອດາວໂຫຼດ PowerPoint (ຮູບແບບ ppt) ຂອງສະໄລ້ນຳສະເໜີ.

ຮູບພາບໂດຍ: Nathan Associates - PSDA Project, Myanmar

ຄູ່ມືຜູ້ໃຊ້ ASSIST
ສຳລັບພາກເອກະຊົນ

ຮູບພາບໂດຍ: Nathan Associates - PSDA Project, Myanmar

ຮູບພາບໂດຍ: Reicelene Joy N. Ignacio for BusinessWorld

ຮູບພາບໂດຍ: Nathália Rosa on Unsplash

ຄູ່ມືຜູ້ໃຊ້ ASSIST ສຳລັບພາກເອກະຊົນ

ກ່ຽວກັບປຶ້ມຄູ່ມືນີ້

ປຶ້ມຄູ່ມືນີ້ ເປັນຄຳແນະນຳ ແລະ ຂັ້ນຕອນຕ່າງໆສຳລັບຜູ້ມີສ່ວນກ່ຽວຂ້ອງທີ່ສຳຄັນຂອງກົນໄກການໃຫ້ຄຳປຶກສາແບບບໍ່ເສຍຄ່າ, ແບບອອນໄລນ໌ ແລະ ແບບບໍ່ມີຂໍ້ຜູກມັດ - ເປັນວິທີແກ້ໄຂບັນຫາຂອງອາຊຽນສຳລັບການລົງທຶນ, ການບໍລິ ການ ແລະ ການຄ້າ ຫຼື 'ASSIST' - ໄດ້ຮັບການສ້າງຕັ້ງຂຶ້ນໂດຍມີຈຸດປະສົງເພື່ອແກ້ໄຂບັນຫາໃນການດຳເນີນງານທີ່ວິສາຫະກິດຂອງອາຊຽນປະສົບພົບພໍ້ໃນປະເດັນບັນຫາຂ້າມຊາຍແດນທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດຕາມຂໍ້ຕົກລົງສັນຍາເສດຖະກິດອາຊຽນ ແລະ ພາຍໃນຂອບເຂດຂອງປະຊາຄົມເສດຖະກິດອາຊຽນ (AEC).

ພາກທີ 1 ຂອງປຶ້ມຄູ່ມືນີ້ ປະກອບດ້ວຍພາບລວມຂອງ ASSIST, ໂດຍກ່າວເຖິງຂອບເຂດ, ຜູ້ມີສ່ວນກ່ຽວຂ້ອງທີ່ສຳ ຄັນ, ຊ່ອງທາງການສື່ສານ ແລະອື່ນໆ, ໃນຂະນະທີ່ພາກທີ 2 ສືບຕໍ່ອະທິບາຍຂັ້ນຕອນການຈັດການກັບຄຳຮ້ອງທຸກ ດ້ວຍການນຳໃຊ້ແບບຟອມຄຳຮ້ອງທຸກທາງອອນໄລນ໌, ສຳລັບຄຳຮ້ອງທຸກ ທັງແບບລະບຸຊື່ ແລະ ແບບບໍ່ລະບຸຊື່ ຈົນເຖິງເວລາທີ່ ASSISTສະໜອງວິທີແກ້ໄຂໃຫ້. ພາກທີ 2 ຍັງນຳສະເໜີແຜນວາດກະແສຂອງຂັ້ນຕອນແບບກະທັດຫັດງ່າຍດາຍຂອງ ASSIST.

ຕາຕະລາງເອກະສານອ້າງອີງ, ຕາຕະລາງກະແສຂອງກົນໄກ ASSIST, ຄຳຖາມທີ່ມັກຖາມເລື້ອຍໆ (FAQs), ແລະ ການສຶກສາກໍລະນີແບບສົມມຸດຕິຖານ ເພື່ອໃຫ້ມີຄວາມເຂົ້າໃຈດີຂຶ້ນກ່ຽວກັບຂັ້ນຕອນຂອງ ASSIST ແມ່ນມີໃນເອ ກະສານຊ້ອນທ້າຍໃນຕອນທ້າຍຂອງປຶ້ມຄູ່ມືນີ້.

ສາມາດເຂົ້າເຖິງ ASSIST ໄດ້ໂດຍກົງໃນເວບໄຊທ໌ຂອງ ASSIST ເອງໄດ້ທີ່: (http://assist.asean.org) ຫຼື ໂດຍຜ່ານເວບໄຊທ໌ຖານຂໍ້ມູນດ້ານການຄ້າແບບອອນໄລຂອງນ໌ອາຊຽນ (http://atr.asean.org).

ສາລະບານ

ກ່ຽວກັບຄູ່ມືສະບັບນີ້ 17
ພາກ 1:
ພາບລວມທົ່ວໄປຂອງ ASSIST 21
ASSIST ແມ່ນຫຍັງ? 21
A. ເປັນຫຍັງຈຶ່ງສ້າງຕັ້ງ ASSIST ແລະ ສ້າງຕັ້ງດ້ວຍວິທີໃດ? 22
B. ຂອບເຂດຂອງ ASSIST ແມ່ນຫຍັງ? 23
- ປະເດັນບັນຫາຕ່າງໆທີ່ ASSIST ກວມເອົາ
- ປະເດັນບັນຫາຕ່າງໆທີ່ ASSIST ບໍ່ກວມເອົາ

C. ຄຸນລັກສະນະສຳຄັນຂອງ ASSIST ແມ່ນຫຍັງ? 23
D. ແມ່ນໃຜເປັນຜູ້ມີສ່ວນກ່ຽວຂ້ອງທີ່ສຳຄັນພາຍໃນ ASSIST? 24
1. ວິສາຫະກິດອາຊຽນ 24
2. ຜູ້ດູແລລະບົບກາງ 25
3. ບ່ອນຕິດຕໍ່ພົວພັນຕົ້ນທາງ 25
4. ບ່ອນຕິດຕໍ່ພົວພັນປາຍທາງ 25
5. ເຈົ້າໜ້າທີ່ຜູ້ຮັບຜິດຊອບລະດັບປະເທດ 25
E. ສາມາດຍື່ນຄຳຮ້ອງທຸກໄດ້ຄືແນວໃດ ? 26
1. ຄຳຮ້ອງທຸກແບບລະບຸຊື່ 26
2. ຄຳຮ້ອງທຸກແບບບໍ່ລະບຸຊື່ 26
F. ຊ່ອງທາງການສື່ສານຂອງ ASSIST ດຳເນີນການຄືແນວໃດ ? 27
G. ເວທີສາທາລະນະໃນເວບໄຊທ์ຂອງ ASSIST 29
ພາກ 2:
ຂັ້ນຕອນການຈັດການກັບຄຳຮ້ອງທຸກ 31
ວິທີການຍື່ນຄຳຮ້ອງທຸກເຂົ້າມາ ມີຄືແນວໃດ? 31
A. ການນຳໃຊ້ແບບຟອມຄຳຮ້ອງຮຽນທຸກແບບອອນໄລນ์ 31
1. ສຳລັບວິສາຫະກິດຂອງອາຊຽນ 31
2. ສຳລັບສະມາຄົມການຄ້າຢູ່ໃນອາຊຽນ ແລະ ອົງການຕົວແທນຂອງສະມາຄົມອື່ນໆຢູ່ໃນອາຊຽນ 31
3. ສຳລັບທະນາຍຄວາມ ຫຼື ບໍລິສັດກົດໝາຍຈົດທະບຽນໃນອາຊຽນ 31
B. ຂັ້ນຕອນຕ່າງໆໃນການຈັດການກັບຄຳຮ້ອງທຸກ 32
1. ສຳລັບວິສາຫະກິດອາຊຽນ ຫຼື ອົງການຕົວແທນຢູ່ໃນອາຊຽນ 32
2. ສຳລັບທະນາຍຄວາມ ຫຼື ບໍລິສັດກົດໝາຍຈົດທະບຽນໃນອາຊຽນ 37

C. ກະແສຂອງຂັ້ນຕອນການຈັດການກັບຄຳຮ້ອງທຸກ 39

D. ກຳນົດເວລາການຈັດການກັບຄຳຮ້ອງທຸກ 41

1. ການຕໍ່ເວລາ 41
2. ການຕິດຕາມການດຳເນີນການທີ່ການກຳນົດເວລາ 41

E. ຜູ້ຮ້ອງທຸກອາດຈະຕິດຕາມກວດກາຄວາມຄືບໜ້າຂອງຄຳຮ້ອງທຸກ 43

ເອກະສານຊ້ອນທ້າຍ

ເອກະສານຊ້ອນທ້າຍ 1.
ຕາຕະລາງເອກະສານອ້າງອີງສຳລັບຄຳອະທິບາຍຄຳຮ້ອງທຸກ 45

1.1. ບັນຊີລາຍການສິນຄ້າປະເພດຍ່ອຍ..... 45

1.2. ບັນຊີລາຍຊື່ບັນດາຂະແໜງ ແລະ ຂະແໜງການຍ່ອຍຂອງການບໍລິການ 47

ເອກະສານຊ້ອນທ້າຍ 2.
ແຜນຜັງກະແສຂອງກົນໄກ ASSIST ແລະ ໄລຍະເວລາທີ່ກ່ຽວຂ້ອງ 53

2.1. ສຳລັບຄຳຮ້ອງທຸກທີ່ວິສາຫະກິດຂອງອາຊຽນ ຫຼື ອົງການຕົວແທນຢູ່ໃນອາຊຽນຍື່ນເຂົ້າມາ 53

2.2. ສຳລັບຄຳຮ້ອງທຸກທີ່ທະນາຍຄວາມ ຫຼື ບໍລິສັດກົດໝາຍທີ່ໄດ້ລົງທະບຽນຢູ່ໃນອາຊຽນຍື່ນເຂົ້າມາ 54

ເອກະສານຊ້ອນທ້າຍ 3.
ບັນດາຄຳຖາມທີ່ຖາມເລື້ອຍໆ (FAQs) 55

ເອກະສານຊ້ອນທ້າຍ 4.
ກໍລະນີສຶກສາແບບສົມມຸດຕິຖານ 63

ຕາຕະລາງຂອງຮູບຕ່າງໆ

ຮູບ 1. ການສື່ສານ/ໂຄງສ້າງແບບສ້າງສັນຂອງ ASSIST 28

ຮູບ 2. ຄຳຮ້ອງທຸກທີ່ວິສາຫະກິດຂອງອາຊຽນ ຫຼື ອົງການຕົວແທນຢູ່ໃນອາຊຽນຍື່ນເຂົ້າມາ 40

ຮູບ 3. ຄຳຮ້ອງທຸກທີ່ທະນາຍຄວາມ ຫຼື ບໍລິສັດກົດໝາຍທີ່ໄດ້ລົງທະບຽນຢູ່ໃນອາຊຽນຍື່ນເຂົ້າມາ 40

ພາກ 1 :
ພາບລວມຂອງ ASSIST

ພາກນີ້ຂອງຂອງປື້ມຄູ່ມືນີ້ຈະສະເໜີພາບລວມຂອງສິ່ງທີ່ເປັນ ASSIST ແລະໂຄງສ້າງຂອງມັນ (ເຊັ່ນວ່າ, ການສ້າງຕັ້ງ, ຂອບເຂດ, ຄຸນລັກສະນະທີ່ສຳຄັນ, ຜູ້ດຳເນີນການ ຫຼື ຜູ້ປະຕິບັດງານທີ່ສຳຄັນ, ປະເພດຄຳຮ້ອງທຸກ, ຊ່ອງທາງການສື່ສານ ແລະ ເວທີປຶກສາ ຫາລືສາທາ ລະນະ).

ASSIST ແມ່ນຫຍັງ?

- ASSIST ຖືກອອກແບບມາ ເພື່ອເປັນເຄື່ອງມືທີ່ສຳຄັນໃນການອະນຸຍາດ, ອຳນວຍຄວາມສະດວກແລະ ຊຸກຍູ້ໃຫ້ຜູ້ປະກອບການທຸລະກິດອາຊຽນ ແລະ ພາກເອກະຊົນໄດ້ພົວພັນໂດຍກົງກັບລັດຖະ ບານຂອງແຕ່ລະປະເທດສະມາຊິກອາຊຽນ ແລະ ແກ້ໄຂບັນຫາການຄ້າໃນເບື້ອງຕົ້ນ.

- ASSIST ສາມາດໃຊ້ໄດ້ພຽງແຕ່ສຳລັບບັນຫາການຄ້າຂ້າມເຂດແດນພາຍໃນອາຊຽນເທົ່ານັ້ນລະຫວ່າງວິສາຫະກິດອາຊຽນ, ທີ່ໄດ້ຈົດທະ ບຽນຢ່າງຖືກ ຕ້ອງຕາມກົດໝາຍໃນປະເທດສະມາຊິກອາຊຽນໃດໜຶ່ງ ແລະ ລັດຖະບານຂອງປະເທດໃດໜຶ່ງໃນ 9 ປະເທດສະມາຊິກອາ ຊຽນອື່ນໆ. ດັ່ງນັ້ນ, ASSIST ບໍ່ສາມາດຖືກນຳໃຊ້ເພື່ອຍື່ນຄຳຮ້ອງທຸກຕໍ່ລັດຖະບານຂອງປະເທດທີ່ຢູ່ນອກຂອບເຂດອາຊຽນ. ASSIST ຍັງອາດຈະຖືກນຳມາໃຊ້ເພື່ອແກ້ໄຂບັນຫາບໍລິສັດອື່ນໆທີ່ມີບັນຫາ.

- ASSIST ແມ່ນລະບົບໂຄງສ້າງທີ່ດຳເນີນການໃນອິນເຕີເນັດ ແລະ ເປັນມິດກັບທຸລະກິດເພື່ອຮັບ, ປະມວນຜົນ ແລະ ຕອບຕໍ່ຄຳຮ້ອງທຸກຂອງວິສາຫະກິດອາຊຽນ, ຫນ່ວຍງານຕົວແທນ ຫຼື ທະນາຍຄວາມ ຫຼື ບໍລິສັດທີ່ຖືກແຕ່ງຕັ້ງສົ່ງມາ.

- ການຮ້ອງທຸກພາຍໃນຂອບເຂດຂອງ ASSIST ແມ່ນຈຳກັດ ເພື່ອໃຊ້ສະເພາະກັບບັນຫາການດຳເນີນງານທີ່ບັນດາວິສາຫະກິດອາຊຽນພົບເຫັນກ່ຽວກັບບັນຫາການຄ້າຂ້າມເຂດແດນທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດສັນຍາເສດຖະກິດອາຊຽນ ແລະ ໃນຂອບເຂດປະຊາຄົມເສດຖະກິດອາຊຽນ (AEC).

- ASSIST ແມ່ນວິທີການສື່ສານທີ່ບໍ່ມີການຜູກມັດ ແລະ ໃຫ້ຄຳປຶກສາຊຶ່ງຊອກຫາວິທີແກ້ໄຂທີ່ວັ່ງດ່ວນແລະມີປະສິດທິຜົນສຳລັບບັນດາວິສາຫະກິດອາຊຽນທີ່ປະສົບກັບບັນຫາການຄ້າໃນເວລາດຳເນີນທຸລະກິດຂ້າມເຂດແດນພາຍໃນພາກພື້ນອາຊຽນ. ການທີ່ວ່າ 'ບໍ່ມີຂໍ້ຜູກມັດ' ໝາຍເຖິງບັນດາປະເທດສະມາຊິກອາຊຽນອາດຈະຕັດສິນໃຈທີ່ຈະບໍ່ຍອມຮັບຄຳຮ້ອງທຸກຫຼືບໍ່ສະເໜີການແກ້ໄຂເມື່ອຄຳຮ້ອງທຸກໄດ້ຍື່ນເຂົ້າໃນລະບົບ ASSIST. ເຖິງແມ່ນວ່າ ASSIST ບໍ່ມີຂໍ້ຜູກມັດ, ບັນດາປະເທດສະມາຊິກອາຊຽນຈະຈັດການກັບການຮ້ອງທຸກບົນພື້ນຖານຂອງຄວາມພະຍາຍາມທີ່ດີທີ່ສຸດ.

- ASSIST ແມ່ນເປັນທີ່ໃຫ້ຄຳປຶກສາຫາລືຕາມລັກສະນະຂອງມັນ, ໝາຍເຖິງ ບໍ່ແມ່ນລະບົບຕຸລາການທີ່ຈະເປີດເຜີຍຕໍ່ຫນ້າສານປະຊາຊົນລະດັບຊາດ ຫຼື ລະດັບສາກົນ ແລະ ບໍ່ໄດ້ຮັບການຄຸ້ມຄອງ ແລະ ຕັດສິນໂດຍຜູ້ພິພາກສາອິດສະຫຼະ, ຜູ້ຕັດສິນ, ຜູ້ໄກ່ເກ່ຍ, ຄະນະຜູ້ຊ່ຽວ ຊານ ຫຼື ອົງການພິພາກສາທີສາມ. ມັນເປັນທີ່ເປີດເຜີຍໂດຍການໃຫ້ຄຳປຶກສາຫາລືທາງອິນເຕີເນັດໂດຍກົງຜ່ານລະບົບຊອບແວຂອງASSIST ລະຫວ່າງວິສາຫະກິດອາຊຽນ (ບໍລິສັດຫຼື ຫນ່ວຍງານຕົວແທນຂອງຕົນ, ສະມາຄົມການຄ້າ, ສະພາການຄ້າ, ສະພາທຸລະກິດ ຫຼືສະຫະພັນທຸລະກິດ, ຫຼື ທະນາຍຄວາມ ຫຼື ບໍລິສັດກົດໝາຍທີ່ຖືກແຕ່ງຕັ້ງ) ແລະລັດຖະບານອາຊຽນ.

- ASSIST ແມ່ນການບໍລິການທີ່ບໍ່ເສຍຄ່າ, ດຳເນີນງານໂດຍຜ່ານສະຖານທີ່ອອນລາຍທີ່ບໍລິຫານໂດຍກອງເລຂາອາຊຽນ. ບໍ່ມີຄ່າໃຊ້ຈ່າຍໃດໆ, ບໍ່ມີຄ່າທຳນຽມ ແລະ ບໍ່ມີຄ່າລົງທະບຽນ ຫຼື ຍື່ນສະເໜີຄ່າໃຊ້ຈ່າຍໃນການນຳໃຊ້ ASSIST. ເວັບໄຊທ໌ ASSIST ແມ່ນອີງໃສ່ຮູບແບບກະທັດຫັດງ່າຍດາຍ ແລະ ເປັນມິດກັບຜູ້ໃຊ້, ມີຄຸນລັກສະນະໃນລະດັບສູງທີ່ສາມາດສົ່ງການແຈ້ງເຕືອນ ແລະ ການສື່ສານໂດຍຄອມ ພິວເຕີແບບອັດຕະໂນມັດ (ເຊັ່ນ: ການສົ່ງອີເມວ), ໂດຍອີງໃສ່ຂັ້ນຕອນຂອງການດຳເນີນການ ແລະ

ໄລຍະເວລາທີ່ໄດ້ກຳນົດໄວ້. ອັນນີ້ແມ່ນແນໃສ່ເພື່ອເຮັດໃຫ້ຂະບວນການດຳເນີນໄປຢ່າງສະດວກສະບາຍ, ອ່ອງໄວ, ງ່າຍຕໍ່ການບໍລິຫານຈັດການ ແລະ ການນຳໃຊ້, ແລະ ມີປະສິດຕິຜົນ.

- ການຮັກສາຄວາມລັບແມ່ນມີຄວາມສຳຄັນທີ່ສຸດ ແລະ ມີພຽງແຕ່ຜູ້ຮ້ອງທຸກ, ບັນດາປະເທດສະມາຊິກອາຊຽນທີ່ກ່ຽວຂ້ອງໂດຍກົງ, ແລະ ເລຂາທິການອາ ຊຽນເທົ່ານັ້ນຈະມີສິດເຂົ້າເຖິງຄຳຮ້ອງທຸກທີ່ແທ້ຈິງ ແລະ ວິທີແກ້ໄຂທີ່ໄດ້ສະເໜີ (ຈົ່ງອ້າງອີງເຖິງຜູ້ທີ່ໄດ້ໃຫ້ການປະຕິເສດ ຄວາມຮັບຜິດຊອບໃນປະເດັນຕ່າງໆທີ່ໄດ້ກຳນົດໄວ້, ຊຶ່ງສາມາດເຂົ້າເຖິງໄດ້ຕາມ link ທີ່ຢູ່ໃນ footer ຂອງໜ້າເວັບທັງໝົດຂອງ ASSIST, ໃນ ເລື່ອງນີ້).

- ມູນໃດໆທີ່ຈະຖືກແລກປ່ຽນຫຼືໂອນຍ້າຍຜ່ານ ASSISTນັ້ນແມ່ນ ບໍ່ສາມາດເອົາອອກໃຊ້ຕໍ່ມາໃນສານກົດໝາຍ ເພື່ອຈຸດປະສົງໃນການ ດຳເນີນຄະດີພາຍໃນປະເທດ ຫຼື ການແກ້ໄຂຂໍ້ຂັດແຍ່ງລະຫວ່າງປະເທດ (ເຊັ່ນ: ອົງການການຄ້າໂລກ (WTO) ແລະ/ຫຼື ອາຊຽນ). ການ ປະຕິເສດຂອງ ASSIST ແມ່ນມີຄວາມຈະແຈ້ງ. ບໍ່ມີຂໍ້ມູນ ຫຼື ຄຳຖະແຫຼງໃດໆຂອງຜູ້ຮ້ອງທຸກ ຫຼື ຈາກປະເທດສະມາຊິກອາຊຽນທີ່ຢູ່ໃນ ຂັ້ນຕອນດຳເນີນການຂອງ ASSIST ສາມາດນຳໃຊ້ໃນການດຳເນີນຄະດີໃນລະດັບປະເທດ ຫຼື ລະດັບສາກົນໄດ້ເລີຍ. ແຕ່ເຖິງຢ່າງໃດກໍ່ ຕາມ, ໃນຂະນະທີ່ບໍ່ມີຜົນບັງຄັບໃຊ້ໃນສານກົດໝາຍ, ວິທີແກ້ໄຂທີ່ສະເໜີ ອາດຈະມີມູນຄ່າສະເພາະໃນສະພາບການທີ່ຄ້າຍຄືກັນຂອງ ການຮ້ອງທຸກດັ່ງກ່າວ ກ່ອນທີ່ເຈົ້າໜ້າທີ່ທີ່ໃຫ້ບໍລິການ (ເຊັ່ນ: ເຈົ້າໜ້າທີ່ພາສີ, ເຈົ້າໜ້າທີ່ການຄ້າ, ເຈົ້າໜ້າທີ່ອອກໃບອະນຸຍາດນຳເຂົ້າ , ຫນ່ວຍງານປະເມີນຄວາມສອດຄ່ອງ, ແລະອື່ນໆ.) ຂອງປະເທດສະມາຊິກອາຊຽນທີ່ໄດ້ສະເໜີວິທີແກ້ໄຂ.

A. ເປັນຫຍັງ ແລະ ASSIST ສ້າງຕັ້ງຂຶ້ນມາໄດ້ຄືແນວໃດ ?

ຕາມການມອບໝາຍຂອງບັນດາຜູ້ນຳອາຊຽນ, ໄດ້ສ້າງຕັ້ງກົນໄກ ASSIST ຂຶ້ນ ເພື່ອຈັດຕັ້ງປະຕິບັດການໃຫ້ຄຳປຶກສາອາຊຽນ ເພື່ອແກ້ໄຂບັນຫາການຄ້າ ແລະ ການລົງທຶນ (ACT) ທີ່ໄດ້ກຳນົດໄວ້ພາຍໃຕ້ສັນຍາການຄ້າອາຊຽນ (ATIGA) ແລະ ໄດ້ສ້າງຂຶ້ນ ແບບກະທັດຫັດງ່າຍດາຍດ້ວຍການຖືເອົາລະບົບ SOLVIT ຂອງສະຫະພາບເອີຣົບເປັນຕົວຢ່າງ.

ແມ່ນກົນໄກການປຶກສາຫາລືທີ່ໄດ້ທົດລອງໃຊ້ໃນປີ 2000, ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 88 ຂອງສັນຍາການຄ້າອາຊຽນ ແລະ ມີຢູ່ ໃນຖະ ແຫຼງການ ASEAN Concord II (Bali Concord II).

ເຈົ້າໜ້າທີ່ເສດຖະກິດອາວຸໂສ ASEAN ໄດ້ຮັບຮອງເອົາຂໍ້ສະເໜີໂດຍ ARISE (ການສະໜັບສະໜູນ ການເຊື່ອມໂยงພາກພື້ນ ອາຊຽນຈາກສະຫະ ພາບເອີຣົບ) ກ່ຽວກັບແນວຄວາມຄິດສຳລັບ ASSIST ແລະແນະ ນຳໃຫ້ ARISE ສ້າງຕັ້ງກົນໄກທີ່ຈຳເປັນ, ຂັ້ນ ຕອນລະອຽດແລະຂໍ້ແນະນຳສຳລັບ ASSIST, ແລະເວບໄຊທ໌ທີ່ໄດ້ອະນຸຍາດໃຫ້ຜູ້ດຳເນີນການຫຼືປະຕິບັດງານຫລັກທີ່ສຳຄັນສາມາດ ເຂົ້າເຖິງ ASSIST ຜ່ານທາງອິນເຕີເນັດໄດ້.

ASSIST ຢືນຢັນອີກເທື່ອຫນຶ່ງກ່ຽວກັບຄຸນລັກສະນະທີ່ເປັນທີ່ປຶກສາ ແລະ ບໍ່ມີການຜູກມັດຂອງ ACT, ໃນຂະນະທີ່ມີການປັບປຸງ ໂຄງສ້າງໃຫ້ທັນສະໄໝ ແລະ ເຮັດໃຫ້ກົນໄກປະຕິບັດງານໄດ້ຢ່າງມີປະສິດທິພາບ ແລະ ມີປະສິດທິຜົນສູງຂຶ້ນ. ດັ່ງນັ້ນ, ASSIST ເຮັດ ຫນ້າທີ່ເປັນກົນໄກເພື່ອແກ້ໄຂບັນຫາໄດ້ຢ່າງໄວວາ ແລະ ມີປະສິດທິຜົນຂອງບັນຫາການດຳເນີນງານທີ່ບັນດາວິສາຫະກິດອາຊຽນພົບ ເຫັນກ່ຽວກັບບັນຫາຂ້າມຊາຍແດນທີ່ຕິດພັນກັບການຈັດຕັ້ງປະຕິບັດຂໍ້ຕົກລົງອາຊຽນທີ່ຢູ່ໃນຂອບເຂດມາດຕາ 1 ຂອງອະນຸສັນຍາ ອາຊຽນວ່າດ້ວຍການຈັດການຄວາມຂັດແຍ້ງ. ໄດ້ເປີດ ASSIST ຂຶ້ນ ໃນປີ 2016 ພ້ອມກັບກອງປະຊຸມລັດຖະມົນຕີເສດຖະກິດ ອາຊຽນ (AEM) ຄັ້ງທີ 48 ໃນເດືອນສິງຫາ ປີ 2016 ຊຶ່ງເປັນຫນຶ່ງໃນບັນດາຂໍ້ສະເໜີສຳຄັນພາຍໃຕ້ການເປັນປະທານອາຊຽນ ຂອງສປປລາວ. ຈຸດປະສົງ ແລະ ການເຂົ້າເຖິງ ASSIST ແມ່ນການປະຕິບັດຕາມ ແລະ ການລົງມືປະຕິບັດທັງໃນເອກະສານ ແລະ ໃນຈິດໃຈຂອງສັນຍາການຄ້າອາຊຽນ, ເຊັ່ນດຽວກັນກັບທັງອະນຸສັນຍາແລະ ຂໍ້ຕົກລົງຂອງອາຊຽນກ່ຽວກັບການຂົນສົ່ງ, ການເງິນ ແລະການລົງທຶນ, ແລະ ການບໍລິການ. ໃນເບື້ອງຕົ້ນ, ASSIST ຖືກຈຳກັດໄວ້ສະເພາະໃນການຄ້າລະຫວ່າງອາຊຽນ ເພື່ອເຮັດໃຫ້ ລະບົບດັ່ງກ່າວສາມາດດຳເນີນງານໄດ້ເທື່ອລະກ້າວ. ເຖິງຢ່າງໃດກໍ່ຕາມ, ASSIST ກໍ່ໄດ້ຮັບການສ້າງຂຶ້ນ ເພື່ອຈັດການກັບການຄ້າ ດ້ານການບໍລິການ ແລະ ມາດຕະການການລົງທຶນທີ່ກ່ຽວຂ້ອງກັບການຄ້າເຊັ່ນກັນ.

ຈຸດປະສົງແມ່ນເພື່ອໃຫ້ມີວິທີທີ່ງ່າຍສຳລັບພາກເອກະຊົນຂອງອາຊຽນໃຫ້ສາມາດຈັດການກັບບັນດາມາດຕະການທີ່ບໍ່ແມ່ນພາສີ, ອຸ ປະສັກດ້ານການຄ້າທີ່ບໍ່ແມ່ນພາສີ, ຂໍ້ຫຍຸ້ງຍາກທາງດ້ານການຄ້າ ຫຼື ບັນຫາການຄ້າທີ່ອາດຈະເປັນການກີດຂວາງການຄ້າ ແລະ ການລົງທຶນໃນພາກ ພື້ນ, ໂດຍຍົກບັນຫາ ຫຼື ຄວາມກັງວົນຕ່າງໆ ທີ່ກົນໄກການເຊື່ອມໂยงອາດຈະບໍ່ຮັບການຈັດຕັ້ງປະຕິບັດຢ່າງ ເຕັມສ່ວນ ຫຼື ຕາມເນື້ອໃນຂອງຂໍ້ຕົກລົງພາກພື້ນໂດຍສະເພາະໃນລະດັບຊາດ.

B. ຂອບເຂດຂອງ ASSIST ແມ່ນຫຍັງ?

ASSIST ອະນຸຍາດໃຫ້ມີແຕ່ຄຳຮ້ອງທຸກທີ່ກ່ຽວຂ້ອງກັບການຄ້າສິນຄ້າ, ການຄ້າດ້ານການບໍລິການ ແລະ ບັນຫາການລົງທຶນທີ່ກ່ຽວຂ້ອງກັບການຄ້າພາຍໃນອາຊຽນເທົ່ານັ້ນ.

ປະເດັນບັນຫາທີ່ໄດ້ຮັບການຄຸ້ມຄອງໂດຍ ASSIST

- ບັນຫາຂ້າມເຂດແດນຫຼືບັນຫາທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດຂໍ້ຕົກລົງເສດຖະກິດອາຊຽນໜຶ່ງ ຫຼື ຫຼາຍຂໍ້, ໝາຍຄວາມວ່າ ຂໍ້ຕົກລົງທີ່ປະເທດສະມາຊິກອາຊຽນໄດ້ສະຫຼຸບ ເພື່ອຈຸດປະສົງຂອງການປະຕິບັດ AEC ສຳລັບການຄ້າສິນຄ້າ, ການຄ້າດ້ານການບໍລິການ ແລະ ມາດຕະການການລົງທຶນ.

ບັນຫາທີ່ບໍ່ໄດ້ຮັບການຄຸ້ມຄອງໂດຍ ASSIST:

ສິ່ງທີ່ສຳຄັນແລ້ວແມ່ນ ສິ່ງໃດທີ່ຢູ່ນອກຂອບເຂດດັ່ງທີ່ໄດ້ອະທິບາຍຂ້າງເທິງ. ນີ້ປະກອບມີ:

- ຂໍ້ຂັດແຍ່ງຂອງລູກຈ້າງ/ນາຍຈ້າງ ຫຼື ການຮ້ອງທຸກຕໍ່ການແບ່ງແຍກກົດກັ້ນ;
- ບັນຫາທີ່ກຳລັງຖືກຫຼືໄດ້ຖືກຟ້ອງ/ໄດ້ຕັດສິນໃນຂອບເຂດອຳນາດສານແຫ່ງຊາດ;
- ຄຳຮ້ອງທຸກຕໍ່ບຸກຄົນ ຫຼື ບໍລິສັດ/ທຸລະກິດ;
- ບັນຫາທີ່ບໍ່ກ່ຽວຂ້ອງກັບການຄ້າ, ການບໍລິການ ຫຼື ການລົງທຶນພາຍໃນອາຊຽນ; ປະເດັນບັນຫາຄົນເຂົ້າເມືອງ;
- ສິດທິໃນການອອກວີຊາແລະທີ່ຢູ່ອາໄສ; ແລະ
- ການເຄື່ອນໄຫວຂອງເງິນທຶນ ຫຼື ການຈຳລະເງິນຂ້າມແດນ.

ຂໍ້ມູນສຳຄັນເພີ່ມເຕີມ

ASSIST ແມ່ນມີໄວ້ພຽງແຕ່ ສຳລັບບັນຫາການຄ້າຊາຍແດນລະຫວ່າງອາຊຽນລະຫວ່າງວິສາຫະກິດອາຊຽນ (ເຊັ່ນ: ບໍລິສັດ, ບໍ່ແມ່ນບຸກຄົນ) ທີ່ໄດ້ລົງທະ ບຽນຢ່າງຖືກຕ້ອງຕາມກົດໝາຍໃນປະເທດສະມາຊິກອາຊຽນໃດໜຶ່ງ ແລະ ລັດຖະບານຂອງ 1 ໃນ 9 ປະເທດສະມາຊິກອາຊຽນອື່ນໆ. ບັນດາບັນຫາພາຍໃນປະເທດທີ່ສະເພາະເຈາະຈົງທີ່ມີຂໍ້ພົວພັນກັບລັດຖະບານໃນປະເທດຂອງວິສາຫະກິດທີ່ຕັ້ງຢູ່ນັ້ນ ບໍ່ສາມາດຖືກສົ່ງຜ່ານທາງ ASSIST ໄດ້.

ໃນກໍລະນີທີ່ຜູ້ໃຫ້ບໍລິການ, ຊຶ່ງຂຶ້ນກັບບໍລິສັດແມ່ທີ່ຕັ້ງຢູ່ໃນປະເທດສະມາຊິກອາຊຽນ X, ແຕ່ວ່າທີ່ໃຫ້ ການບໍລິການຂອງຕົນໃນປະເທດສະມາຊິກອາຊຽນ Y, ມີຄວາມຕັ້ງໃຈທີ່ຈະຍື່ນຄຳຮ້ອງທຸກຕໍ່ປະເທດສະມາຊິກອາຊຽນ Y, ແມ່ນບໍລິສັດແມ່ໃນອາຊຽນສະມາຊິກລັດ X ທີ່ຄວນຍື່ນຄຳຮ້ອງທຸກກ່ຽວກັບ ASSIST. ເຖິງຢ່າງໃດກໍ່ຕາມ, ຄະດີດັ່ງກ່າວຍັງສາມາດຍື່ນສະເໜີຊື່ໂດຍບໍ່ຕ້ອງລະບຸຊື່ໂດຍສະມາຄົມການຄ້າທີ່ອາຊຽນ, ສະພາການຄ້າ, ສະພາທຸລະກິດ, ສະຫະພັນທຸລະກິດ, ທະນາຍຄວາມຫຼືບໍລິສັດທະບຽນກົດໝາຍໃນນາມຂອງຜູ້ຮ້ອງຮຽນຕົວຈິງ.

C. ຄຸນລັກສະນະ ສຳຄັນຂອງ ASSIST ແມ່ນຫຍັງ?

- ການເຊື່ອມໂຍງກັບສູນການຄ້າອາຊຽນ (ATR). ໂດຍໃຫ້ສອດຄ່ອງກັບສັນຍາການຄ້າສິນຄ້າອາຊຽນ (ATIGA), ATR ມີຈຸດປະສົງເພື່ອໃຫ້ຄວາມໂປ່ງໃສກ່ຽວກັບກົດໝາຍ ແລະ ລະບຽບການການຄ້າແລະພາສີຂອງທຸກໆປະເທດສະມາຊິກອາຊຽນ. ATR ແມ່ນລະບົບການໂຕ້ຕອບທາງອີເລັກໂທຣນິກໂດຍທີ່ທາງຄົນທົ່ວໄປສາມາດເຂົ້າເຖິງຂໍ້ມູນທີ່ມີຢູ່ໃນຖານຂໍ້ມູນການຄ້າແຫ່ງຊາດ (NTRs) ຂອງແຕ່ລະປະ ເທດສະມາຊິກອາຊຽນໄດ້;

- ລະບົບເວັບທີ່ກະທັດຫັດງ່າຍດາຍ ແລະ ເປັນມິດກັບຜູ້ໃຊ້ທີ່ສາມາດເຂົ້າເຖິງໄດ້ ແລະ ນຳໃຊ້ໄດ້ໂດຍບໍ່ເສຍຄ່າ, ໂດຍບັນດາວິສາຫະກິດອາ ຊຽນທີ່ປະສົບບັນຫາດ້ານການຄ້າໃນເວລາທີ່ມີການສົ່ງອອກສິນຄ້າ ຫຼື ການບໍລິການຂອງພວກເຂົາ, ຫຼື ໃນເວລາທີ່ລົງທຶນ

ເຂົ້າປະເທດອາ ຊຽນອື່ນໆ;

- 'ລະບົບຕິດຕາມການດຳເນີນການ' ແລະ 'ລະບົບແຈ້ງເຕືອນສະຖານະ' ທີ່ອະນຸຍາດໃຫ້ຜູ້ດຳເນີນການທີ່ສຳຄັນສາມາດຕິດຕາມການດຳເນີນການທາງອິນເຕີເນັດໄດ້;
- ຄວາມສາມາດຂອງວິສາຫະກິດອາຊຽນໃນການຍື່ນຄຳຮ້ອງທຸກໂດຍບໍ່ເປີດເຜີຍຊື່ໂດຍການດຳເນີນການຜ່ານສະມາຄົມການຄ້າທີ່ອາຊຽນ, ຫຼື ຫນ່ວຍງານຕົວແທນອື່ນໆເຊັ່ນ: ຫ້ອງການການຄ້າ, ສະພາທຸລະກິດ, ສະຫະພັນທຸລະກິດ, ຫຼື ທະນາຍຄວາມ ຫຼື ບໍລິສັດກົດຫມາຍຈົດທະບຽນໃນອາຊຽນ, ໃນເວລາທີ່ຕ້ອງການໃຫ້ປົດບັງໄວ້ເປັນຄວາມລັບໂດຍຜູ້ຮ້ອງທຸກ;
- ການສອນແບບຜ່ານລະບົບອອນໄລນ້ທາງອິນເຕີເນັດແມ່ນມີຢູ່ໃນເວັບໄຊທ້ ASSIST ແລະ ເວບໄຊທ້ນີ້ຈະມີທຸກພາສາໃນອາຊຽນໃນໄວໆນີ້ (ແຕ່ກໍລະນີຄະດີການຮ້ອງທຸກ ອາດຈະຕ້ອງຍື່ນເປັນພາສາອັງກິດເທົ່ານັ້ນ).
- ເວທີສົນທະນາສາທາລະນະທີ່ມີຂໍ້ມູນກ່ຽວກັບປະເພດ ແລະ ຈຳນວນຂອງການສະໜັກ, ການສຶກສາກໍລະນີຂອງບັນຫາທີ່ໄດ້ຮັບການແກ້ໄຂ, ແລະ ຄຳຕິຊົມຈາກວິສາຫະກິດອາຊຽນອາດຈະຖືກເຜີຍແຜ່.

D. ແມ່ນໃຜເປັນຜູ້ດຳເນີນການທີ່ສຳຄັນໃນ ASSIST?

1. ວິສາຫະກິດອາຊຽນ (AE)

ນິຍາມຂອງວິສາຫະກິດອາຊຽນແມ່ນຫຍັງ ແລະ ຜູ້ໃດມີເງື່ອນໄຂໃນການເປັນວິສາຫະກິດອາຊຽນ?
ແມ່ນບໍລິສັດທີ່ໄດ້ວົງທະບຽນຢ່າງຖືກຕ້ອງ ໃນ 1 ໃນ 10 ປະເທດສະມາຊິກອາຊຽນ.

ຂໍ້ມູນສຳຄັນເພີ່ມເຕີມ

ມີແຕ່ບໍລິສັດອາຊຽນເທົ່ານັ້ນທີ່ຈະໃຊ້ ASSISTໄດ້. ບຸກຄົນທີ່ມີຄຳຮ້ອງທຸກສ່ວນຕົວບໍ່ສາມາດຍື່ນຄຳ ຮ້ອງທຸກກ່ຽວກັບ ASSIST ໄດ້. ເຖິງຢ່າງໃດກໍ່ຕາມ, ທະນາຍຄວາມທີ່ເປັນລາຍບຸກຄົນສາມາດຍື່ນຄຳຮ້ອງທຸກໃນນາມລູກຄ້າຂອງຕົນ, ທີ່ແມ່ນວິສາຫະກິດອາຊຽນທີ່ຈົດທະບຽນຖືກຕ້ອງ.

ແມ່ນໃຜສາມາດເປັນຕົວແທນຂອງວິສາຫະກິດອາຊຽນ?

- ຜູ້ຕາງຫນ້າທີ່ອາຊຽນ (ຫມາຍເຖິງຫນຶ່ງ ທີ່ຈົດທະບຽນຖືກຕ້ອງ ໃນຫນຶ່ງຈາກສິບປະເທດສະມາຊິກອາຊຽນ), ເຊັ່ນ: ສະມາຄົມການຄ້າທີ່ອາ ຊຽນ, ສະພາການຄ້າ, ສະພາທຸລະກິດ, ຫຼືສະຫະພັນທຸລະກິດສາມາດນຳໃຊ້ ASSIST ແລະຍົກບັນຫາ, ການສອບຖາມຫຼື ການຮ້ອງທຸກຜ່ານ ASSIST ໃນນາມຂອງສະມາຊິກຄົນຫນຶ່ງ ຫຼື ສະມາຊິກຫຼາຍຄົນທີ່ມີບັນຫາການຄ້າອັນດຽວກັນ.

- ທະນາຍຄວາມ ຫຼື ບໍລິສັດກົດຫມາຍທີ່ໄດ້ຈົດທະບຽນໃນອາຊຽນ, ໄດ້ຖືກຍອມຮັບຢ່າງຖືກຕ້ອງວ່າຈະປະຕິບັດກົດຫມາຍຂອງ 1 ໃນ 10 ສິດອຳນາດຂອງປະເທດສະມາຊິກອາຊຽນ, ອາດຈະເປັນຕົວແທນໃຫ້ແກ່ວິສາຫະກິດອາຊຽນ ແລະ ຍື່ນຄຳຮ້ອງທຸກຜ່ານ ASSIST ໃນນາມລູກຄ້າຂອງຕົນ.

ຂໍ້ມູນສຳຄັນເພີ່ມເຕີມ

ສຳລັບວິສາຫະກິດອາຊຽນ (ຫຼື ຫນ່ວຍງານຕົວແທນ) ທີ່ຈະຂຶ້ນທະບຽນຢ່າງຖືກຕ້ອງ, ວິສາຫະກິດອາຊຽນຕ້ອງໄດ້ປະຕິບັດພັນທະຕາມກົດຫມາຍໃນປະເທດທີ່ຕົນດຳເນີນງານ ແລະ ຈົດທະບຽນເປັນສະມາຄົມທຸລະກິດ ຫຼື ການຄ້າ/ສະພາການຄ້າ, ສະພາທຸລະກິດ/ສະຫະພັນທຸລະກິດ, ແລະ ໄດ້ຮັບໃບອະນຸຍາດຈົດທະບຽນທຸລະກິດ. ເພື່ອໃຫ້ທະນາຍຄວາມປະຕິບັດໃນນາມຂອງລູກຄ້າພາຍໃຕ້ ASSIST, ໃບອະນຸຍາດວິຊາຊີບທີ່ອອກໃຫ້ສອດຄ່ອງກັບກົດ ຫມາຍທີ່ມີຢູ່ໃນປະເທດສະມາຊິກອາຊຽນທີ່ກ່ຽວຂ້ອງ ຕ້ອງໄດ້ເອົາມາສະແດງໃຫ້ເຫັນ.

2. ຜູ້ດູແລລະບົບ (CA)

- ກອງເລຂາອາຊຽນແມ່ນຜູ້ດູແລລະບົບຂອງ ASSIST ແລະ ໃນຄວາມສາມາດທີ່ມີນີ້ຈະໃຫ້ການຄຸ້ມຄອງການດຳເນີນການທາງອິນເຕີເນັດ ແລະ ຮັກສາລະບົບ ASSIST ໃຫ້ດຳເນີນການໄດ້ດີ.

- ທຸກການສື່ສານໃນບັນດາຜູ້ດຳເນີນການທີ່ສຳຄັນໃນ ASSIST ແມ່ນຜ່ານ ແລະ ຖືກຄັດເລືອກໂດຍຜູ້ດູແລລະບົບ.

- ຜູ້ດູແລລະບົບ, ຫຼັງຈາກໄດ້ທຳການກວດສອບທີ່ເໝາະສົມ, ກໍ່ຈະສົ່ງລາຍລະອຽດການຮ້ອງທຸກໄປທີ່ຈຸດຕິດຕໍ່ ຂອງ ASSIST (ຈຸດຕິດຕໍ່ຕົ້ນທາງ ແລະ ປາຍທາງ) ໃນປະເທດສະມາຊິກທີ່ກ່ຽວຂ້ອງ.

- ຜູ້ດູແລລະບົບຕິດຕາມກວດກາຄວາມຄືບໜ້າ ແລະ ຕອບກັບຄືນໄປຫາຜູ້ສະໝັກ (ເຊັ່ນ: ວິສາຫະກິດອາຊຽນ, ຕົວແທນ ຫຼື ທະນາຍ ຄວາມ ຫຼື ບໍລິສັດກົດໝາຍທີ່ໄດ້ຮັບແຕ່ງຕັ້ງ) ເພື່ອໃຫ້ວິທີການແກ້ໄຂບັນຫາໃຫ້ແກ່ຜູ້ທີ່ຍື່ນຄຳຮ້ອງທຸກ.

3. ຈຸດຕິດຕໍ່ຕົ້ນທາງ (HCP)

- ອົງການແຫ່ງຊາດ (ເຊັ່ນ: ຈຸດປະສານງານ) ໃນປະເທດສະມາຊິກອາຊຽນຂອງລັດວິສາຫະກິດອາຊຽນທີ່ຮ້ອງທຸກ (ຫຼື ບ່ອນທີ່ບໍລິສັດແມ່ທີ່ອີງໃສ່ບາງກໍລະນີການຄ້າດ້ານການບໍລິການ).

- ກະຊວງ, ອົງການ ຫຼື ອຳນາດການປົກຄອງລັດນີ້ອາດຈະເຂົ້າໄປແຊກແຊງ, ຖ້າຕ້ອງການ, ເພື່ອປຶກສາຫາລືກັບຜູ້ດູແລລະບົບ ແລະ/ຫຼື ຈຸດຕິດຕໍ່ປາຍທາງ.

4. ຈຸດຕິດຕໍ່ປາຍທາງ (DCP)

- ອົງການແຫ່ງຊາດ (ເຊັ່ນ: ຈຸດປະສານງານ) ໃນປະເທດສະມາຊິກອາຊຽນບ່ອນທີ່ປະເດັນດັ່ງກ່າວຖືກຍົກຂຶ້ນມາແລະວິສາຫະກິດອາຊຽນພວມປະເຊີນກັບບັນຫາການຄ້າ (ເຊັ່ນ: ໃນປະເທດສະມາຊິກອາຊຽນຕໍ່ກັບຄຳຮ້ອງທຸກທີ່ໄດ້ຍື່ນ).

- ກະຊວງ, ອົງການ ຫຼືອຳນາດການປົກຄອງລັດນີ້ຈະຕັດສິນໃຈວ່າມັນຕ້ອງການທີ່ຈະພົວພັນກັບ ASSIST ເພື່ອສະເໜີວິສາຫະກິດອາຊຽນເພື່ອແກ້ໄຂ, ຈະປະສານງານກັບເຈົ້າໜ້າທີ່ລັດທີ່ມີຄວາມສາມາດຂອງຕົນ, ແລະ ຈະຈັດການການສື່ສານທັງໝົດກັບຜູ້ດູແລລະບົບຂອງ ASSIST.

5. ເຈົ້າໜ້າທີ່ແຫ່ງຊາດທີ່ກ່ຽວຂ້ອງ (RAs)

- ເຈົ້າໜ້າທີ່ຫຼືຜູ້ຕາງໜ້າລັດຖະບານອື່ນໆທີ່ມີຄວາມສາມາດ ແລະ ມີຄວາມຮັບຜິດຊອບໃນປະເທດສະມາຊິກອາຊຽນ ບ່ອນທີ່ບັນຫາດັ່ງກ່າວຖືກຍົກຂຶ້ນມາ ແລະ ບ່ອນທີ່ວິສາຫະກິດອາຊຽນກຳລັງປະເຊີນກັບບັນຫາການຄ້າ.

- ບັນດາກະຊວງ, ອົງການ ຫຼື ອຳນາດການປົກຄອງຂອງລັດຖະບານເຫຼົ່ານີ້ແມ່ນໄດ້ຮັບໜ້າທີ່ຈາກຈຸດຕິດຕໍ່ປາຍທາງໃນການຊອກຫາວິທີແກ້ໄຂບັນຫາ ແລະ ໃນກໍລະນີທີ່ພວກເຂົາຮັບຮູ້ຄຳຮ້ອງທຸກຕາມທີ່ຍອມຮັບ, ພວກເຂົາຈະແນະນຳວິທີແກ້ໄຂທີ່ເປັນໄປໄດ້ຜູ້ຮ້ອງທຸກ (ເຊັ່ນ:ວິສາຫະກິດອາຊຽນ, ຫນ່ວຍງານຜູ້ຕາງໜ້າ ຫຼື ທະນາຍຄວາມ ຫຼື ບໍລິສັດກົດໝາຍທີ່ໄດ້ແຕ່ງຕັ້ງ) ໂດຍຜ່ານຈຸດຕິດຕໍ່ປາຍທາງຂອງພວກເຂົາແລະ ເຖິງຜູ້ດູແລລະບົບ.

E. ສາມາດຍື່ນຄຳຮ້ອງທຸກໄດ້ຄືແນວໃດ ?

ມີ 2 ປະເພດຄຳຮ້ອງທຸກທີ່ສາມາດຍື່ນຜ່ານ ASSIST ໄດ້ຄື:

1. ຄຳຮ້ອງທຸກທີ່ບໍ່ແມ່ນແບບບໍ່ລະບຸຊື່

ຄຳຮ້ອງທຸກທີ່ບໍ່ແມ່ນແບບບໍ່ລະບຸຊື່ສາມາດຍື່ນໄດ້ໂດຍກົງໂດຍວິສາຫະກິດອາຊຽນໃນນາມຂອງຕົນເອງ, ຕາມທີ່ໄດ້ກຳນົດໄວ້ໃນ ພາກ D.1. ຂອງພາກນີ້ຂອງປຶ້ມຄູ່ມື.

ວິສາຫະກິດອາຊຽນຕ້ອງໃຫ້ໝາຍເລກທະບຽນທຸລະກິດແຫ່ງຊາດ ແລະ ເອກະສານຢັ້ງຢືນການຂຶ້ນທະບຽນ, ຊຶ່ງຈຳເປັນຕ້ອງມີໃນ ແບບ ຟອມຄຳຮ້ອງທຸກໃນເວັບໄຊທ໌ ASSIST.

2. ຄຳຮ້ອງທຸກແບບບໍ່ລະບຸຊື່.

ຖ້າວິສາຫະກິດອາຊຽນຕ້ອງການປົດບັງຊື່ຜູ້ທີ່ປະສົບບັນຫາການຄ້າຂ້າມເຂດແດນພາຍໃນອາຊຽນ, ການຮ້ອງທຸກສາມາດຍື່ນ ໂດຍຜູ້ຕາງໜ້າໃນອາຊຽນຂອງທຸລະກິດອາຊຽນ ເຊັ່ນ: ສະມາຄົມການຄ້າ, ສະພາການຄ້າ, ສະພາການຄ້າ, ທຸລະກິດສະຫະພັນ, ຫຼື ທະນາຍຄວາມ ຫຼື ບໍລິສັດກົດໝາຍຈົດທະບຽນໃນອາຊຽນ.

ສະມາຄົມການຄ້າໃນອາຊຽນ ແລະ ບັນດາໜ່ວຍງານຕາງໜ້າໃນອາຊຽນ

a. ບັນດາຫົວໜ້າຜູ້ຕາງໜ້າທີ່ຢູ່ໃນອາຊຽນ, ເຊັ່ນ: ສະມາຄົມການຄ້າ, ສະພາການຄ້າ, ສະພາທຸລະກິດ ຫຼື ສະຫະພັນທຸລະກິດ ສາມາດຍື່ນຄະດີແບບບໍ່ລະບຸຊື່ ໃນນາມຂອງສະມາຊິກຄົນໜຶ່ງ ຫຼື ໃນນາມສະມາຊິກຫຼາຍຄົນຂອງພວກເຂົາທີ່ມີບັນຫາການ ຄ້າອັນດຽວກັນ. ວິທີການນີ້ຍັງມີຈຸດປະສົງເພື່ອໃຫ້ຜູ້ຮ້ອງທຸກຫຼາຍຄົນທີ່ມີບັນຫາການຄ້າແບບດຽວກັນ, ເພື່ອຫຼີກລ່ຽງການ ຮ້ອງທຸກຫຼາຍສະບັບ. ຕ້ອງສັງເກດວ່າ ອາດຈະຄ່າທຳນຽມໃນເວລາທີ່ໜ່ວຍງານຜູ້ຕາງໜ້າໃຫ້ບໍລິການນີ້ແກ່ວິສາຫະກິດ ອາຊຽນໂດຍຂໍຮ້ອງບໍ່ລະບຸຊື່.

b. ໃນກໍລະນີດັ່ງກ່າວ, ໜ່ວຍງານຜູ້ຕາງໜ້າທີ່ຢູ່ໃນອາຊຽນຈະຍື່ນຄຳຮ້ອງທຸກດ້ວຍຊື່ຂອງຕົນເອງ. ໃນກໍລະນີນີ້, ໜ່ວຍງານຜູ້ ຕາງໜ້າຕ້ອງນຳໃຊ້ເລກທະບຽນທຸລະກິດຂອງຕົນຈາກອຳນາດການປົກຄອງຂອງອາຊຽນໃນບ່ອນທີ່ພວກເຂົາດຳເນີນການ ທຸລະກິດ.

c. ບັນດາຫົວໜ້າຜູ້ຕາງໜ້າໃນອາຊຽນສາມາດຍື່ນຄຳຮ້ອງທຸກຕໍ່ປະເທດສະມາຊິກອາຊຽນທີ່ພວກເຂົາຈົດທະບຽນ, ຕາບໃດທີ່ ບັນຫາການຄ້າມີລັກສະນະຂ້າມຊາຍແດນ ແລະ ພວກເຂົາເປັນຕົວແທນຂອງປະເທດໃນອາຊຽນ (ໝາຍເຖິງສະມາຄົມພາກ ພື້ນ ແລະ ບໍ່ພຽງແຕ່ເປັນສັນຊາດ). ຫຼື ສະມາຊິກສ່ວນບຸກຄົນທີ່ຈົດທະບຽນເຂົ້າເປັນສະມາຊິກອາຊຽນທີ່ແຕກຕ່າງກັນຢ່າງ ເປັນທາງການກ່ອການຂຶ້ນທະບຽນຂອງໜ່ວຍງານຕົວແທນອາຊຽນ.

ທະນາຍຄວາມ ຫຼື ບໍລິສັດກົດໝາຍທີ່ລົງທະບຽນໃນອາຊຽນ

a. ທະນາຍຄວາມ ຫຼື ບໍລິສັດກົດໝາຍທີ່ຈົດທະບຽນອາຊຽນ ອາດຈະຍື່ນຄະດີທີ່ບໍ່ລະບຸຊື່ໃນນາມລູກຄ້າຄົນໜຶ່ງຂອງພວກເຂົາ (ເຊັ່ນ: ວິສາຫະກິດອາ ຊຽນທີ່ມີບັນຫາການຄ້າ). ທະນາຍຄວາມ ຫຼື ບໍລິສັດກົດໝາຍ ຕ້ອງໄດ້ຮັບອະນຸຍາດຢ່າງຖືກຕ້ອງ ເພື່ອປະຕິບັດຕາມກົດໝາຍໃນປະເທດສະມາຊິກອາຊຽນ ບ່ອນທີ່ລູກຄ້າຕັ້ງຢູ່ ຫຼື ຢູ່ໃນປະເທດສະມາຊິກອາຊຽນຕໍ່ກັບຄຳ ຮ້ອງທຸກທີ່ຖືກຍື່ນ.

b. ກົດລະບຽບພິເສດແມ່ນນຳໃຊ້ກັບຄຳຮ້ອງທຸກທີ່ຖືກຍື່ນໂດຍທະນາຍຄວາມຫຼືບໍລິສັດກົດໝາຍທີ່ລົງທະບຽນອາຊຽນ. ໂດຍ ສະເພາະກ່ອນການຍື່ນຄຳຮ້ອງທຸກຂອງ ASSIST ໃນນາມລູກຄ້າ, ທະນາຍຄວາມ ຫຼື ບໍລິສັດກົດໝາຍຈົດທະບຽນໃນອາຊຽນ

ຕ້ອງຕິດຕໍ່ກັບກອງເລຂາອາຊຽນກ່ອນ ແລະ ຕ້ອງໄດ້ໃຫ້ຂໍ້ມູນທີ່ຈຳເປັນກ່ຽວກັບການຈົດທະບຽນວິຊາຊີບຂອງຕົນ ແລະ ລູກຄ້າໃນນາມທີ່ຄຳຮ້ອງທຸກທີ່ບໍ່ລະບຸຊື່ນັ້ນ. ເພື່ອເຮັດແນວນັ້ນ, ທະນາຍຄວາມ ຫຼື ບໍລິສັດກົດໝາຍຕ້ອງດາວໂຫລດແບບຟອມທີ່ຈຳເປັນໃນເວບໄຊທ໌ຂອງ ASSIST (http://assist.asean.org/complaint/?m=42&type=law) ແລະ ສົ່ງທາງທາງອີເມລຫາກອງເລຂາອາຊຽນ, ຕາມທີ່ລະບຸໄວ້ໃນແບບຟອມຂອງ ASSIST.

c. ເມື່ອກອງເລຂາອາຊຽນໄດ້ສົ່ງ ເລກລະຫັດລັບ (CCC) ໂດຍທາງອີເມລໃຫ້ທະນາຍຄວາມ ຫຼື ບໍລິສັດກົດໝາຍແລ້ວ, ຈຶ່ງສາມາດຍື່ນຄຳຮ້ອງທຸກທີ່ແທ້ຈິງ ຜ່ານ ASSIST, ໂດຍໃຊ້ແບບຟອມອອນໄລນ໌.

ຂໍ້ມູນສຳຄັນເພີ່ມເຕີມ

ສຳລັບວິສາຫະກິດອາຊຽນ ແລະ ຫນ່ວຍງານຕົວແທນທີ່ຢູ່ໃນອາຊຽນ, ຫຼັກຖານຢັ້ງຢືນການຂຶ້ນທະບຽນທຸລະກິດພາຍໃນປະເທດສະມາຊິກຂອງວິສາຫະກິດ ຫຼື ຫນ່ວຍງານຕົວແທນທີ່ຮ້ອງຮຽນແມ່ນສິ່ງຈຳເປັນໃນເວລາຍື່ນຄຳຮ້ອງທຸກ - ເພື່ອເປັນເອກະສານຕົດຄັດ, ໂດຍສຳເນົາເອເລັກໂຕຣນິກຂອງເອກະສານລົງທະບຽນ. ທະນາຍຄວາມ ຫຼື ບໍລິສັດກົດໝາຍຈົດທະບຽນໃນອາຊຽນ ຕ້ອງມີໃບອະນຸຍາດວິຊາສະເພາະຂອງທະນາຍຄວາມ ຫຼື ບໍລິສັດກົດໝາຍ. ເຖິງຢ່າງໃດກໍ່ຕາມ, ທະນາຍຄວາມ ຫຼື ບໍລິສັດກົດໝາຍ ຕ້ອງຍື່ນໃບທະບຽນວິສາຫະກິດລູກຄ້າຂອງຕົນ, ວິສາຫະກິດອາຊຽນ, ດ້ວຍຄວາມໝັ້ນໃຈໃຫ້ກອງເລຂາອາຊຽນ, ກ່ອນທີ່ຈະຍື່ນຄຳຮ້ອງທຸກຕົວຈິງຜ່ານ ASSIST.

F. ຊ່ອງທາງການສື່ສານຂອງ ASSIST ດຳເນີນງານຄືແນວໃດ?

ASSIST ດຳເນີນງານໂດຍການຮັກສາຊ່ອງທາງການສື່ສານຜ່ານຜູ້ດູແລລະບົບ, ໃນນາມຜູ້ຮ້ອງທຸກ (ເຊັ່ນ: ວິສາຫະກິດອາຊຽນ, ຜູ້ຕາງຫນ້າທີ່ຂຶ້ນກັບອາ ຊຽນ, ຫຼື ທະນາຍຄວາມ ຫຼື ບໍລິສັດກົດໝາຍທີ່ຈົດທະບຽນໃນອາຊຽນ), ໂດຍເຈົ້າຫນ້າທີ່ລັດຖະບານຂອງບັນດາອົງການດັ່ງກ່າວໄດ້ແຕ່ງຕັ້ງເປັນຜູ້ປະສານງານກັບ ASSIST ພາຍໃນປະເທດສະມາຊິກອາຊຽນ.

- ສິ່ງນີ້ຖືກຄຸ້ມຄອງໂດຍຜ່ານທາງເວບໄຊທ໌, ໂດຍການສົ່ງອີເມລ, ອີງຕາມຄວາມຮັບຜິດຊອບແລະຂັ້ນຕອນທີ່ຖືກມອບໝາຍ; ແລະ
- ໂດຍການເຂົ້າເຖິງຂອງຜູ້ໃຊ້ - ຜ່ານການຄວບຄຸມການເຂົ້າສູ່ລະບົບໃຫ້ກັບ ASSIST Administrator Panels - ເພື່ອຕິດຕາມຄວາມຄືບຫນ້າ ແລະການປະຕິບັດຕາມຂອບເວລາທີ່ໄດ້ຕົກລົງກັນໄວ້.

ຂໍ້ມູນສຳຄັນເພີ່ມເຕີມ

ໃນບາງກໍລະນີ, ການແຈ້ງເຕືອນອັດຕະໂນມັດຈະປາກົດຢູ່ໃນຫນ້າເວບໄຊທ໌ ASSIST ຕາມການດຳເນີນການທີ່ແນ່ນອນຂອງຜູ້ຮ້ອງທຸກ, ເຊັ່ນ: ໄດ້ຍື່ນຄຳຮ້ອງທຸກ ຊຶ່ງຮຽກຮ້ອງໃຫ້ຜູ້ຮ້ອງທຸກຕ້ອງຄລິກທີ່ລິ້ງທີ່ໄດ້ໃຫ້ໄວ້ ເພື່ອດຳເນີນການຕາມຂັ້ນຕອນຂອງ ASSIST.

ຮູບ 1.
ການສື່ສານ/ໂຄງສ້າງແບບສ້າງສັນຂອງ ASSIST


ຜູ້ດູແລລະບົບ
ຂອງ ASSIST
(ກອງເລຂາອາຊຽນ)
ວິສາຫະກິດອາຊຽນ
ວິສາຫະກິດ
ຜູ້ຕາງໜ້າ
ທະນາຄານ
ບໍ່ລິສັດ
ວິສາຫະກິດ
ອາຊຽນ
ຜູ້ຕາງໜ້າ
ອາຊຽນ
ທະນາຄານ
ບໍ່ລິສັດ
ອາຊຽນ
ວິສາຫະກິດ
ອາ
ຜ
ສ
ທ
ທ
ບ
ອ
ປະ
ບ່ໄດ້ຕໍ່ອິນເຕີເນັດ
ເຈົ້າ
ອ
ອ
ການ
ການ
ການ

ແລະບ່ອນທີ່ວິສາຫະກິດອາຊຽນກຳລັງປະເຊີນກັບບັນຫາການຄ້າ. ກະຊວງ, ອົງການຫຼື ອຳນາດການປົກຄອງລັດນີ້ຈະຕັດສິນໃຈວ່າ ຕົນຍາກພົວພັນກັບ ASSIST ຫຼືບໍ່ ເພື່ອສະເໜີຜູ້ຮ້ອງທຸກ (ເຊັ່ນ: ວິສາຫະກິດອາຊຽນ, ຫນ່ວຍງານຜູ້ຕາງຫນ້າ ຫຼື ທະນາຍຄວາມ ຫຼື ບໍລິສັດກົດຫມາຍທີ່ໄດ້ຮັບການແຕ່ງຕັ້ງ) ການແກ້ໄຂບັນຫາ, ຈະປະສານງານກັບເຈົ້າຫນ້າທີ່ລັດທີ່ມີຄວາມສາມາດ, ແລະ ຈະຈັດການ ການສື່ສານທັງຫມົດຜ່ານລະບົບ ແລະກັບຜູ້ດູແລລະບົບຂອງ ASSIST.

ເຈົ້າໜ້າທີ່ແຫ່ງຊາດທີ່ກ່ຽວຂ້ອງ (RA)

ອຳນາດການປົກຄອງ ຫຼື ຜູ້ມີສິດອຳນາດ ຫຼື ຜູ້ຕາງໜ້າລັດຖະບານອື່ນໆ, ໄດ້ຮັບໜ້າທີ່ໃນການຊອກຫາວິທີແກ້ໄຂບັນຫາທີ່ຜູ້ຮ້ອງທຸກໄດ້ຍື່ນ (ເຊັ່ນ: ວິສາຫະກິດອາຊຽນ, ຫນ່ວຍງານຕົວແທນ ຫຼື ທະນາຍຄວາມ ຫຼື ບໍລິສັດທີ່ຖືກແຕ່ງຕັ້ງ). ພວກເຂົາແມ່ນເຈົ້າໜ້າທີ່ທີ່ມີຄວາມຮັບຜິດຊອບໃນປະເທດສະມາຊິກອາຊຽນທີ່ຍື່ນຄຳຮ້ອງທຸກດັ່ງກ່າວ ແລະ ບ່ອນທີ່ວິສາຫະກິດອາຊຽນກຳລັງປະເຊີນກັບບັນຫາທີ່ກ່ຽວຂ້ອງກັບການຄ້າ. ໃນສະຖານະການທີ່ຈຸດຕິດຕໍ່ປາຍທາງ ຍອມຮັບເອົາຄຳຮ້ອງທຸກນັ້ນ, ພວກເຂົາອາດຈະແນະນຳວິທີການແກ້ໄຂທີ່ເປັນໄປໄດ້ຕໍ່ຜູ້ຮ້ອງ ທຸກ, ຈາກນັ້ນກໍ່ສົ່ງຕໍ່ຜ່ານຈຸດຕິດຕໍ່ປາຍທາງຂອງພວກເຂົາ ແລະ ຜ່ານຜູ້ດູແລລະບົບ ແລະ ໃນທີ່ສຸດ ກໍ່ເຖິງວິສາຫະກິດອາຊຽນ, ຫນ່ວຍງານຕົວແທນ. ທະນາຍຄວາມ ຫຼື ບໍລິສັດກົດໝາຍ.

ຂໍ້ມູນສຳຄັນເພີ່ມເຕີມ

ເປັນສິ່ງສຳຄັນທີ່ຈະສັງເກດວ່າພາສາອັງກິດແມ່ນພາສາຂອງການສື່ສານຢ່າງເປັນທາງການພາຍໃນລະບົບ ASSIST ແລະຄຳຮ້ອງທຸກຕ້ອງຂຽນເປັນພາສາອັງກິດ. ເອກະສານສະໜັບສະໜູນທີ່ຖືກອັບໂຫລດໂດຍຜູ້ຮ້ອງທຸກ (ເຊັ່ນ: ບົດສະຫຼຸບທາງກົດໝາຍ, ບົດລາຍງານດ້ານວິຊາການແລະອື່ນໆ) ຕ້ອງຂຽນເປັນພາສາອັງກິດ. ເຖິງຢ່າງໃດກໍ່ຕາມ, ເອກະສານທາງການຕ່າງໆເຊັ່ນຫຼັກຖານຢັ້ງຢືນການລົງທະບຽນ, ກົດໝາຍແຫ່ງຊາດ, ໃບຢັ້ງຢືນ, ໃບອະນຸຍາດຫຼືຄ້າຍຄືກັນ, ຊຶ່ງຂຽນເປັນພາສາທາງການແຫ່ງຊາດອາດຈະຖືກອັບໂຫລດລົງໃນລະບົບເພື່ອສະໜັບສະໜູນຄຳຮ້ອງທຸກ, ແຕ່ວ່າຄວນຈະແປເປັນພາສາອັງກິດ (ບໍ່ເປັນທາງການ) ແລະຕິດຄັດແລະສົ່ງໄປໃຫ້. ທາງອອກຈາກປະເທດປາຍທາງຍັງຈະໄດ້ສະເໜີເປັນພາສາອັງກິດ.

G. ເວທີສົນທະນາສາທາລະນະໃນເວບໄຊທ໌ຂອງ ASSIST



ເມື່ອໄດ້ມີປະສົບການຫຼາຍຂຶ້ນກັບການແກ້ໄຂຄຳຮ້ອງທຸກດ້ານການຄ້າຂອງປະເທດສະມາ ຊິກອາຊຽນໂດຍຜ່ານ ASSIST, ເວັບໄຊທ໌ ASSIST ໃນທີ່ສຸດກໍ່ຈະມີເວທີການສົນ ທະນາສາທາລະນະ. ໃນເມື່ອເວລາໄດ້ຜ່ານໄປໄລຍະໜຶ່ງ, ເວທີສົນທະນາສາທາລະນະຈະໃຫ້ຂໍ້ມູນທີ່ສາມາດເປັນປະໂຫຍດແກ່ວິສາຫະກິດອາຊຽນທີ່ພວມ ຊອກຫາວິທີແກ້ໄຂດ້ານທຸລະກິດໃນຂະນະທີ່ດຳເນີນທຸລະກິດຢູ່ໃນພາກພື້ນ. ເວທີ ປຶກສາຫາລືສາທາລະນະຍັງຈະຊຸກຍູ້ໃຫ້ທຸລະກິດແລກປ່ຽນປະສົບການ ແລະ ບົດຮຽນທີ່ເປັນປະໂຫຍດໃນການຊອກຫາວິທີແກ້ໄຂໃນອາຊຽນ. ບໍ່ມີຂໍ້ມູນທີ່ ເປັນຄວາມລັບໃດໆທີ່ຈະໄດ້ຈັດໃສ່ໃນເວທີສົນທະນາສາທາລະນະ.

ໄດ້ສະເໜີວ່າ ເວທີສາທາລະນະຈະຕ້ອງປະກອບດ້ວຍຂໍ້ມູນດັ່ງຕໍ່ໄປນີ້:

- ຂໍ້ມູນ/ສະຖິຕິກ່ຽວກັບປະເພດ ແລະ ຈຳນວນຄຳຮ້ອງ;
- ຂໍ້ແນະນຳການດຳເນີນງານ;
- ກໍລະນີສຶກສາ ຫຼື ບົດເລື່ອງການແກ້ໄຂບັນຫາທີ່ໄດ້ຮັບຜົນສຳເລັດ;
- ຄູ່ມືຊ່ວຍໃຫ້ທຸລະກິດສາມາດເຂົ້າໃຈຕໍ່ຂໍ້ຕົກລົງສັນຍາຂອງອາຊຽນໄດ້ດີຂຶ້ນ;
- ການປະກອບຄຳເຫັນຈາກຜູ້ຊົມໃຊ້ ຫຼື ວິສາຫະກິດທີ່ຮ້ອງທຸກ; ແລະ
- ຄຳແນະນຳກ່ຽວກັບການນຳໃຊ້ ASSIST.

ຂໍ້ມູນສຳຄັນເພີ່ມເຕີມ

ຄວາມລັບຂອງຂໍ້ມູນໃນເວທີສົນທະນາສາທາລະນະຈະໄດ້ຮັບການຮັກສາໄວ້ຢ່າງເຂັ້ມງວດ. ທຸກລາຍລະອຽດທີ່ລະບຸຜູ້ຮ້ອງທຸກສ່ວນບຸກຄົນ ຫຼື ຫນ່ວຍງານຕົວແທນຂອງພວກເຂົາ, ພ້ອມທັງບັນດາປະເທດສະມາຊິກອາຊຽນທີ່ກ່ຽວຂ້ອງ ຈະບໍ່ໄດ້ເຜີຍແຜ່, ເວັ້ນເສຍແຕ່ວ່າ ການເປີດເຜີຍແຜ່ແມ່ນໄດ້ຮັບອະນຸຍາດຈາກທຸກພາກສ່ວນທີ່ກ່ຽວຂ້ອງ.

ພາກ 2:
ຂັ້ນຕອນການຈັດການກັບຄຳຮ້ອງທຸກ

ພາກນີ້ຂອງປຶ້ມຄູ່ມືນີ້ ເປັນຄຳແນະນຳກ່ຽວກັບຂັ້ນຕອນການຈັດການການຮ້ອງທຸກ. ຍັງໄດ້ສະໜອງຕົວຢ່າງຕ່າງໆຂອງກໍລະ ນີສຶກ ສາແບບສົມມຸດຕົຖານ ໃນເອກະສານຊ້ອນທ້າຍ 4 ເພື່ອໃຫ້ເຫັນພາບ ຂອງຂັ້ນຕອນການຈັດການກັບຄຳຮ້ອງທຸກທີ່ດີກວ່າ ໂດຍ ເຈົ້າໜ້າທີ່ຜູ້ກ່ຽວຂ້ອງໃນການດຳເນີນງານຂອງ ASSIST.

ຄຳຮ້ອງທຸກຖືກຍື່ນໄດ້ແນວໃດ?

A. ການໃຊ້ແບບຟອມການຮ້ອງຮຽນທາງອິນເຕີເນັດ



1. ສຳລັບວິສາຫະກິດ ASEAN

ວິສາຫະກິດອາຊຽນທີ່ມີເງື່ອນໄຂເໝາະສົມສາມາດຍື່ນຄຳຮ້ອງທຸກ ໂດຍນຳໃຊ້ ແບບຟອມ ອອນໄລນ້ທີ່ລະບຸໄວ້ໃນເວັບໄຊທ້ຂອງ ASSIST: http://assist.asean.org ຫຼື ໂດຍເລືອກຄລິກທີ່ຮູບສັນຍາລັກ 'ASEAN Enterprise - ວິສາຫະກິດອາຊຽນ' ຢູ່ໃນແຖບເມນູ 'File a Complaint - ຍື່ນຄຳ ຮ້ອງທຸກ'.

2. ສຳລັບສະມາຄົມການຄ້າໃນອາຊຽນ ແລະ ຫນ່ວຍງານຜູ້ຕາງຫນ້າທີ່ໃນອາຊຽນອື່ນໆ.

ສຳລັບຄຳຮ້ອງທຸກທີ່ບໍ່ລະບຸຊື່ ໂດຍສະມາຄົມການຄ້າອາຊຽນ ແລະ ອົງການຕົວແທນອື່ນໆໃນອາຊຽນທີ່ມີເງື່ອນໄຂ ເຊັ່ນ: ຫ້ອງການການຄ້າ, ສະພາທຸລະກິດ ຫຼື ສະຫະພັນທຸລະກິດ, ຄຳຮ້ອງທຸກອາດຈະຖືກຍື່ນໂດຍໃຊ້ແບບຟອມອອນໄລນ້ທີ່ລະບຸໄວ້ໃນ ເວັບໄຊທ້ຂອງ ASSIST ໂດຍເລືອກເອົາ ' ASEAN Trade Association - ສະມາຄົມການຄ້າອາຊຽນ' ຢູ່ໃນແຖບເມນູ 'File a Complaint - ຍື່ນຄຳຮ້ອງທຸກ'. ໃນກໍລະນີດັ່ງກ່າວ, ຕ້ອງຍື່ນຄຳຮ້ອງທຸກ ພາຍໃຕ້ຊື່ຕົວແທນຂອງຜູ້ຕາງຫນ້າ, ເພາະວ່າ ສະມາຊິກໃນນາມຜູ້ຮ້ອງທຸກຢາກຮັກສາໄວ້ແບບບໍ່ລະບຸຊື່. ຄຳຮ້ອງທຸກດັ່ງກ່າວຈະຖືກຍື່ນໂດຍນຳໃຊ້ເລກທະບຽນທຸລະກິດຂອງ ຫນ່ວຍງານຕົວແທນ ແລະ ບໍ່ມີຂໍ້ມູນກ່ຽວກັບວິສາຫະກິດອາຊຽນຕົວຈິງໃດ ຢູ່ໃນຄຳຮ້ອງທຸກຈະຖືກເປີດເຜີຍຕໍ່ຈຸດຕິດຕໍ່ຕົ້ນ ທາງ ແລະ/ຫຼື ຈຸດຕິດຕໍ່ປາຍທາງ.

3. ສຳລັບທະນາຍຄວາມ ຫຼື ບໍລິສັດກົດໝາຍທີ່ໄດ້ຈົດທະບຽນໃນອາຊຽນ

ສຳລັບຄຳຮ້ອງທຸກທີ່ບໍ່ລະບຸຊື່ໂດຍທະນາຍຄວາມ ຫຼື ບໍລິສັດກົດໝາຍຈົດທະບຽນໃນອາຊຽນທີ່ມີຄຸນວຸດທິ, ຄຳຮ້ອງທຸກ ອາດຈະຍື່ນ ໂດຍໃຊ້ແບບຟອມທາງອິນເຕີເນັດທີ່ລະບຸໄວ້ໃນເວບໄຊທ້ ASSIST ໂດຍການເລືອກ ' ASEAN Lawyer or Law Firm - ທະນາຍຄວາມ ຫຼື ກົດໝາຍອາຊຽນ' ຢູ່ໃນແຖບເມນູ 'File a Complaint - ຍື່ນຄຳຮ້ອງທຸກ'. ໃນກໍລະນີດັ່ງກ່າວ, ຄຳຮ້ອງທຸກ ຈະຖືກຍື່ນໂດຍໃຊ້ໃບອະນຸຍາດວິຊາສະເພາະຂອງທະນາຍຄວາມ ແລະ ບໍ່ມີຂໍ້ມູນກ່ຽວກັບວິສາຫະກິດອາຊຽນທີ່ແທ້ຈິງ ຈຳເປັນ ຕ້ອງຖືກເປີດເຜີຍຕໍ່ຈຸດຕິດຕໍ່ຕົ້ນທາງ ແລະ/ຫຼືຈຸດຕິດຕໍ່ປາຍທາງ. ເຖິງຢ່າງໃດກໍ່ຕາມ, ມີກົດລະບຽບພິເສດທີ່ໄດ້ມານຳໃຊ້ກັບ ຄຳຮ້ອງທຸກທີ່ຍື່ນໂດຍທະນາຍຄວາມ ຫຼື ບໍລິສັດກົດໝາຍຈົດທະບຽນໃນອາຊຽນ ໂດຍສະເພາະ, ກ່ອນທີ່ຈະຍື່ນຄຳຮ້ອງທຸກ ໃນ ນາມລູກຄ້າ ໃນ ASSIST, ທະນາຍຄວາມ ຫຼື ບໍລິສັດກົດໝາຍອາຊຽນ ຕ້ອງຕິດຕໍ່ກັບກອງເລຂາອາຊຽນກ່ອນ ແລະ ໃຫ້ຂໍ້ມູນທີ່ ຈຳເປັນກ່ຽວກັບການຈົດທະບຽນແບບອາຊີບຂອງຕົນ ແລະ ລູກຄ້າໃນນາມທີ່ຄຳຮ້ອງທຸກທີ່ບໍ່ລະບຸຊື່ນັ້ນຕ້ອງໄດ້ຍື່ນ (ໝາຍ ຄວາມວ່າ ໃບອະນຸຍາດຈົດທະບຽນບໍລິສັດ). ເພື່ອເຮັດແນວນັ້ນ, ທະນາຍຄວາມ ຫຼື ບໍລິສັດກົດໝາຍ ຕ້ອງດາວໂຫຼດແບບຟອມທີ່ ຈຳເປັນຈາກເວບໄຊທ້ຂອງ ASSIST ທີ່: (http://assist.asean.org/ complaint/?m=42&type=law) ແລະ ສົ່ງທາງ ອີເມວຫາກອງເລຂາອາຊຽນ, ດັ່ງທີ່ໄດ້ລະບຸໄວ້ໃນແບບຟອມຂອງມັນເອງ. ເມື່ອກອງເລຂາອາຊຽນໄດ້ໃຫ້ໝາຍເລກລະຫັດລັບ (CCC) ໂດຍທາງອີເມວຫາທະນາຍຄວາມ ຫຼື ບໍລິສັດກົດໝາຍແລ້ວ, ຈຶ່ງສາມາດຍື່ນຄຳຮ້ອງທຸກທີ່ແທ້ຈິງໄດ້. CCC ແມ່ນການ ໃຊ້ແທນສຳລັບລາຍລະອຽດການຕິດຕໍ່ຂອງວິສາຫະກິດອາຊຽນ, ຊຶ່ງສາມາດເຮັດໃຫ້ໝັ້ນໃຈໄດ້ວ່າ ຄຳຮ້ອງທຸກທີ່ບໍ່ລະບຸຊື່ນັ້ນ ໄດ້ ຍື່ນໃນນາມຂອງວິສາຫະກິດອາຊຽນ ແລະ ຖືກກວດສອບໂດຍກອງເລຂາອາຊຽນ. ບໍລິສັດກົດໝາຍ ຫຼື ທະນາຍຄວາມຕ້ອງ ເອົາລະຫັດນີ້ໃສ່ເຂົ້າໄປໃນແບບຟອມການຮ້ອງທຸກຕົວຈິງໃນເວັບໄຊທ້ຂອງ ASSIST ທີ່ໄດ້ໃຫ້ໄວ້ທີ່ຢູ່ໃນຫົວຂໍ້ 'Complaint Description - ລາຍລະອຽດຄຳຮ້ອງທຸກ" ໃນແບບຟອມ.

ຈົ່ງລວມເອົາທຸກຂໍ້ມູນສຳຄັນເຂົ້າໃນແບບຟອມຄຳຮ້ອງທຸກທາງອອນໄລນ໌!
ແບບຟອມທາງອອນໄລນ໌ຮຽກຮ້ອງໃຫ້ໃສ່ຂໍ້ມູນທີ່ຈຳເປັນ, ລວມທັງຊື່ທຸລະກິດ ແລະ ລາຍລະອຽດ (ຂຶ້ນກັບຜູ້ຮ້ອງທຸກ, ເຊັ່ນ: ວິສາຫະກິດອາ ຊຽນ, ສະມາຄົມການຄ້າອາຊຽນ ຫຼື ສະມາຊິກຜູ້ຕາງໜ້າອາຊຽນອື່ນໆ, ຫຼື ທະນາຍຄວາມ ຫຼື ທະນາຍຄວາມຈິດທະບຽນໃນອາຊຽນ), ລາຍລະອຽດຜູ້ຕິດຕໍ່ ແລະ ລາຍລະອຽດຂອງຄຳຮ້ອງທຸກ. ເປັນສິ່ງສຳຄັນທີ່ສຸດວ່າຕ້ອງຂຽນ ຄຳອະທິບາຍໃນພາກ 'Complaint Description - ລາຍລະອຽດຄຳຮ້ອງທຸກ' ຂອງແບບຟອມຄຳຮ້ອງທຸກໃຫ້ຖືກຕ້ອງ, (ໝາຍຄວາມວ່າ ຄວນອະທິບາຍໃຫ້ຈະແຈ້ງກ່ຽວກັບບັນຫາທີ່ປະສົບຢູ່), ສະນັ້ນ ຜູ້ດູແລລະບົບຂອງ ASSIST ອາດຈະສາມາດກຳນົດບັນຫາໄດ້ຢ່າງຈະແຈ້ງໃນດ້ານຂໍ້ຕົກລົງສັນຍາສະເພາະຂອງອາຊຽນ. ພ້ອມກັນນີ້, ຕາຕະລາງເອກະສານອ້າງອີງໃນບັນຊີປະເພດສິນຄ້າຍ່ອຍ ແລະ ບັນຊີຂະແໜງບໍລິການທີ່ໄດ້ສະເໜີໃນເອກະສານຊ້ອນທ້າຍ 1 ໃນປຶ້ມຄູ່ມືນີ້, ເພື່ອເປັນຂໍ້ແນະນຳໃນການຕື່ມຂໍ້ມູນກ່ຽວກັບ 'ປະເພດບັນຫາທີ່ພົບກັບ' ແລະ 'ລາຍລະອຽດຂອງຂະແໜງບໍລິການ. 'ໃນພາກ 'ລາຍລະອຽດຄຳຮ້ອງທຸກ' ຂອງແບບຟອມຄຳຮ້ອງທຸກ.

ເອກະສານສະໜັບສະໜູນຕ່າງໆ ເຊັ່ນ: ການຈົດທະບຽນວິສາຫະກິດຂອງວິສາຫະກິດອາຊຽນ ຫຼື ສະມາຄົມການຄ້າໃນອາຊຽນ (ຫຼື ທຸລະກິດຕົວແທນອາຊຽນອື່ນໆ), ໃບອະນຸຍາດວິຊາຊີບຂອງທະນາຍຄວາມເພື່ອຮ້ອງທຸກທີ່ຍື່ນໂດຍທະນາຍຄວາມຂອງທະນາຍຄວາມຈິດທະບຽນໃນອາຊຽນ, ກົດໝາຍ ຫຼື ມາດຕະການທີ່ກ່ຽວຂ້ອງ, ຕາຕະລາງຂອງຄຳໝັ້ນສັນຍາສະເພາະພາຍໃຕ້ກອບຂໍ້ຕົກລົງສັນຍາຂອງອາຊຽນກ່ຽວກັບການບໍລິການ ຫຼື AFAS (ສຳລັບຄຳຮ້ອງທຸກທີ່ກ່ຽວຂ້ອງກັບການຄ້າຂາຍການບໍລິການ), ແລະ ຂໍ້ໂຕ້ແຍ້ງດ້ານກົດໝາຍ, ຫຼັກຖານຄວາມເປັນຈິງ, ແລະ ວິທີການທີ່ເປັນໄປໄດ້ທີ່ໄດ້ປະຕິບັດໄປແລ້ວພາຍໃນປະເທດ, ຄວນຍື່ນໃສ່ໃນຄຳຮ້ອງທຸກ ເຊັ່ນກັນ, ເພື່ອຊ່ວຍຜູ້ດູແລລະບົບໃນການຕັດສິນໃຈວ່າຈະອະນຸມັດຄຳຮ້ອງທຸກ ຫຼືບໍ່. ຜູ້ຮ້ອງທຸກຍັງອາດຈະພິຈາລະນາສະເໜີວິທີແກ້ໄຂທີ່ເປັນໄປໄດ້ ເພື່ອອຳນວຍຄວາມສະດວກໃຫ້ແກ່ຂະບວນການ ແລະ ການກຳນົດວິທີແກ້ໄຂ. ຄຳຮ້ອງທຸກທີ່ນຳສະເໜີຢ່າງຖືກຕ້ອງ ແລະ ຄົບຖ້ວນຈະມີໂອກາດສູງທີ່ຈະໄດ້ຮັບການຍອມຮັບຈາກປະເທດປາຍທາງ, ໂດຍມີຈຸດປະສົງໃນການຊອກຫາວິທີແກ້ໄຂ. ຂໍ້ມູນເພີ່ມເຕີມດັ່ງກ່າວ ອາດຈະໄດ້ໃຫ້ເປັນແບບອີເລັກໂທຣນິກ ໝາຍເຖິງເປັນເອກະສານຄັດຕິດກັບແບບຟອມການຮ້ອງຮຽນຂອງເວບໄຊທ໌.

ຊ່ອງໃສ່ຂໍ້ມູນທີ່ໝາຍດ້ວຍດາວ (*) ແມ່ນຊ່ອງໃສ່ຂໍ້ມູນທີ່ບັງຄັບ. ຖ້າຜູ້ຮ້ອງຮຽນບໍ່ແນ່ໃຈວ່າຈະຕື່ມຂໍ້ມູນໃສ່ໃນບ່ອນໃດ, ຄຸ້ມ ຕ່າງໆສາ ມາດຄລິກເຂົ້າໄປເພື່ອທຳການທົບທວນຄຳແນະນຳລາຍລະອຽດກ່ຽວກັບສິ່ງທີ່ຕ້ອງຕື່ມຂໍ້ມູນໃສ່ໃນແຕ່ລະຊ່ອງໃສ່ຂໍ້ມູນຂອງ 'ລາຍລະອຽດຂອງຄຳຮ້ອງທຸກ.

ຜູ້ດູແລລະບົບຂອງ ASSIST ສາມາດຮ້ອງຂໍໃຫ້ຍື່ນຄຳຮ້ອງທຸກຄືນໃໝ່ ຖ້າຂໍ້ມູນທີ່ຈຳເປັນບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງ (ສຳລັບລາຍລະອຽດເພີ່ມເຕີມ ໃຫ້ເບິ່ງພາກ C.2 ຂອງພາກທີ 3 'ບົດບາດ ແລະ ຄວາມຮັບຜິດຊອບຂອງຜູ້ດູແລລະບົບ' ຂອງປຶ້ມຄູ່ມືນີ້).

B. ຂັ້ນຕອນໃນການຈັດການຄຳຮ້ອງທຸກ

1. ສຳລັບວິສາຫະກິດອາຊຽນ ຫຼື ອົງການຕົວແທນໃນອາຊຽນ

ການຍື່ນຄຳຮ້ອງທຸກ
ວິສາຫະກິດອາຊຽນທີ່ມີເງື່ອນໄຂເໝາະສົມ ຫຼື ສະມາຄົມການຄ້າໃນອາຊຽນ ຫຼື ສະມາຊິກຜູ້ຕາງໜ້າໃນອາຊຽນອື່ນໆສາມາດກຽມ ແລະ ຍື່ນຄຳຮ້ອງທຸກ (ໂດຍຢູ່ໃນຂອບເຂດຂອງ ASSIST) ໂດຍນຳໃຊ້ແບບຟອມການຮ້ອງຮຽນທາງອິນເຕີເນັດທີ່ເວບໄຊທ໌ຂອງ ASSIST: http://assist.asean.org ໃນໄອຄອນ 'ASEAN Enterprise-ວິສາຫະກິດອາຊຽນ' ຫຼື 'ASEAN Trade Association - ສະມາຄົມການຄ້າອາຊຽນ' ຢູ່ໃນແຖບເມນູ 'File a Complaint - ຍື່ນຄຳຮ້ອງທຸກ'. ຫນ່ວຍງານຕົວແທນໃນອາຊຽນສາມາດຍື່ນຄຳຮ້ອງທຸກໃນນາມຂອງສະມາຊິກໜຶ່ງຄົນ ຫຼື ຫຼາຍຄົນ ຖ້າວິສາຫະກິດອາຊຽນບໍ່ຢາກລະບຸຊື່. ລະບົບຈະກວດສອບ ລາຍລະອຽດຂອງການປ້ອນຂໍ້ມູນ ເພື່ອຮັບປະກັນວ່າມີຂໍ້ມູນ

ທີ່ຈຳເປັນທັງໝົດ.

ຂໍ້ມູນສ່ຳຄັນເພີ່ມເຕີມ

ເພື່ອໃຫ້ເປັນຄະດີທີ່ມີຄວາມລະອຽດ ແລະ ສາມາດພິສູດໄດ້ດີ/ມີການໂຕ້ຖຽງກັນ, ກ່ອນທີ່ຈະຍື່ນຄຳຮ້ອງທຸກ, ຜູ້ຮ້ອງທຸກ ຄວນດຳເນີນການຄົ້ນຄ້ວາຢ່າງລະມັດລະວັງ ບົນພື້ນຖານຂອງຂໍ້ມູນທີ່ໃຫ້ໄວ້ໃນເວັບໄຊທ໌ຂອງ ASSIST ແລະ/ຫຼື ໂດຍການຊອກຫາການຊີ້ນຳ ແລະ ການຊ່ວຍເຫຼືອຈາກລັດຖະບານປະເທດຂອງຕົນເອງ. ຫຼື ຈາກທີ່ປຶກສາອິດສະຫຼະ, ທະນາຍຄວາມ, ບໍລິສັດກົດໝາຍ, ສະພາທຸລະກິດ, ຫ້ອງການການຄ້າ, ສະຫະພັນທຸລະກິດ ແລະ ສະມາຄົມການຄ້າ.

ການຮັບຮູ້ຕໍ່ຄຳຮ້ອງທຸກ

ໃນການຍື່ນຄຳຮ້ອງທຸກ, ລັດວິສາຫະກິດອາຊຽນ ຫຼື ຫນ່ວຍງານຕົວແທນໃນອາຊຽນ ໄດ້ຮັບການຮັບຮູ້ໂດຍອັດຕະໂນມັດໃນເວບໄຊທ໌, ດັ່ງທີ່ສະແດງຢູ່ຂ້າງລຸ່ມ.



ຜູ້ດູແລລະບົບຂອງ ASSIST ກໍ່ຈະໄດ້ຮັບການແຈ້ງເຕືອນກ່ຽວກັບການຍື່ນຄຳຮ້ອງທຸກຄືນໃຫມ່. ຕໍ່ໄປນີ້ແມ່ນອີເມວທີ່ໄດ້ສົ່ງໄປຫາຜູ້ຮ້ອງທຸກທີ່ໄດ້ໃຫ້ໄວ້ໃນແບບຟອມການຮ້ອງທຸກ. ມີຕົວຢ່າງໄວ້ໃຫ້ເບິ່ງຢູ່ລຸ່ມນີ້.

Gmail

ASEAN Enterprise <aseanenterprise0@gmail.com

[ASSIST] Thanks to confirm your complaint #14620181017 submission

No Reply ASSIST <assist@asean.org>
Reply-To: "assist@asean.org" <assist@asean.org>

Wed, Oct 17, 2018 at 12:49 P

ASSOCIATION OF SOUTHEAST ASIAN NATIONS

ASSIST
ASEAN Solutions for Investments, Services and Trade

Dear **Mr Paul Smith,**

Thank you for having filed a complaint on **ASSIST**, the system of ASEAN Solutions for Investments, Services and Trade.

Please **confirm** your complaint **14620181017 on the following link** (or by copy-pasting the following link onto your Internet browser):
http://assist.arsenadevelopment.space/user/confirm_email/?email=aseanenterprise0@gmail.com&id=14620181017&code=3y4r38bbqi98

After your confirmation, ASSIST will monitor your complaint and you will be able to access it on the following webpage
http://assist.arsenadevelopment.space/user/login by using your e-mail / tracking ID: **aseanenterprise0@gmail.com / 14620181017**

ASEAN Enterprise / Trade Association / Law Firm : Star 88 Co., Ltd. (type Enterprise)
Company size : 50 to 100
Phone : +905 524 1532
Website : www.star88.com
Address : Better Living Street City W Country X
City : City W / Zip Code : 1711
Country : AMS-X

Contact person : Mr Paul Smith
Phone : +905 524 1532
Position : Chief Executive Officer
Email : aseanenterprise0@gmail.com
Address : Better Living Street City W Country X
City : City W / Zip Code : 1711
Country : AMS-X

Confidential case code (for law firm or lawyer only):
Country of Legal Registration : AMS-X
Legal Registration Number : 123456
Type of Business : Service provider
Business Sector : Services /
Type of problem encountered : Transport services
Destination Country : AMS-Y

Description:
We are a duly registered shipping company in AMS-X. We have entered into a two-year binding agreement since January 2018 with an import-export company in AMS-X. The scope of the agreement is to export iron and aluminium from AMS-X into AMS-Y and import rubber and cotton from AMS-Y into AMS-X using our fleet of vessels. We have agreed to conduct this export-import transaction in round-trips from AMS-X to AMS-Y using the same vessel. The intention, inter alia, is to save cost in fuel consumption and manpower by having a full freight load in both inbound and outbound trips, thereby being able to provide a cost-effective and competitive service on a cross-border basis to customers based in both AMS-X and AMS-Y. We recently learned that AMS-Y has issued a new shipping law, namely the Ministry of Trade Law No. 13 Year 2018, imposing that certain commodities can only be transported for import or export by national maritime transport companies. The four commodities, i.e. iron, aluminium, rubber and cotton, are among the commodities listed in this new shipping law. This new law would certainly result in a financial loss for our business and prevent us from providing its maritime shipping services between AMS-X and AMS-Y. We are very worried that this legislative development is contrary to free trade, to the spirit of the ASEAN Economic Community (AEC) and, possibly, against the specific commitments and obligation of AMS-Y under the relevant ASEAN economic agreements (e.g., the ASEAN Framework Agreement on Services, or AFAS). We are of the view that this new law is a clear measure of protectionism and is incompatible with free trade principles and customary law regarding international maritime services, which will seriously impact AMS-Xâ€™s shipping companies that are offering cross-border maritime transport services in relation to the commodities affected by this law. Furthermore, this new measure by AMS-Y is a clear violation of the commitments made by AMS-Y to the World Trade Organization and is a clear violation of the Schedule of Specific Commitments of AMS-Y under AFAS, where AMS-Y have committed to allow foreign shipping companies that are offering cross-border freight transport services within ASEAN to operate within its waters without any limitations to market access and national treatment. Thus, we would like to request for AMS-Y to revoke or amend this new law accordingly.

Thanking you, ASSIST is at your service.

assist.asean.org

3 attachments

ອີເມວສົ່ງເຖິງຜູ້ຕິດຕໍ່ຂອງວິສາຫະກິດອາຊຽນ ຫຼື ຜູ້ຕາງໜ້າໃນອາຊຽນ ມີລາຍລະອຽດໂດຍພົ້ນຖານຂອງການຍື່ນຄຳຮ້ອງທຸກ ແລະ ໝາຍເລກຮ້ອງທຸກ ຫຼື ໝາຍເລກຕິດຕາມ (ລະຫັດຕິດຕາມ), ຊຶ່ງຄຳຮ້ອງທຸກຈະຖືກຈັດສັນໂດຍ ASSIST ແບບອັດຕະໂນມັດ, ໂດຍທີ່ຜູ້ຮ້ອງທຸກສາມາດຕິດຕາມຄວາມຄືບໜ້າຂອງຄຳຮ້ອງທຸກ (ລາຍລະອຽດເພີ່ມເຕີມກ່ຽວກັບການຕິດຕາມການຮ້ອງຮຽນ ແມ່ນມີໃນ "ຜູ້ຮ້ອງທຸກສາມາດຕິດຕາມຄວາມຄືບໜ້າຂອງຄຳຮ້ອງທຸກ" ໃນຂໍ້ E ຂອງເອກະສານພາກນີ້). ຈະມີການຕອບກັບຄືນທາງອີເມວ; ຊຶ່ງຜູ້ຮ້ອງທຸກ/ຜູ້ຮັບຜິດຊອບສາມາດຢືນຢັນ ແລະດັ່ງນັ້ນ ການຍື່ນສະເໜີແມ່ນຖືກຕ້ອງ ໂດຍການກົດທີ່ລິ້ງໃນອີເມວ. ເມື່ອຜູ້ຮ້ອງທຸກກົດປຸ່ມເຊື່ອມຕໍ່, ໜ້າຕໍ່ໄປນີ້ຈະປາກົດຢູ່ໜ້າຈໍຄອມພິວເຕີໂດຍອັດຕະໂນມັດ.



ການກວດສອບຂອງຜູ້ດູແລລະບົບ
ຜູ້ດູແລລະບົບຂອງ ASSIST ດຳເນີນການກວດສອບການຍື່ນຍືນເພື່ອກຳນົດການມີສິດໄດ້ຮັບ (ເຊັ່ນ: ຄຳຮ້ອງທຸກຢູ່ໃນຂອບເຂດຂອງ ASSIST), ແລະ ຜົນຈາກການວິເຄາະນັ້ນ, ພາຍໃນ 10 ມື້ລັດຖະການ, ຈົ່ງມີການກວດກາຄຳຮ້ອງທຸກ ແລະ:

- **ຍອມຮັບ**ຄຳຮ້ອງທຸກ ແລະ ສົ່ງຕໍ່ໄປທີ່ຈຸດປະສານງານລະດັບຊາດທີ່ກ່ຽວຂ້ອງ (ເຊັ່ນ: ຈຸດຕິດຕໍ່ປາຍທາງ 'ແລະ' ຈຸດຕິດຕໍ່ຕົ້ນທາງ);
- ອາດຈະມີການຮ້ອງຂໍໃຫ້ມີຂໍ້ມູນເພີ່ມເຕີມ **(ທີ່ບໍ່ຄົບຖ້ວນ)** ຫຼື ຮ້ອງຂໍໃຫ້ມີການແກ້ໄຂໂດຍຜູ້ຮ້ອງທຸກ (ໃຫ້ເບິ່ງການອະທິບາຍເພີ່ມເຕີມກ່ຽວກັບການດຳເນີນການຂອງຜູ້ຜູ້ດູແລລະບົບພາຍໃຕ້ຂໍ້ C.2 ຂອງພາກທີ 3 ຂອງປຶ້ມຄູ່ມືນີ້ 'ບົດບາດຂອງຜູ້ດູແລລະບົບຂອງ ASSIST'); ຫຼື
- **ປະຕິເສດ** ຄຳຮ້ອງທຸກທີ່ບໍ່ຖືກຕ້ອງ, ພ້ອມດ້ວຍເຫດຜົນທີ່ບອກວ່າ ເປັນຫຍັງຈຶ່ງໄດ້ຕັດສິນໃຈອອກມາແບບນີ້.

ຈຸດຕິດຕໍ່ປາຍທາງ ຍອມຮັບຫຼື ປະຕິເສດ
ຈຸດຕິດຕໍ່ປາຍທາງ (ພາຍໃນປະເທດສະມາຊິກອາຊຽນທີ່ມີການຮ້ອງທຸກ ແລະ ການແກ້ໄຂບັນຫາໃດໜຶ່ງ) ເພື່ອທົບທວນລາຍລະອຽດຂອງຄຳຮ້ອງທຸກພາຍໃນ 10 ມື້ລັດຖະການ ແລະ ຕັດສິນໃຈ ວ່າ:

- ໂດຍອີງໃສ່ຂໍ້ມູນທີ່ໄດ້ໃຫ້ມາ, ຄຳຮ້ອງທຸກປະກົດວ່າເປັນການນຳສະເໜີຄະດີທີ່ຖືກຕ້ອງ, ແລະດັ່ງນັ້ນ ຄຳຮ້ອງທຸກຈຶ່ງ**ຖືກຍອມຮັບ**;
- ອີເມວແຈ້ງການຍອມຮັບແມ່ນໄດ້ສົ່ງໄປຫາຜູ້ດູແລລະບົບ ແລະ ຈຸດຕິດຕໍ່ຕົ້ນທາງ;
- ລາຍລະອຽດແມ່ນສົ່ງຕໍ່ໃຫ້ອົງການປົກຄອງແຫ່ງຊາດທີ່ກ່ຽວຂ້ອງ, ເພື່ອຊອກຫາມາດຕະການແກ້ໄຂທີ່ອາດຈະເກີດຂຶ້ນກັບບັນຫາ; ຫຼື
- ກໍລະນີທີ່ນຳສະເໜີແມ່ນບໍ່ຖືກຕ້ອງ, ຫຼື ຫຼັງຈາກໄດ້ປຶກສາກັບເຈົ້າໜ້າທີ່ແຫ່ງຊາດທີ່ກ່ຽວຂ້ອງແລ້ວ, ຈຸດຕິດຕໍ່ປາຍທາງ ຕັດສິນໃຈວ່າ ກົນໄກ ASSIST ບໍ່ແມ່ນຊ່ອງທາງທີ່ເໝາະສົມສຳລັບກໍລະນີນີ້, ແລະ ຄຳຮ້ອງທຸກກໍ່ຖືກປະຕິເສດ. ຜູ້ດູແລລະບົບ ແລະ ຈຸດຕິດຕໍ່ຕົ້ນທາງຈະໄດ້ຮັບການແຈ້ງໃຫ້ຊາບຜ່ານອີເມວ, ພ້ອມດ້ວຍເຫດຜົນທີ່ບອກວ່າ ເປັນຫຍັງຈຶ່ງປະຕິເສດຈາກຈຸດຕິດຕໍ່ປາຍທາງ.

ຂໍ້ມູນສໍາຄັນເພີ່ມເຕີມ

ກໍລະນີທີ່ນໍາສະເໜີແມ່ນບໍ່ຖືກຕ້ອງ, ຫຼື ຫຼັງຈາກໄດ້ປຶກສາກັບເຈົ້າໜ້າທີ່ແຫ່ງຊາດທີ່ກ່ຽວຂ້ອງແລ້ວນັ້ນ, ຈຸດຕິດຕໍ່ປາຍທາງຕັດສິນໃຈວ່າ ກົນໄກ ASSIST ບໍ່ແມ່ນຊ່ອງທາງທີ່ເໝາະສົມສໍາລັບກໍລະນີນີ້, ແລະ ຄໍາຮ້ອງທຸກກໍ່ຖືກປະຕິເສດ. ຜູ້ດູແລລະບົບ ແລະ ຈຸດຕິດຕໍ່ຕົ້ນທາງຈະໄດ້ຮັບການແຈ້ງໃຫ້ຊາບຜ່ານອີເມວ, ພ້ອມດ້ວຍເຫດຜົນວ່າ ເປັນຫັຍງຈຶ່ງໄດ້ຮັບປະຕິເສດຈາກຈຸດຕິດຕໍ່ປາຍທາງ.

ຄວາມຮັບຜິດຊອບຂອງຜູ້ດູແລລະບົບພ້ອມກັບຜົນໄດ້ຮັບ

ຄໍາຕອບ, ເຊັ່ນວ່າການແກ້ໄຂທີ່ຖືກແນະນໍາ, ທີ່ຈຸດຕິດຕໍ່ປາຍທາງສົ່ງໃຫ້ຜູ້ດູແລລະບົບ, ພາຍໃນ 30 ຫາ 50 ມື້ລັດຖະການ, ແລະ:

- ຜູ້ດູແລລະບົບໄດ້ທົບທວນຄໍາຕອບ ຫຼື ວິທີແກ້ໄຂທີ່ໄດ້ສະເໜີ, ໃນສະພາບທີ່ໃຫ້ຄໍາຕອບທີ່ໜ້າພໍໃຈຕໍ່ບັນຫາ ແລະ ອະທິບາຍໃນຄໍາຮ້ອງ ທຸກ.
- ສິ່ງນີ້ເຮັດໃຫ້ຜູ້ດູແລລະບົບມີໂອກາດຊອກຫາຄວາມກະຈ່າງແຈ້ງ, ຖ້າຈໍາເປັນ, ກ່ອນລົງທະບຽນວິທີການແກ້ໄຂ ຫຼື ຄໍາຕອບ, ແລະ ສົ່ງຕໍ່ຜົນທີ່ໄດ້ຮັບໃຫ້ວິສາຫະກິດອາຊຽນ (ເຊັ່ນ: ຜູ້ຮ້ອງທຸກ) ຫຼື ຜູ້ຕາງໜ້າໃນອາຊຽນ.
- ຜູ້ດູແລລະບົບ ກ່າວເຖິງຄໍາຕອບຂອງຈຸດຕິດຕໍ່ປາຍທາງຕໍ່ຄໍາຮ້ອງທຸກທີ່ສົ່ງກັບຄືນສູ່ວິສາຫະກິດອາຊຽນ (ຜູ້ຮ້ອງທຸກ) ຫຼື ຫນ່ວຍງານຕົວແທນໃນອາຊຽນ.

ຂໍ້ມູນສໍາຄັນເພີ່ມເຕີມ

ທຸກວິທີແກ້ໄຂ ຕ້ອງສອດຄ່ອງກັບຄວາມມຸ່ງໝັ້ນຂອງອາຊຽນທີ່ມີຢູ່ ແລະ ກົດໝາຍ ແລະ ກົດລະບຽບຂອງບັນດາປະເທດສະມາຊິກອາຊຽນ.

ການໃຫ້ຄໍາຕອບຈາກຜູ້ຮ້ອງທຸກໃນແບບສໍາຫຼວດຄວາມເພິ່ງພໍໃຈ

ຫຼັງຈາກຍື່ນສະເໜີວິທີການແກ້ໄຂໂດຍປະເທດສະມາຊິກອາຊຽນໂດຍຜ່ານ ASSIST ແລ້ວ, ວິສາຫະກິດອາຊຽນ (ເຊັ່ນ: ຜູ້ຮ້ອງທຸກ) ຫຼື ຫນ່ວຍງານຕົວແທນທີ່ອີງໃສ່ອາຊຽນໄດ້ຮັບການແຈ້ງທາງອີເມວ ແລະ ຂໍໃຫ້ຕອບກັບການສໍາຫຼວດຄວາມເພິ່ງພໍໃຈໂດຍກົດທີ່ YES/NO - ແມ່ນ/ບໍ່ແມ່ນ. ວິສາຫະກິດອາຊຽນ (ຕົວຢ່າງ: ຜູ້ຮ້ອງທຸກ) ຫຼື ຫນ່ວຍງານຕົວແທນໃນອາຊຽນຈະຖືກສົ່ງເຂົ້າເວັບໄຊທ໌ ASSIST ເພື່ອຕອບການສໍາຫຼວດ ແລະຖືກເຊີນໃຫ້ປະກອບຄໍາເຫັນ, ໂດຍສະເພາະ ຖ້າບໍ່ພໍໃຈ.

- ຫຼັງຈາກຍື່ນສະເໜີວິທີການແກ້ໄຂໂດຍປະເທດສະມາຊິກອາຊຽນໂດຍຜ່ານ ASSIST, ວິສາຫະກິດອາຊຽນ (ເຊັ່ນ: ຜູ້ຮ້ອງທຸກ) ຫຼື ຫນ່ວຍງານຕົວແທນໃນອາຊຽນໄດ້ຮັບການແຈ້ງທາງອີເມວ ແລະ ຂໍໃຫ້ຕອບກັບການສໍາຫຼວດຄວາມເພິ່ງພໍໃຈໂດຍກົດ YES/NO – ແມ່ນ/ບໍ່ແມ່ນ. ວິສາຫະກິດອາຊຽນ (ເຊັ່ນ: ຜູ້ຮ້ອງທຸກ) ຫຼື ຫນ່ວຍງານຕົວແທນໃນອາຊຽນຈະຖືກສົ່ງເຂົ້າເວັບໄຊທ໌ຂອງ ASSIST ເພື່ອຕອບການສໍາຫຼວດ ແລະ ຖືກເຊີນໃຫ້ປະກອບຄໍາເຫັນ, ໂດຍສະເພາະ ຖ້າບໍ່ພໍໃຈ (EDSM).
- ຜູ້ຮ້ອງທຸກຍັງສາມາດຕັດສິນໃຈດໍາເນີນຄະດີໃນກົນໄກແຫ່ງຊາດ ຫຼື ກົນໄກແກ້ໄຂຂໍ້ຂັດແຍ່ງໃນທາງເລືອກອື່ນ (ເຊັ່ນ: ການໄກ່ເກ່ຍ, ການປອງດອງກັນ ຫຼື ການຕັດສິນທີ່ດັດຂາດ) ພາຍໃນຂອບເຂດສິດອໍານາດທາງກົດໝາຍຂອງປະເທດໃນອາຊຽນ.



ຂໍ້ມູນສໍາຄັນເພີ່ມເຕີມ

ເມື່ອການແກ້ໄຂບັນຫາໃດໜຶ່ງຖືກສະເໜີ, ມັນເປັນສິ່ງສໍາຄັນທີ່ຈະຕ້ອງຈື່ໄວ້ວ່າ ASSIST ໄດ້ຖືກສ້າງຕັ້ງຂຶ້ນເປັນຂະບວນການປຶກສາຫາລືກ່ຽວກັບບັນ ດາປະເທດສະມາຊິກອາຊຽນ ແລະ ຄໍາແນະນໍາທີ່ໃຫ້ໄວ້ໃນການແກ້ໄຂບັນຫາທີ່ສະເພາະເຈາະຈົງ ແລະ ບໍ່ແມ່ນການຕັດສິນໃຈວ່າແມ່ນໃຜ ຖືກ ແລະ ຜິດ ຫຼື ກໍານົດຄວາມສອດຄ່ອງກັບກົດໝາຍອາຊຽນກັບກົດໝາຍ, ລະບຽບການ, ຂັ້ນຕອນ ແລະ/ຫຼື ການປະຕິບັດຂອງປະເທດສະມາຊິກອາຊຽນທີ່ຖືກຟ້ອງຮ້ອງໂດຍຜ່ານ ASSIST.

ນອກນັ້ນ, ຂໍ້ມູນຂ່າວສານທີ່ຜູ້ສະເໜີຮ້ອງຟ້ອງຈະຖືກນໍາໃຊ້ພາຍໃນ ASSIST ແລະ ຜູ້ກ່ຽວຂ້ອງທີ່ມີສ່ວນກ່ຽວຂ້ອງເພື່ອຈຸດປະສົງໃນການແກ້ໄຂຄໍາຮ້ອງທຸກສະເພາະຂອງ ASSIST. ຕ້ອງມີຂັ້ນຕອນທີ່ເໝາະສົມ ເພື່ອປົກປ້ອງຂໍ້ມູນທີ່ເປັນການຄ້າ ຫຼື ຂໍ້ມູນສ່ວນຕົວ ຕະຫຼອດເວລາ, ໂດຍສະເພາະໃນການໂອນຂໍ້ມູນຜ່ານເຄືອຂ່າຍອິນເຕີເນັດ.

ຜູ້ຮ້ອງຮຽນອາດຈະເລືອກທີ່ຈະຖອນຄໍາຮ້ອງທຸກໃນທຸກຂັ້ນຕອນຈົນກວ່າຈະມີການສະເໜີແກ້ໄຂໂດຍ ASSIST.

2. ສໍາລັບທະນາຍຄວາມ ຫຼື ບໍລິສັດກົດໝາຍທີ່ຈົດທະບຽນໃນອາຊຽນ

ຖ້າວ່າທະນາຍຄວາມ ຫຼື ບໍລິສັດກົດໝາຍຈົດທະບຽນໃນອາຊຽນ ຍື່ນຄໍາຮ້ອງທຸກໃນນາມລູກຄ້າຂອງຕົນ, ກ່ອນທີ່ຈະຍື່ນຄໍາຮ້ອງທຸກຕົວຈິງ ທະນາຍຄວາມ ຫຼື ບໍລິສັດກົດໝາຍ ຕ້ອງດາວໂລດຟອມທີ່ຈໍາເປັນຈາກເວັບໄຊທ໌ຂອງ ASSIST ໃນໜ້າເວັບທີ່ມີຫົວຂໍ້ ' File a Complaint: ASEAN Lawyer or Law Firm - ຍື່ນຄໍາຮ້ອງທຸກ: ທະນາຍຄວາມ ຫຼື ບໍລິສັດກົດໝາຍອາຊຽນ' ຫຼື ຕາມລິ້ງນີ້: (http://assist.asean.org/complaint/?m=42&type=law), ດັ່ງທີ່ສະເໜີໄວ້ຂ້າງລຸ່ມນີ້.

ຍື່ນສະເໜີ ແບບຟອມທີ່ບໍ່ຕ້ອງລະບຸຊື່ ແລະ ເອກະສານອື່ນໆທີ່ຕ້ອງການໃຫ້ກອງເລຂາອາຊຽນ/ຜູ້ດູແລລະບົບ ASSIST

ເມື່ອທະນາຍຄວາມ ຫຼື ບໍລິສັດກົດໝາຍປະກອບຟອມແລ້ວ, ຕ້ອງຖືກສົ່ງຜ່ານທາງອີເມວໄປທີ່ກອງເລຂາອາຊຽນ ທີ່: assist@asean.org, ພ້ອມດ້ວຍ: (i) ເອກະສານການວິງທະບຽນ/ໃບອະນຸຍາດທີ່ການປະກອບອາຊີບຂອງທະນາຍຄວາມ ຫຼື ບໍລິສັດກົດໝາຍ (ຖ້າພາສາເດີມບໍ່ແມ່ນພາສາອັງກິດ, ກ່ຄວນຄັດຕິດການແປດບັນພາສາອັງກິດແບບບໍ່ເປັນທາງການມາພ້ອມ) ແລະ (ii) ເອກະສານຈົດທະບຽນບໍລິສັດ/ທຸລະກິດຂອງລູກຄ້າ (ວິສາຫະກິດອາຊຽນ) ໃນນາມຜູ້ທີ່ມີຄໍາຮ້ອງທຸກທີ່ບໍ່ລະບຸຊື່.

Form to be used by ASEAN-based Lawyers or Law Firms
to file an '*anonymous*' complaint on behalf of an ASEAN Enterprise

Special rules apply to complaints filed by ASEAN-based registered lawyers or law firms. In particular, ahead of submitting an ASSIST complaint on behalf of a client, which must be a duly registered ASEAN enterprise based in one the of the 10 ASEAN Member States, an ASEAN-based lawyer or law firm (i.e., a lawyer or law firm duly licensed to practice law in the ASEAN Member State where the client is based or against which the complaint is filed) must contact the ASEAN Secretariat and provide the required data on its professional registration and on the client on whose behalf the anonymous complaint is filed. assist@asean.org

LAWYER

- Gender:
- First Name:
- Last Name:
- Title/Position:
- Address:
- Zip code: City:
- Phone: E-mail:
- ASEAN Jurisdiction(s) where Admitted to Practice Law (country):

LAW FIRM

- Name:
- Address:
- Zip code: City:
- Phone: E-mail:
- Website:
- ASEAN Jurisdiction(s) where Local Office(s) is(are) Established (country):

PROFESSIONAL LICENCE

Please attach the Professional Licence (e.g., issued by the Government, Lawyers' Bar, Law Society, declaration by Attorney General's Chamber, etc.) for the individual lawyer showing the ability to practice law in the relevant ASEAN jurisdiction(s). Should there be no such Professional Licence, a sworn declaration should be submitted by the Lawyer or Law Firm indicating that the individual Lawyer is admitted to practice law in the relevant ASEAN jurisdiction(s). The document can be attached in PDF format in the original language. If the original language is other than English, an unofficial translation into English should also be attached and submitted to the ASEAN Secretariat.

DETAILS OF ASEAN ENTERPRISE

- ASEAN Enterprise Name:
- Company Size:
- Address:
- Zip code: City:
- Phone: E-mail:
- Website:
- Country of Legal Registration:
- Registration Number:
- Company Registration Proof: *To be attached to the email*

ກອງເລຂາ ASEAN ຕອບກັບ

ກອງເລຂາອາຊຽນຕອບກັບຄືນໄປຫາບັນດາທະນາຍຄວາມ ຫຼື ບໍລິສັດກົດໝາຍຈົດທະບຽນໃນອາຊຽນວ່າ ເອກະສານທີ່ສົ່ງມານັ້ນໄດ້ປະຕິບັດຕາມຄວາມຮຽກຮ້ອງຕ້ອງການ ແລະ ຄົບຖ້ວນ ຫຼືບໍ່.

- ຖ້າເອກະສານຄົບຖ້ວນແລ້ວ, ກອງເລຂາອາຊຽນໃຫ້ລະຫັດລັບ (CCC) ໂດຍທາງອີເມລຫາທະນາຍຄວາມ ຫຼື ບໍລິສັດກົດໝາຍ, ເພື່ອໃຫ້ນຳເອົາຄຳຮ້ອງທຸກຕົວຈິງເຂົ້າໄປໃນລະບົບໄດ້.

- ຖ້າເອກະສານບໍ່ຄົບຖ້ວນ, ກອງເລຂາອາຊຽນຈະຮ້ອງຂໍໃຫ້ທະນາຍຄວາມ ຫຼື ບໍລິສັດກົດໝາຍສົ່ງເອກະສານທີ່ຈຳເປັນທີ່ຍັງຂາດໄປໃຫ້ຕື່ມອີກ.

ການຍື່ນ ຄຳຮ້ອງທຸກທີ່ຕົວຈິງ

ທະນາຍຄວາມ ຫຼື ບໍລິສັດກົດໝາຍຈົດທະບຽນໃນອາຊຽນໄດ້ກະກຽມ ແລະ ຍື່ນຄຳຮ້ອງທຸກໂດຍໃຊ້ແບບຟອມການຮ້ອງທຸກທາງອິນເຕີເນັດທີ່ມີຢູ່ໃນເວັບໄຊທ໌ຂອງ ASSIST: http://assist.asean.org ທີ່ຢູ່ໃນໄອຄອນ 'ASEAN Lawyer or Law Firm - ທະນາຍຄວາມ ຫຼື ບໍລິສັດກົດໝາຍອາຊຽນ' ຢູ່ໃນແຖບເມນູ ' File a Complaint - ຍື່ນຄຳຮ້ອງທຸກ' . ລາຍລະອຽດການປ້ອນຂໍ້ມູນແມ່ນຖືກກວດສອບໂດຍລະບົບ ເພື່ອຮັບປະກັນວ່າຂໍ້ມູນທີ່ຈຳເປັນນັ້ນຄົບຖ້ວນແລ້ວ.

ຂໍ້ມູນສຳຄັນເພີ່ມເຕີມ

ຕ້ອງໃສ່ລະຫັດລັບຂອງກ່ຽວນິ (CCC) ທີ່ກອງເລຂາອາຊຽນສະໜອງໃຫ້ ເຂົ້າໃນຄຳຮ້ອງທຸກຕົວຈິງພາຍໃຕ້ພາກທີ່ລະບຸໄວ້ໃນຫົວຂໍ້ "Complaint Description - ຄຳອະທິບາຍຄຳຮ້ອງທຸກ" ຂອງແບບຟອມ.

ທະນາຍຄວາມ ຫຼື ບໍລິສັດກົດໝາຍທີ່ລົງທະບຽນໃນອາຊຽນ ອາດຈະສືບຕໍ່ ດຳເນີນການຂອງASSIST ໂດຍປະຕິບັດຕາມຂັ້ນຕອນດຽວກັນໃນການແກ້ໄຂຄຳຮ້ອງທຸກສຳລັບວິສາຫະກິດອາຊຽນ ແລະ ຜູ້ຕາງໜ້າໃນອາຊຽນ, ດັ່ງທີ່ໄດ້ລະບຸໄວ້ຂ້າງເທິງນັ້ນ.

C. ແຜນຜັງລຳດັບຂັ້ນຕອນດຳເນີນການຂອງ ASSIST

ແຜນຜັງລຳດັບຂັ້ນຕອນດຳເນີນການທັງສອງຂ້າງລຸ່ມນີ້ ສະແດງໃຫ້ເຫັນຂັ້ນຕອນພື້ນຖານໃນການຈັດການການຮ້ອງທຸກ. ແຜນຜັງຮູບທຳອິດສະແດງເຖິງຂັ້ນຕອນໃນການຈັດການຄຳຮ້ອງທຸກທີ່ຖືກສົ່ງໂດຍວິສາຫະກິດອາຊຽນ ຫຼື ອົງການຕົວແທນທີ່ຂຶ້ນກັບອາຊຽນ, ໃນຂະນະທີ່ແຜນ ຜັງຮູບທີສອງສະແດງໃຫ້ເຫັນເຖິງຂັ້ນຕອນໃນການຈັດການກັບຄຳຮ້ອງທຸກໂດຍທະນາຍຄວາມ ຫຼື ບໍລິສັດກົດໝາຍຈົດທະບຽນໃນອາຊຽນ.

ຮູບ 2.

ຄຳຮ້ອງທຸກຍື່ນໂດຍວິສາຫະກິດອາຊຽນ ຫຼື ຫນ່ວຍງານຕົວແທນໃນອາຊຽນ



ຮູບ 3.

ການຮ້ອງທຸກຍື່ນໂດຍທະນາຍຄວາມ ຫຼື ບໍລິສັດກົດໝາຍທີ່ຈົດທະບຽນໃນອາຊຽນ



D. ກຳນົດເວລາການຈັດການກັບຄຳຮ້ອງທຸກ

ຄວາມຄືບໜ້າໃນການຈັດການຄຳຮ້ອງທຸກຖືກຕິດຕາມແລະຄາດວ່າຈະຕອບສະໜອງຕາມກຳນົດເວລາດັ່ງຕໍ່ໄປ:

- ການຕັດສິນໃຈຂອງຜູ້ດູແລລະ ບົບໃນການ ຍອມຮັບ,ການຮ້ອງຂໍໃຫ້ແກ້ໄຂ (ບໍ່ຄົບຖ້ວນ) ຫຼື ປະຕິເສດຄຳຮ້ອງທຸກ.
- ຈຸດຕິດຕໍ່ປາຍທາງເພື່ອ ຕັດສິນວ່າຈະຍອມຮັບ ຫຼື ປະຕິເສດຄຳຮ້ອງທຸກ ດັ່ງກ່າວ.
- ຖ້າຄຳຮ້ອງທຸກຖືກຍອມຮັບ, ຈຸດຕິດຕໍ່ປາຍທາງຕ້ອງໄດ້ຮັບ ຄຳຕອບ/ວິທີແກ້ໄຂຈາກເຈົ້າ ໜ້າທີ່ກ່ຽວຂ້ອງລະດັບຊາດ ແລະ ຕອບກັບຫາຜູ້ດູແລ ລະບົບ, ເພື່ອສົ່ງຄຳຕອບໄປ ໃຫ້ຜູ້ຮ້ອງທຸກ.
- ຈຸດຕິດຕໍ່ປາຍທາງ ອາດຈະຮ້ອງ ຂໍໃຫ້ຜູ້ດູແລລະບົບຕໍ່ເວລາ ຖ້າວ່າ ບໍ່ສາມາດດຳ ເນີນການໄດ້ ພາຍໃນ 30 ມື້ລັດຖະການ

1. ການຕໍ່ເວລາ

ໃນສະຖານະການທີ່ອົງການລະດັບຊາດທີ່ກ່ຽວຂ້ອງ, ພາຍໃນປະເທດສະມາຊິກຕໍ່ກັບຄຳຮ້ອງທຸກທີ່ຍື່ນມາ, ພວມຊອກຫາວິທີແກ້ໄຂບັນ ຫາການຄ້າທີ່ຜູ້ຮ້ອງທຸກກຳລັງປະເຊີນຢູ່, ແລະ ບໍ່ສາມາດດຳເນີນການໃຫ້ທັນເວລາ 30 ມື້ຕາມຜູ້ດູແລລະບົບຂອງ ASSIST ກຳນົດໄວ້. ເນື່ອງຈາກບັນຫາມີຄວາມສັບສົນ ແລະ ຮຽກຮ້ອງໃຫ້ມີການປຶກສາຫາລືກັບເຈົ້າໜ້າທີ່ພາຍໃນປະເທດ ເພີ່ມເຕີມ, ຈຸດຕິດຕໍ່ປາຍທາງ ອາດຈະຂໍຕໍ່ເວລາຕື່ມ.

- ຜູ້ດູແລລະບົບ ອາດຈະຕໍ່ກຳນົດເວລາເຖິງ 20 ມື້ລັດຖະການ ຕາມການຮ້ອງຂໍຂອງຈຸດຕິດຕໍ່ປາຍທາງ.
- ກຳນົດເວລາທີ່ໄດ້ກຳນົດນີ້ຈະບໍ່ເປັນການເພີ່ມໄລຍະເວລາທັງໝົດຂອງເວລາທີ່ຈັດສັນໃຫ້ປະເທດປາຍທາງ ເພື່ອໃຫ້ການແກ້ໄຂຫຼາຍກວ່າ 50 ມື້ລັດຖະການ ນັບແຕ່ເວລາທີ່ຄຳຮ້ອງທຸກໄດ້ຮັບການຍອມຮັບຈາກຈຸດຕິດຕໍ່ປາຍທາງ.
- ການຕໍ່ກຳນົດເວລາເພີ່ມຈະຖືກບັນທຶກໄວ້ພາຍໃນລະບົບ ແລະ ຜູ້ດູແລລະບົບແຈ້ງຈຸດຕິດຕໍ່ຈຸດຕິດຕໍ່ປາຍທາງ ກ່ຽວກັບ ກຳນົດເວລາ ໃໝ່ນີ້ ເພື່ອໃຫ້ສາມາດສົ່ງການແກ້ໄຂໃຫ້ທັນການ.
- ໃນການຕໍ່ກຳນົດເວລາເພີ່ມ, ຂັ້ນຕອນດຳເນີນການຂອງASSIST ທັງໝົດບໍ່ຄວນກາຍ 60 ມື້ລັດຖະການ ນັບແຕ່ເມື່ອຄຳ ຮ້ອງທຸກໄດ້ຮັບການຍອມຮັບຈາກຜູ້ດູແລລະບົບ.

2. ການຕິດຕາມການດຳເນີນການທີ່ເກີນກຳນົດ

ເມື່ອການດຳເນີນການບາງຢ່າງຖືກປະຕິບັດເກີນກຳນົດໂດຍຜູ້ດູແລລະບົບ ຫຼື ໂດຍຈຸດຕິດຕໍ່ ປາຍທາງ, ຫຼື ຄຳເຕືອນທີ່ຈຳເປັນກ່ຽວກັບການດຳເນີນການທີ່ຕ້ອງປະຕິບັດພາຍໃນໄລຍະເວລາ ທີ່ຄາດວ່າຈະທັນເວລານັ້ນ, ຄຳເຕືອນສີເຫຼືອງ ຫຼື ສີແດງ, ດັ່ງທີ່ເຫັນໃນບ່ອນນີ້ແມ່ນຈະສະແດງ ໃຫ້ເຫັນຢູ່ໃນ dashboards ຂອງຜູ້ດູແລລະບົບ ຫຼື ຈຸດຕິດຕໍ່ປາຍທາງ, ລວມທັງການສະແດງ ສະຖານະຂອງຄຳຮ້ອງທຸກຂອງຜູ້ຮ້ອງ ທຸກໂດຍຜ່ານການເຂົ້າເຖິງເວັບໄຊທ໌.

ການແຈ້ງເຕືອນອັດຕະໂນມັດຜ່ານທາງອີເມລຈາກລະບົບ ASSIST ຍັງຖືກສົ່ງໄປຫາຜູ້ດູແລລະບົບ ແລະ ຈຸດຕິດຕໍ່ຈຸດປາຍທາງ, ພ້ອມດ້ວຍສຳເນົາທີ່ສົ່ງໄປເຖິງຈຸດຕິດຕໍ່ຕົ້ນທາງ, ຖ້າວ່າບໍ່ມີການດຳເນີນການໃດໆຈາກຜູ້ດູແລລະບົບ ແລະ/ຫຼື ຈຸດຕິດຕໍ່ປາຍທາງ ພາຍໃນກຳນົດເວລາທີ່ໄດ້ກຳນົດໄວ້ສຳລັບການກະທຳທີ່ແນ່ນອນ.

- ຖ້າວ່າໄດ້ຮັບຄຳຮ້ອງທຸກແລ້ວ, ຜູ້ດູແລລະບົບຈະບໍ່ຕິດຕໍ່ກັບຄືນຫາຜູ້ຮ້ອງທຸກພາຍໃນ 10 ມື້ວັດຖະການ ຫຼັງຈາກໄດ້ຍື່ນຄຳຮ້ອງທຸກເຂົ້າມາແລ້ວ, ຜູ້ດູແລລະບົບຈະໄດ້ຮັບຄຳເຕືອນໂດຍອັດຕະໂນມັດຜ່ານອີເມວຈາກ ASSIST ພາຍໃນ 7 ມື້ຕາມມື້ປະຕິທິນ ຫຼັງຈາກໄດ້ຍື່ນຄຳຮ້ອງທຸກເຂົ້າມາແລ້ວ. ຜູ້ດູແລລະບົບຕ້ອງຕັດສິນໃຈວ່າຈະຍອມຮັບ, ຮ້ອງຂໍໃຫ້ແກ້ໄຂ (ບໍ່ຄົບຖ້ວນ), ຫຼື ປະຕິເສດຄຳຮ້ອງທຸກພາຍໃນ 10 ມື້ວັດຖະການ.

- ຖ້າວ່າ ຜູ້ດູແລລະບົບຍັງບໍ່ໄດ້ໃຫ້ຄຳຕອບຕໍ່ຜູ້ຮ້ອງທຸກ, ຜູ້ດູແລລະບົບຈະໄດ້ຮັບຄຳເຕືອນອັດຕະໂນມັດອີກທາງໜຶ່ງຜ່ານອີເມວ ຈາກ ASSIST, ພາຍໃນ 14 ມື້ຕາມມື້ປະຕິທິນ ຫຼັງຈາກມີຄຳຮ້ອງທຸກເຂົ້າມາແລ້ວ, ແຈ້ງໃຫ້ຜູ້ດູແລລະບົບຊາບວ່າ ຈະຕ້ອງ ດຳເນີນການທີ່ຈິງຈັງດັ່ງກ່າວຕາມລຳດັບ ເພື່ອສືບຕໍ່ດຳເນີນການໃນລະບົບຂອງ ASSIST.



ຕົວຢ່າງຂອງການແຈ້ງເຕືອນທາງອີເມວຕໍ່ຜູ້ດູແລລະບົບວ່າການດຳເນີນການແມ່ນເກີນກຳນົດ*ແລ້ວ.*

- ຖ້າຄຳຮ້ອງທຸກໄດ້ຮັບການຍອມຮັບຈາກຜູ້ດູແລລະບົບ ແລະ ສົ່ງຕໍ່ໄປທີ່ຈຸດຕິດຕໍ່ປາຍທາງແລ້ວ, ແຕ່ຈຸດຕິດຕໍ່ປາຍທາງບໍ່ໄດ້ ຕອບກັບພ້ອມດ້ວຍຄຳຕອບພາຍໃນ 10 ມື້ວັດຖະການ, ຈຸດຕິດຕໍ່ປາຍທາງຈະໄດ້ຮັບການແຈ້ງເຕືອນອັດຕະໂນມັດຜ່ານອີ ເມວຈາກ ASSIST ພາຍໃນ 7 ມື້ຕາມມື້ປະຕິທິນ ຫຼັງຈາກຄຳຮ້ອງທຸກໄດ້ຮັບການຍອມຮັບຈາກຜູ້ຜູ້ດູແລລະບົບແລ້ວ. ຈຸດ ຕິດຕໍ່ປາຍທາງ ຕ້ອງຕັດສິນໃຈວ່າ ຈະຍອມ ຮັບ ຫຼື ປະຕິເສດຄຳຮ້ອງທຸກພາຍໃນ 10 ມື້ວັດຖະການ ຫຼືບໍ່.

- ຖ້າຈຸດຕິດຕໍ່ປາຍທາງຍັງບໍ່ໄດ້ໃຫ້ຄຳຕອບ, ຈຸດຕິດຕໍ່ປາຍທາງຈະໄດ້ຮັບການແຈ້ງເຕືອນໂດຍອັດຕະໂນມັດອີກທາງໜຶ່ງຜ່ານອີ ເມວຈາກ ASSISTພາຍໃນ 14 ມື້ຕາມມື້ປະຕິທິນ ຫຼັງຈາກມີການຮ້ອງທຸກຊຶ່ງຕ້ອງແຈ້ງໃຫ້ຈຸດຕິດຕໍ່ປາຍທາງວ່າ ຕ້ອງມີການ ດຳເນີນການຕາມລຳ ດັບ ເພື່ອສືບຕໍ່ຕອນດຳເນີນການຂອງ ASSIST.



ຕົວຢ່າງຂອງການແຈ້ງເຕືອນທາງອີເມວຕໍ່ຈຸດຕິດຕໍ່ປາຍທາງວ່າການດຳເນີນການແມ່ນເກີນກຳນົດແລ້ວ.

ຂໍ້ມູນສໍາຄັນເພີ່ມເຕີມ

ກອບເວລາໃນການແກ້ໄຂບັນຫາແບບຂ້າມເຂດແດນທີ່ນໍາມາພາຍໃຕ້ ASSIST ຈະຕ້ອງບໍ່ເກີນ 30 ມື້ລັດຖະການ (ເວັ້ນເສຍແຕ່ຈະມີການຕໍ່ກໍານົດເວລາສູງສຸດ 20 ມື້ລັດຖະການ) ນັບແຕ່ມື້ທີ່ຈຸດຕິດຕໍ່ປາຍທາງຍອມຮັບເອົາຄໍາຮ້ອງທຸກແລ້ວ (ເຊັ່ນ: ປະເທດສະມາຊິກອາຊຽນຕໍ່ກັບຄໍາຮ້ອງທຸກທີ່ໄດ້ຍື່ນ).

ເອກະສານຊຸ້ອນທ້າຍ 2 'ແຜນຜັງວ່າດ້ວຍຂັ້ນຕອນດໍາເນີນການຂອງກົນໄກ ASSIST ແລະ ໄລຍະເວລາທີ່ກ່ຽວຂ້ອງ' ຂອງຄູ່ມືນີ້ໄດ້ໃຫ້ລາຍລະອຽດ ແຕ່ກໍ່ງ່າຍຕໍ່ການຕິດຕາມຄໍາອະທິບາຍຂອງຂັ້ນຕອນຂອງ ASSIST.

E. ຜູ້ຮ້ອງທຸກອາດສາມາດຕິດຕາມຄວາມຄືບໜ້າຂອງການຮ້ອງທຸກ

ເພື່ອຕິດຕາມຄວາມຄືບໜ້າຂອງການຮ້ອງທຸກ, ໃຫ້ເລືອກຄລິກແຖບເມນູ 'Follow a Complaint - ຕິດຕາມຄໍາຮ້ອງທຸກ' ຈາກໜ້າເວັບ http://assist.asean.org, ແລະ ໜ້າຕໍ່ໄປນີ້ຈະປາກົດ. ຜູ້ຮ້ອງທຸກສາມາດເຂົ້າສູ່ລະບົບໂດຍໃຊ້ທີ່ຢູ່ອີເມວທີ່ມີ ແລະ ໝາຍເລກຕິດຕາມທີ່ໄດ້ຮັບເພື່ອຢືນຢັນຂໍ້ຄວາມຍື່ນຄໍາຮ້ອງທຸກ.



ໂດຍນໍາໃຊ້ໝາຍເລກຕິດຕາມ, ລະບົບຈະສະແດງໃຫ້ຜູ້ຮ້ອງທຸກໃຫ້ເຫັນລາຍລະອຽດຂອງການຮ້ອງທຸກ ແລະ ຂັ້ນຕອນການດໍາເນີນການຂອງ ASSIST ໃນ dashboard ຂອງ ASSIST ຂອງຜູ້ຮ້ອງທຸກ.

ໃນ ຕົວຢ່າງທີ່ສະແດງໃນໜ້າຈໍ ASSIST ຂອງຜູ້ຮ້ອງທຸກຕໍ່ໄປນີ້, ຊຶ່ງນໍາໃຊ້ຂໍ້ມູນທີ່ສົມມຸດຂຶ້ນມາເພື່ອເປັນການສອນເພີ່ມ, ການຮ້ອງທຸກແມ່ນເນັ້ນໄປໃນກໍລະນີນີ້ຕໍ່ ບັນຫາການຄ້າກັບປະເທດສະມາຊິກອາຊຽນ-Y (AMS-Y). ຜູ້ຮ້ອງທຸກແມ່ນຕົວແທນໂດຍທະນາຍຄວາມທີ່ຈົດທະບຽນໃນອາ ຊຽນ ເພາະວ່າ ເປັນລູກຄ້າຂອງຕົນ, ເປັນທຸລະກິດທີ່ຈົດທະບຽນຖືກຕ້ອງໃນ AMS-X (ເຊັ່ນ, ວິສາຫະກິດອາຊຽນ) ທີ່ບໍ່ຢາກລະບຸຊື່

- ຄຳຮ້ອງທຸກໄດ້ຮັບຮູ້ວ່າໄດ້ຮັບໂດຍ ASSIST, ໂດຍທາງຂໍ້ຄວາມອີເມວ;
- ພາຍຫຼັງການກວດກາໃນເບື້ອງຕົ້ນຂອງຜູ້ດູແລລະບົບ, ຊຶ່ງເຫັນວ່າຄຳຮ້ອງທຸກບໍ່ຄົບຖ້ວນ (ຍ້ອນເຫດຜົນທີ່ລະບຸໄວ້ໃນອີເມວເຖິງຜູ້ຮ້ອງຮຽນ) ແລະ ຜູ້ດູແລລະບົບໄດ້ຮຽກຮ້ອງໃຫ້ທະນາຍຄວາມທີ່ຈົດທະບຽນໃນອາຊຽນ ປັບປຸງແກ້ໄຂຄຳຮ້ອງທຸກ ແລະ ໃຫ້ຂໍ້ມູນເພີ່ມເຕີມ;
- ຄຳຮ້ອງທຸກໄດ້ຖືກປັບປຸງແລະ ນຳສະເໜີໂດຍທະນາຍຄວາມໃນອັນດຽວກັນ; ແລະ
- ສະຖານະພາບຂອງຄຳຮ້ອງທຸກຍັງຢູ່ໃນຂັ້ນຕອນນີ້ (ອີງຕາມປະຫວັດຂອງຄຳຮ້ອງທຸກ) ກັບຜູ້ດູແລລະບົບເພື່ອການກວດສອບຄວາມຄົບຖ້ວນແລະການຍອມຮັບ.



ຕົວຢ່າງຂອງ dashboard ຂອງ ASSIST ຂອງຜູ້ຮ້ອງທຸກໃນການເບິ່ງສະຖານະຂອງການຮ້ອງທຸກ.

ເອກະສານຊ້ອຍທ້າຍ 1.
ຕາຕະລາງອ້າງອີງ

1.1. ລາຍຊື່ສິນຄ້າຍ່ອຍ[1]

2.4.1. Sub—Categories of Goods

I. ສິນຄ້າ

1. <u>ມາດຕະການກ່ຽວຂ້ອງກັບອັດຕາພາສີ</u>

2. <u>ກົດລະບຽບຂອງຕົ້ນກຳເນີດ</u>

3. <u>ມາດຕະການທີ່ບໍ່ແມ່ນພາສີ</u>

3.1 ມາດຕະການສຸຂາອະນາໄມ ແລະ ສຸຂາອະນາໄມພືດ

3.1.1 ຂໍ້ຫ້າມ ແລະ ຂໍ້ຈຳກັດການນຳເຂົ້າສຳລັບເຫດຜົນ SPS

3.1.2 ຂໍ້ຈຳກັດໃນການອິດທິນຕໍ່ສິ່ງເສດເຫຼືອແລະການໃຊ້ສານທີ່ຈຳກັດ

3.1.3 ຂໍ້ກຳນົດດ້ານປ້າຍ, ເຄື່ອງໝາຍ ແລະ ການບັນຈຸຫຸ້ມຫໍ່

3.1.4 ຂໍ້ກຳນົດ ດ້ານສຸຂະອະນາໄມ

3.1.5 ການຮັກສາການກຳຈັດສັດຕູພືດແລະສັດແລະສິ່ງທີ່ກໍ່ໃຫ້ເກີດພະຍາດໃນຜະລິດຕະພັນສຸດທ້າຍ (ຕົວຢ່າງ: ການຮັກສາຫຼັງການເກັບກ່ຽວ)

3.1.6 ຂໍ້ກຳນົດອື່ນໆກ່ຽວກັບໃນຂັ້ນຕອນການຜະລິດ ຫຼື ຫຼັງການຜະລິດ

3.1.7 ການປະເມີນຄວາມສອດຄ່ອງທີ່ກ່ຽວຂ້ອງກັບ SPS

3.1.8 ມາດຕະການ SPS ທີ່ບໍ່ໄດ້ກຳນົດໄວ້ຢູ່ບ່ອນອື່ນ

3.2 ສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ

3.2.1 ຂໍ້ຫ້າມ ຫຼື ຂໍ້ຈຳກັດການນຳເຂົ້າສຳລັບເຫດຜົນຂອງ TBT

3.2.2 ຂໍ້ຈຳກັດຄວາມທົນທານຕໍ່ສິ່ງເສດເຫຼືອແລະການໃຊ້ສານທີ່ຈຳກັດ

3.2.3 ຂໍ້ກຳນົດດ້ານປ້າຍ, ເຄື່ອງໝາຍ ແລະ ການບັນຈຸຫຸ້ມຫໍ່

3.2.4 ຂໍ້ກຳນົດໃນການຜະລິດ ຫຼື ຫຼັງການຜະລິດ

3.2.5 ຂໍ້ກຳນົດກ່ຽວກັບເອກະລັກຂອງຜະລິດຕະພັນ

3.2.6 ຂໍ້ກຳນົດດ້ານຄຸນນະພາບຂອງຜະລິດຕະພັນ ຫຼື ການປະຕິບັດວຽກ

3.2.7 ການປະເມີນຄວາມສອດຄ່ອງທີ່ກ່ຽວຂ້ອງກັບTBT

3.2.8 ມາດຕະການ TBT ບໍ່ໄດ້ຖືກກຳນົດໄວ້ຢູ່ບ່ອນອື່ນ

3.3 ການກວດກາກ່ອນການຂົນສົ່ງ ແລະ ຮູບແບບອື່ນໆ

3.3.1 ການກວດກາກ່ອນການຂົນສົ່ງ

3.3.2 ຂໍ້ກຳນົດໂດຍກົງດ້ານການຂົນສົ່ງ

3.3.3 ຂໍ້ກຳນົດການຜ່ານດ່ານພາສີທີ່ໄດ້ກຳນົດໄວ້

3.3.4 ຂໍ້ກຳນົດການຕິດຕາມກວດກາການນຳເຂົ້າ ແລະ ການຕິດຕາມກວດກາ ແລະ ມາດຕະການການອອກໃບອະນຸຍາດແບບອັດຕະໂນມັດອື່ນໆ

3.3.5 ຮູບແບບອື່ນໆທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນອື່ນ

---

1 ການຈັດປະເພດນີ້ແມ່ນອີງໃສ່ການຈັດແບ່ງປະເພດທີ່ສະເໜີແລະຮັບຮອງເພື່ອນຳໃຊ້ເຂົ້າໃນສູນການຄ້າອາຊຽນ, ດ້ວຍຄວາມເຄົາລົບເພື່ອແຈ້ງການພັນທະຕາມມາດຕາ *13* ຂອງ ATIGA.

3.4 ມາດຕະການປົກປ້ອງການຄ້າທີ່ອາດຈະເກີດຂຶ້ນ

3.4.1 ມາດຕະການປ້ອງກັນພະຍາດ
3.4.2 ມາດຕະການຕ້ານທານ
3.4.3 ມາດຕະການປົກປ້ອງ

3.5 ການອອກໃບອະນຸຍາດທີ່ບໍ່ແມ່ນອັດຕະໂນມັດ, ໂຄຕ້າ, ຂໍ້ຫ້າມ, ແລະມາດຕະການຄວບຄຸມປະລິມານນອກເໜືອຈາກເຫດຜົນຂອງ SPS ຫຼື TBT

3.5.1 ຂັ້ນຕອນການອອກໃບອະນຸຍາດນຳເຂົ້າແບບອັດຕະໂນມັດນອກເໜືອຈາກການອະນຸຍາດສຳລັບເຫດຜົນ SPS ຫຼື TBT
3.5.2 ໂຄຕ້າ
3.5.3 ຂໍ້ຫ້າມຕ່າງງນອກເໜືອຈາກເຫດຜົນຂອງ SPS ແລະ TBT
3.5.4 ການຈັດລະບຽບຄວບຄຸມການສົ່ງອອກ
3.5.5 ໂຄຕາອັດຕາພາສີ (TRQs)
3.5.6 ມາດຕະການຄວບຄຸມປະລິມານທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນອື່ນ

3.6 ມາດຕະການຄວບຄຸມລາຄາລວມທັງພາສີແລະຄ່າບໍລິການເພີ່ມເຕີມ

3.6.1 ມາດຕະການບໍລິຫານສົ່ງຜົນກະທົບຕໍ່ມູນຄ່າຂອງພາສີສິນຄ້າເຂົ້າ-ອອກ
3.6.2 ຂໍ້ຈຳກັດດ້ານລາຄາສົ່ງອອກໂດຍສະໝັກໃຈ (VEPRs)
3.6.3 ຄ່າບໍລິການຕົວປ່ຽນແປງ
3.6.4 ການເກັບຄ່າພາສີ
3.6.5 ໜ້າທີ່ຕາມລະດູການ
3.6.6 ອາກອນ ແລະ ຄ່າບໍລິການເພີ່ມເຕີມທີ່ຕິດພັນກັບການບໍລິການທີ່ລັດຖະບານສະໜອງໃຫ້
3.6.7 ພາສີພາຍໃນ ແລະ ຄ່າບໍລິການຄິດໄລ່ການນຳເຂົ້າ
3.6.8 ດຳລັດການປະເມີນມູນຄ່າແຈ້ງພາສີ
3.6.9 ມາດຕະການຄວບຄຸມລາຄາທີ່ບໍ່ໄດ້ກຳນົດໄວ້ຢູ່ບ່ອນອື່ນ

3.7 ມາດຕະການດ້ານການເງິນ

3.7.1 ຂໍ້ກຳນົດການຈ່າຍເງິນລ່ວງໜ້າ
3.7.2 ຫຼາຍອັດຕາແລກປ່ຽນ
3.7.3 ລະບຽບກ່ຽວກັບການຈັດສັນເງິນຕາຕ່າງປະເທດຢ່າງເປັນທາງການ
3.7.4 ລະບຽບການກ່ຽວກັບເງື່ອນໄຂການຈ່າຍເງິນສຳລັບການນຳເຂົ້າ
3.7.5 ມາດຕະການການເງິນທີ່ບໍ່ໄດ້ລະບຸໄວ້ຢູ່ບ່ອນອື່ນ

3.8 ມາດຕະການທີ່ສົ່ງຜົນກະທົບຕໍ່ການແຂ່ງຂັນ

3.8.1 ວິສາຫະກິດການຄ້າຂອງລັດ, ສຳລັບການນຳເຂົ້າ; ຊ່ອງທາງການນຳເຂົ້າອື່ນໆທີ່ເລືອກ
3.8.2 ການນຳໃຊ້ການບໍລິການແຫ່ງຊາດແບບບັງຄັບ
3.8.3 ມາດຕະການທີ່ສົ່ງຜົນກະທົບຕໍ່ການແຂ່ງຂັນທີ່ບໍ່ໄດ້ກຳນົດໄວ້ຢູ່ບ່ອນອື່ນ

3.9 ມາດຕະການລົງທຶນທີ່ກ່ຽວຂ້ອງກັບການຄ້າ (TRIMs)

3.9.1 ມາດຕະການດ້ານເນື້ອໃນຂອງທ້ອງຖິ່ນ
3.9.2 ມາດຕະການດຸ່ນດ່ຽງການຄ້າ
3.9.3 ມາດຕະການລົງທຶນທີ່ກ່ຽວຂ້ອງກັບການຄ້າທີ່ບໍ່ໄດ້ກຳນົດໄວ້ຢູ່ບ່ອນອື່ນ

3.10 ຂໍ້ຈຳກັດການແຈກຢາຍ

3.10.1 ຂໍ້ຈຳກັດດ້ານພູມສາດ
3.10.2 ຂໍ້ຈຳກັດດ້ານພູມສາດ

3.11 ການຈຳກັດການບໍລິການຫຼັງການຂາຍ

3.12 ການອຸດໜູນ (ຍົກເວັ້ນການອຸດໜູນການສົ່ງອອກ)

3.13 ຂໍ້ຈຳກັດດ້ານການຈັດຊື້ຂອງລັດຖະບານ

3.14 ຊັບສິນທາງປັນຍາ

3.15 ມາດຕະການກ່ຽວຂ້ອງກັບການສົ່ງອອກ

3.15.1 ໃບອະນຸຍາດສົ່ງອອກ,ໂຄຕ້າ, ຂໍ້ຫ້າມ ແລະ ຂໍ້ຈຳກັດອື່ນໆດ້ານປະລິມານ
3.15.2 ວິສາຫະກິດການຄ້າຂອງລັດ, ສຳລັບການສົ່ງອອກ; ຊ່ອງທາງການສົ່ງອອກອື່ນໆທີ່ເລືອ
3.15.3 ມາດຕະການຄວບຄຸມລາຄາສົ່ງອອກ
3.15.4 ມາດຕະການກ່ຽວກັບການສົ່ງອອກຄືນ
3.15.5 ພາສີສົ່ງອອກ ແລະ ຄ່າຕ່າງໆ
3.15.6 ມາດຕະການດ້ານເຕັກນິກການສົ່ງອອກ
3.15.7 ການອຸດໜູນການສົ່ງອອກ
3.15.8 ສິນເຊື່ອດ້ານການສົ່ງອອກ
3.15.9 ມາດຕະການສົ່ງອອກທີ່ບໍ່ໄດ້ກຳນົດໄວ້ຢູ່ບ່ອນອື່ນ

1.2. ລາຍຊື່ຂະແໜງບໍລິການແລະຂະແໜງຍ່ອຍ[2]

1. <u>ການບໍລິການດ້ານທຸລະກິດ</u>

1.1 ການບໍລິການວິຊາຊີບ

1.1.1 ການບໍລິການດ້ານກົດໝາຍ
1.1.2 ການບໍລິການດ້ານບັນຊີ, ກວດສອບ ແລະ ການຈັດເຮັດບັນຊີ
1.1.3 ການບໍລິການດ້ານພາສີ
1.1.4 ການບໍລິການດ້ານສະຖາປັດຕະຍະກຳ
1.1.5 ບໍລິການດ້ານວິສະວະກຳ
1.1.6 ການບໍລິການດ້ານວິສະວະກຳແບບປະສົມປະສານ
1.1.7 ການວາງແຜນຜັງຕົວເມືອງ ແລະ ການບໍລິການດ້ານສະຖາປັດຕະຍະກຳ
1.1.8 ການບໍລິການດ້ານການແພດ ແລະ ທັນຕະແພດ
1.1.9 ການບໍລິການດ້ານສັດຕະວະແພດ
1.1.10 ການບໍລິການສະໜອງໂດຍແພດຜະດຸງຄັນ, ພະຍາບານ, ນັກກາຍຍະພາບຳບັດ ແລະ ພະນັກງານເຄື່ອງ ອາຊີບການແພດ
1.1.11 ການບໍລິການດ້ານວິຊາຊີບອື່ນໆ

1.2 ດ້ານຄອມພິວເຕີ ແລະ ການບໍລິການທີ່ກ່ຽວຂ້ອງ

1.2.1 ການບໍລິການໃຫ້ຄຳປຶກສາທີ່ກ່ຽວຂ້ອງກັບການຕິດຕັ້ງຮາດແວຄອມພິວເຕີ
1.2.2 ການບໍລິການຈັດຕັ້ງປະຕິບັດຊອຟແວ
1.2.3 ການບໍລິການປະມວນຜົນຕົວເລກຂໍ້ມູນ
1.2.4 ການບໍລິການຖານຕົວເລກຂໍ້ມູນ
1.2.5 ການບໍລິການອື່ນໆທີ່ກ່ຽວຂ້ອງກັບຄອມພິວເຕີ ແລະອື່ນໆ

[2] ບັນຊີລາຍຊື່ຂະແໜງການບໍລິການ ແລະ ຂະແໜງການຍ່ອຍນີ້ ຶດັ່ຮັບການດັດແປງຈາກເອກະສານ WTO # MTN / GNS / W / 120, ບັນຊີການຈັດປະເພດຂະແໜງບໍລິການ.

1.3 ການບໍລິການຄົ້ນຄ້ວາວິໄຈ ແລະ ການພັດທະນາ

1.3.1 ການບໍລິການ R&D ກ່ຽວກັບວິທະຍາສາດທຳມະຊາດ
1.3.2 ການບໍລິການ R&D ກ່ຽວກັບວິທະຍາສາດສັງຄົມແລະມະນຸດສາດ

1.3.3 ການບໍລິການ R&D ແບບສະຫະວິທະຍາການ

1.4 ການບໍລິການດ້ານອະສັງຫາລິມະສັບ

1.4.1 ກ່ຽວຂ້ອງກັບການເປັນເຈົ້າຈຂອງ ຫຼື ການເຊົ່າຊັບສິນ
1.4.2 ບົນພື້ນຖານຄ່າທຳນຽມ ຫຼື ສັນຍາ

1.5 ການບໍລິການເຊົ່າ/ເຊົ່າຊື້ໂດຍບໍ່ມີຜູ້ດຳເນີນປການ

1.5.1 ທີ່ກ່ຽວຂ້ອງກັບເຮືອ
1.5.2 ທີ່ກ່ຽວຂ້ອງກັບເຮືອບິນ
1.5.3 ທີ່ກ່ຽວຂ້ອງກັບພາຫະນະຂົນສົ່ງອື່ນໆ
1.5.4 ທີ່ກ່ຽວຂ້ອງກັບເຄື່ອງຈັກແລະອຸປະກອນອື່ນໆ
1.5.5 ການບໍລິການເຊົ່າ/ເຊົ່າຊື້ອື່ນໆໂດຍບໍ່ມີຜູ້ດຳເນີນການ

1.6 ການບໍລິການທຸລະກິດອື່ນໆ

1.6.1 ການບໍລິການດ້ານໂຄສະນາ
1.6.2 ການຄົ້ນຄວ້າວິໄຈຕະຫຼາດ ແລະ ການບໍລິການສຳຫຼວດຄວາມຄິດເຫັນຂອງປະຊາຊົນ
1.6.3 ການບໍລິການໃຫ້ຄຳປຶກສາດ້ານການບໍລິຫານຄຸ້ມຄອງ
1.6.4 ການບໍລິການທີ່ກ່ຽວຂ້ອງກັບການໃຫ້ຄຳປຶກສາດ້ານການຜະລິດ
1.6.5 ການບໍລິການທົດສອບ ແລະ ວິເຄາະດ້ານວິຊາການ
1.6.6 ການບໍລິການໂດຍເຫດບັງເອີນດ້ານກະສິກຳ, ການລ່າສັດ ແລະ ດ້ານປ່າໄມ້
1.6.7 ການບໍລິການໂດຍເຫດບັງເອີນດ້ານການປະມົງ
1.6.8 ການບໍລິການໂດຍເຫດບັງເອີນດ້ານການຂຸດຄົ້ນບໍ່ແຮ່
1.6.9 ການບໍລິການໂດຍເຫດບັງເອີນດ້ານການຜະລິດ
1.6.10 ການບໍລິການໂດຍເຫດບັງເອີນດ້ານການແຈກຢາຍພະລັງງານ
1.6.11 ການບໍລິການຈັດຫາ ແລະ ສະໜອງບຸກຄະລາກອນ
1.6.12 ການສືບສວນ ແລະ ຄວາມໝັ້ນຄົງ
1.6.13 ການບໍລິການໃຫ້ຄຳປຶກສາທີ່ກ່ຽວຂ້ອງກັບວິທະຍາສາດ ແລະ ເຕັກນິກ
1.6.14 ບຳລຸງຮັກສາ ແລະ ສ້ອມແປງອຸປະກອນ
1.6.15 ການບໍລິການທຳຄວາມສະອາດອາຄານ
1.6.16 ການບໍລິການຖ່າຍຮູບ
1.6.17 ການບໍລິການບັນຈຸຫຸ້ມຫໍ່
1.6.18 ການພິມ, ການພິມຈຳໜ່າຍ
1.6.19 ການບໍລິການຈັດປະຊຸມ
1.6.20 ການບໍລິການດ້ານທຸລະກິດອື່ນໆ

2. <u>ການບໍລິການດ້ານການສື່ສານ</u>

2.1 ການບໍລິການໄປສະນີ

2.2 ການບໍລິການຈັດສົ່ງ

2.3 ການບໍລິການດ້ານໂທລະຄົມມະນາຄົມ

2.3.1 ການບໍລິການໂທລະສັບດ້ວຍສຽງ
2.3.2 ການບໍລິການສົ່ງຂໍ້ມູນແບບສະຫຼັບແຜ້ກແກ້ດ
2.3.3 ການບໍລິການສົ່ງຂໍ້ມູນແບບສະຫຼັບວົງຈອນ
2.3.4 ການບໍລິການ Telex
2.3.5 ການບໍລິການ Telegraph
2.3.6 ການບໍລິການໂທລະສານ (Facsimile)
2.3.7 ການບໍລິການເຊົ່າວົງຈອນສ່ວນຕົວ
2.3.8 ຈົດໝາຍອີເລັກໂທຣນິກ
2.3.9 ສຽງທາງໄປສະນີ (Voice mail)
2.3.10 ຂໍ້ມູນທາງອິນເຕີເນັດ ແລະ ການດຶງເອົາຖານຂໍ້ມູນ

2.3.11 ການແລກປ່ຽນຂໍ້ມູນທາງອີເລັກໂທຣນິກ (EDI)

2.3.12 ເພີ່ມເຕີມ/ເພີ່ມມູນຄ່າການບໍລິການໂທລະສານ (facsimile), ລວມທັງ. ການເກັບມ້ຽນ ແລະ ສົ່ງຕໍ່, ການເກັບມ້ຽນ ແລະ ດຶງເອົາ

2.3.13 ການປ່ຽນລະຫັດ ແລະ ໂປໂຕຄອນ

2.3.14 ຂໍ້ມູນຂ່າວສານທາງອິນເຕີເນັດ ແລະ/ຫຼື ການປະມວນຜົນຕົວເລກຂໍ້ມູນ (ລວມທັງການປະມວນຜົນທຸລະກຳ)

2.3.15 ການບໍລິການດ້ານໂທລະຄົມມະນາຄົມອື່ນໆ

2.4 ການບໍລິການດ້ານສຽງ - ຮູບພາບ

2.4.1 ການບໍລິການຜະລິດ ແລະ ແຈກຢາຍຜະລິດຕະພັນພາບເຄື່ອນໄຫວ ແລະ ພາບວິດີໂອ

2.4.2 ການບໍລິການສາຍພາບເຄື່ອນໄຫວ

2.4.3 ການບໍລິການດ້ານວິທະຍຸ ແລະ ໂທລະພາບ

2.4.4 ການບໍລິການສົ່ງສັນຍານທາງວິທະຍຸ ແລະ ໂທລະພາບ

2.4.5 ການບັນທຶກສຽງ

2.4.6 ການບໍລິການອື່ນໆດ້ານສຽງ - ຮູບພາບ

2.5 ການບໍລິການດ້ານການສື່ສານອື່ນໆ

3. <u>ການບໍລິການດ້ານການກໍ່ສ້າງ ແລະ ດ້ານວິສະວະກຳທີ່ກ່ຽວຂ້ອງ</u>

3.1 ວຽກກໍ່ສ້າງທໍ່ໄປສຳລັບອາຄານ

3.2 ວຽກກໍ່ສ້າງທໍ່ໄປສຳລັບວິສະວະກຳໂຍທາ

3.3 ວຽກຕິດຕັ້ງແລະປະກອບ

3.4 ວຽກສຳເລັດການກໍ່ສ້າງ ແລະ ວຽກຕົກແຕ່ງສຳເລັດຮູບ

3.5 ການບໍລິການດ້ານການກໍ່ສ້າງ ແລະ ວິສະວະກຳອື່ນໆທີ່ກ່ຽວຂ້ອງ

4. <u>ການບໍລິການດ້ານການຈັດຈຳໜ່າຍ</u>

4.1 ການບໍລິການຂອງຕົວແທນ**ນາຍໜ້າ**

4.2 ການບໍລິການການຄ້າແບບຂາຍສົ່ງ

4.3 ການບໍລິການແບບຂາຍຍ່ອຍ

4.4 ການຂາຍແບບແຜນຈຸດ

4.5 ການບໍລິການແຈກຢາຍອື່ນໆ

5. <u>ການບໍລິການດ້ານການສຶກສາ</u>

5.1 ການບໍລິການການສຶກສາຊັ້ນປະຖົມ

5.2 ການບໍລິການການສຶກສາຊັ້ນມັດທະຍົມ

5.3 ການບໍລິການການສຶກສາຊັ້ນສູງ

5.4 ການສຶກສາຜູ້ໃຫຍ່

5.5 ການບໍລິການດ້ານການສຶກສາອື່ນໆ

6. <u>ການບໍລິການດ້ານພະລັງງານ</u>

6.1 ການບໍລິການລະບາຍນ້ຳ

6.2 ການບໍລິການກຳຈັດ**ຂີ້ເຫຍື້ອ**

6.3 ການບໍລິການບ້ານສຸຂາພິບານ ແລະ ສິ່ງທີ່ຄ້າຍຄືກັນ

6.4 ການບໍລິການດ້ານສິ່ງແວດລ້ອມອື່ນໆ

7. <u>ການບໍລິການດ້ານການເງິນ</u>

7.1 <u>ທຸກການບໍລິການປະກັນໄພ ແລະ ທີ່ກ່ຽວຂ້ອງກັບປະກັນໄພ</u>

7.1.1 ການບໍລິການປະກັນໄພຊີວິດ, ອຸປະຕິເຫດ ແລະ ສຸຂະພາບ
7.1.2 ການບໍລິການປະກັນໄພທີ່ບໍ່ແມ່ນຊີວິດ
7.1.3 ການປະກັນໄພຕໍ່ ແລະ ການຖອນອອກ
7.1.4 ການບໍລິການເສີມໃສ່ການປະກັນໄພ (ລວມທັງ ການບໍລິການເປັນນາຍໜ້າ ແລະ ຕົວແທນ)

7.2 ການທະນາຄານ ແລະ ການບໍລິການອື່ນໆດ້ານການເງິນ

7.2.1 ການຍອມຮັບເງິນຝາກ ແລະ ກອງທຶນທີ່ສາມາດຈ່າຍຄືນອື່ນໆຈາກສາທາລະນະ
7.2.2 ການໃຫ້ກູ້ຢືມທຸກປະເພດ, ລວມທັງ ສິນເຊື່ອຜູ້ບໍລິโภก, ສິນເຊື່ອຈຳນອງ, ບັດໄຈ ແລະ ການເງິນຂອງການເຮັດທຸລະກຳການຄ້າ
7.2.3 ການໃຫ້ເຊົ່າຊື້ດ້ານການເງິນ
7.2.4 ການບໍລິການທຸກການຈ່າຍເງິນ ແລະ ໂອນເງິນ
7.2.5 ການຄ້ຳປະກັນ ແລະ ຄວາມມຸ່ງໝັ້ນ
7.2.6 ການຊື້ຂາຍ ສຳລັບບັນຊີຂອງຕົນເອງ ຫຼື ສຳລັບບັນຊີຂອງລູກຄ້າ, ບໍ່ວ່າຈະເປັນການ ແລກປ່ຽນ, ໃນຕະຫຼາດຂາຍຍ່ອຍ ຫຼື ອື່ນໆ, ດັ່ງຕໍ່ໄປນີ້:
7.2.7 ການມີສ່ວນຮ່ວມໃນທຸກປະເດັນບັນຫາຫຼັກຊັບ, ລວມທັງ ການຮັບປະກັນ ແລະ ການຕັ້ງເປັນຕົວແທນ (ບໍ່ວ່າຈະເປັນແບບສາທາລະນະ ຫຼື ແບບສ່ວນຕົວ) ແລະ ໃຫ້ບໍລິການທີ່ກ່ຽວຂ້ອງກັບປະເດັນບັນຫາເຫຼົ່ານີ້
7.2.8 ການຊື້-ຂາຍເງິນ
7.2.9 ການຄຸ້ມຄອງຊັບສິນ ເຊັ່ນ: ການຄຸ້ມຄອງເງິນສົດ ຫຼື ການລົງທຶນ, ທຸກຮູບແບບຂອງການຄຸ້ມຄອງການລົງທຶນ ແບບລວມໝູ່, ການຄຸ້ມຄອງກອງທຶນບຳນານ, ການບໍລິການຮັກສາຊັບສິນ ແລະ ຄວາມເຊື່ອໃຈ
7.2.10 ການບໍລິການຈຳລະບັນຊີ ແລະ ຫັກບັນຊີ ສຳລັບຊັບສິນດ້ານການເງິນ, ລວມທັງ ຫຼັກຊັບ, ຜະລິດຕະພັນອະນຸພັນ, ແລະເຄື່ອງມືອື່ນໆທີ່ສາມາດເຈລະຈາໄດ້
7.2.11 ການບໍລິການໃຫ້ຄຳປຶກສາ ແລະ ການບໍລິການເສີມອື່ນໆດ້ານການເງິນ
7.2.12 ການສະໜອງ ແລະໂອນຂໍ້ມູນຂ່າວສານດ້ານການເງິນ, ແລະ ການປະມວນຜົນຕົວແລກຂໍ້ມູນການເງິນ ແລະ ຊອບແວທີ່ກ່ຽວຂ້ອງໂດຍຜູ້ໃຫ້ບໍລິການດ້ານການເງິນອື່ນໆ

7.3 ການບໍລິການດ້ານການເງິນ, ອື່ນໆ

8. <u>ການບໍລິການທີ່ກ່ຽວຂ້ອງກັບສຸຂະພາບ ແລະ ດ້ານສັງຄົມ</u>

8.1 ການບໍລິການຂອງໂຮງໝໍ
8.2 ການບໍລິການອື່ນໆດ້ານສຸຂະພາບຂອງມະນຸດ
8.3 ການບໍລິການດ້ານສັງຄົມ
8.4 ການບໍລິການອື່ນໆທີ່ກ່ຽວຂ້ອງກັບສຸຂະພາບ ແລະ ດ້ານສັງຄົມ

9. <u>ການບໍລິການທີ່ກ່ຽວຂ້ອງກັບການທ່ອງທ່ຽວ ແລະ ການເດີນທາງ</u>

9.1 ໂຮງແຮມແລະຮ້ານອາຫານ (ລວມທັງ ການຈັດສົ່ງອາຫານ)
9.2 ບໍລິສັດຈຳໜ່າຍປີ້ເດີນທາງ ແລະ ການບໍລິການທ່ອງທ່ຽວ
9.3 ການບໍລິການ**ນຳທ່ຽວ**
9.4 ການບໍລິການອື່ນໆທີ່ກ່ຽວຂ້ອງກັບການທ່ອງທ່ຽວ ແລະ ການເດີນທາງ

10. <u>ການບໍລິການເພື່ອການພັກຜ່ອນຍ່ອນໃຈ, ດ້ານວັດທະນະທຳ ແລະ ກີລາ</u>

10.1 ການບໍລິການດ້ານການບັນເທີງ
10.2 ການບໍລິການ**ຂາຍໜັງສືພິມ ແລະຂ່າວ**
10.3 ຫ້ອງສະໝຸດ**, ສະຖານທີ່ເກັບມ້ຽນເອກະສານສຳຄັນ,** ຫໍພິພິທະພັນ ແລະ ການບໍລິການດ້ານວັດທະນະທຳອື່ນໆ
10.4 ການບໍລິການ**ດ້ານກີລາ ແລະ ການພັກຜ່ອນຍ່ອນໃຈອື່ນໆ**
10.5 ການບໍລິການ**ອື່ນໆດ້ານການພັກຜ່ອນຍ່ອນໃຈ**, ດ້ານວັດທະນະທຳ ແລະ ກີລາ

11. <u>ການບໍລິການຂົນສົ່ງ</u>

11.1 ການບໍລິການຂົນສົ່ງທາງທະເລ

11.1.1 ການຂົນສົ່ງຜູ້ໂດຍສານ
11.1.2 ການຂົນສົ່ງສິນຄ້າ
11.1.3 ການໃຫ້ເຊົ່າເຮືອ ພ້ອມດ້ວຍລູກເຮືອ
11.1.4 ການບຳລຸງຮັກສາ ແລະ ສ້ອມແປງເຮືອ
11.1.5 ການບໍລິການຊຸກ ແລະ ລາກເຮືອ
11.1.6 ການບໍລິການສະໜັບສະໜູນສຳລັບການຂົນສົ່ງທາງທະເລ

11.2 ການຂົນສົ່ງທາງນ້ຳພາຍໃນ

11.2.1 ການຂົນສົ່ງຜູ້ໂດຍສານ
11.2.2 ການຂົນສົ່ງສິນຄ້າ
11.2.3 ການໃຫ້ເຊົ່າເຮືອ ພ້ອມດ້ວຍລູກເຮືອ
11.2.4 ການບຳລຸງຮັກສາ ແລະ ສ້ອມແປງເຮືອ
11.2.5 ການບໍລິການຊຸກ ແລະ ລາກເຮືອ
11.2.6 ການບໍລິການສະໜັບສະໜູນສຳລັບການຂົນສົ່ງທາງນ້ຳພາຍ**ໃນ**

11.3 ການຂົນສົ່ງທາງອາກາດ

11.3.1 ການຂົນສົ່ງຜູ້ໂດຍສານ
11.3.2 ການຂົນສົ່ງສິນຄ້າ
11.3.3 ການໃຫ້ເຊົ່າເຮືອບິນ ພ້ອມດ້ວຍຈູບິນ
11.3.4 ການບຳລຸງຮັກສາ ແລະ ສ້ອມແປງເຮືອບິນ
11.3.5 ການບໍລິການສະໜັບສະໜູນສຳລັບການຂົນສົ່ງທາງອາກາດ

11.4 ການຂົນສົ່ງທາງອາວະກາດ

11.5 ການບໍລິການຂົນສົ່ງທາງລົດໄຟ

11.5.1 ການຂົນສົ່ງຜູ້ໂດຍສານ
11.5.2 ການຂົນສົ່ງສິນຄ້າ
11.5.3 ການບໍລິການຊຸກ ແລະ ລາກ
11.5.4 ການບຳລຸງຮັກສາ ແລະ ສ້ອມແປງອຸປະກອນການຂົນສົ່ງທາງລົດໄຟ
11.5.5 ການບໍລິການສະໜັບສະໜູນສຳລັບການຂົນສົ່ງທາງລົດໄຟ

11.6 ການບໍລິການຂົນສົ່ງທາງບົກ

11.6.1 ການຂົນສົ່ງຜູ້ໂດຍສານ
11.6.2 ການຂົນສົ່ງສິນຄ້າ
11.6.3 ການໃຫ້ເຊົ່າພາຫະນະເພື່ອການຄ້າ ພ້ອມດ້ວຍຜູ້ດຳເນີນການ
11.6.4 ການບຳລຸງຮັກສາ ແລະ ສ້ອມແປງອຸປະກອນການຂົນສົ່ງທາງບົກ
11.6.5 ການບໍລິການເສີມສຳລັບການຂົນສົ່ງທາງບົກ

11.7 ການຂົນສົ່ງ ທາງທໍ່

11.7.1 ການຂົນສົ່ງນ້ຳມັນເຊື້ອໄຟ
11.7.2 ການຂົນສົ່ງສິນຄ້າອື່ນໆ

11.8 ການບໍລິການ ທຸກຮູບແບບຂອງການຂົນສົ່ງ ເສີມ

11.8.1 ການບໍລິການຈັດການຂົນຖ່າຍສິນຄ້າ
11.8.2 ການບໍລິການຈັດເກັບມ້ຽນ ແລະ ສາງ
11.8.3 ການບໍລິການເປັນຕົວແທນການຂົນສົ່ງສິນຄ້າ
11.8.3 ການບໍລິການເສີມໃນທຸກຮູບແບບຂອງການຂົນສົ່ງ, ອື່ນໆ

11.9 ການບໍລິການຂົນສົ່ງອື່ນໆ

ເອກະສານຊ້ອນທ້າຍ 2.
ໂຄງສ້າງຂອງກົນໄກ ASSIST ແລະ ກຳນົດເວລາທີ່ກ່ຽວຂ້ອງ

ໂຄງສ້າງດັ່ງຕໍ່ໄປນີ້ ເປັນການສະຫຼຸບຫຍໍ້ ຂັ້ນຕອນຂອງ ASSIST. ຄຳຫຍໍ້ຕໍ່ໄປນີ້ແມ່ນ:

AE : ວິສາຫະກິດອາຊຽນ
CA : ຜູ້ດູແລລະບົບ
DCP : ຈຸດຕິດຕໍ່ປາຍທາງ
HCP : ຈຸດຕິດຕໍ່ຕົ້ນທາງ
RAs : ອົງການທີ່ກ່ຽວຂ້ອງ

2.1. ສຳລັບຄຳຮ້ອງທຸກທີ່ຍື່ນໂດຍວິສາຫະກິດອາຊຽນ ຫຼື ຫນ່ວຍງານຕົວແທນໃນອາຊຽນ



ກຳນົດເວລາສຳລັບການແກ້ໄຂ
ບັນຫາຂ້ຳມແດນ ທີ່ນຳເຂົ້າມາ
ໃນ ASSIST ຈະບໍ່ເກີນ 60 ມື້
ລັດຖະການ ຫຼື 3 ເດືອນ
ປະຕິທິນ

2.2. ສຳລັບຄຳຮ້ອງທຸກທີ່ຍື່ນໂດຍທະນາຍຄວາມ ຫຼື ບໍລິສັດກົດໝາຍທີ່ຈົດທະບຽນໃນອາຊຽນ



ເອກະສານຊ້ອນທ້າຍ 3.
ຄຳຖາມທີ່ຖາມເລື້ອຍໆ (FAQs)

1. ຄຳຖາມທົ່ວໄປກ່ຽວກັບ ASSIST

1.1 ມີຄ່າບໍລິການ ຫຼື ຄ່າທຳນຽມຫັຍງບໍ່ ເພື່ອນຳໃຊ້ ASSIST?

ບໍ່, ສາມາດນຳໃຊ້ ASSIST ໄດ້ໂດຍບໍ່ເສຍຄ່າ. ບໍ່ມີຄ່າໃຊ້ຈ່າຍ, ບໍ່ມີຄ່າທຳນຽມ ແລະ ບໍ່ມີຄ່າລົງທະບຽນ ຫຼື ຄ່າຍື່ນເອກະສານເຂົ້າມາແຕ່ຢ່າງໃດ.

1.2 ເປັນຫຍັງ ປະຈຸບັນນີ້ ASSIST ມີພຽງແຕ່ຮັບເອົາຄຳຮ້ອງທຸກທີ່ກ່ຽວຂ້ອງກັບການຄ້າດ້ານສິນຄ້າ ແລະ ດ້ານການບໍລິການຂ້າມຊາຍແດນອາຊຽນເທົ່ານັ້ນ?

ເມື່ອໃດຈະຂະຫຍາຍໄປສູ່ປະເດັນບັນຫາການລົງທຶນ? ASSIST ໄດ້ມີແລ້ວສຳລັບປະເດັນບັນຫາຕ່າງໆທີ່ກ່ຽວຂ້ອງກັບການຄ້າດ້ານສິນຄ້າ ຕັ້ງແຕ່ເດືອນສິງຫາ ປີ 2016 ເປັນຕົ້ນມາ ແລະ ສຳລັບປະເດັນຕ່າງໆທີ່ເກີດຂຶ້ນກ່ຽວກັບການຄ້າດ້ານການບໍລິການຂ້າມຊາຍແດນອາຊຽນແມ່ນນັບແຕ່ວັນທີ **1** ເດືອນພຶດສະພາ ປີ 2019. ASSIST ອາດຈະຂະຫຍາຍໄປສູ່ປະເດັນບັນຫາການລົງທຶນໃນປີ 2020.

1.3 ການເວົ້າວ່າ ASSIST ບໍ່ມີຂໍ້ຜູກມັດ ໝາຍຄວາມວ່າແນວໃດ ?

ບໍ່ມີຂໍ້ຜູກມັດ ໝາຍຄວາມວ່າປະເທດສະມາຊິກອາຊຽນ ອາດຈະຕັດສິນໃຈວ່າ ບໍ່ຍອມຮັບຄຳຮ້ອງທຸກ ຫຼື ສະເໜີ ວິທີແກ້ໄຂ ເມື່ອຄຳຮ້ອງທຸກໄດ້ຍື່ນເຂົ້າມາ ໃນລະບົບ ASSIST. ເຖິງແມ່ນວ່າ ASSIST ຈະບໍ່ມີຂໍ້ຜູກມັດກໍ່ຕາມ, ບັນດາປະເທດສະມາຊິກອາ ຊຽນຈະຈັດການກັບການຮ້ອງທຸກບົນພື້ນຖານຄວາມພະຍາຍາມທີ່ດີທີ່ສຸດ.

1.4 ເປັນຫຍັງ ASSIST ຈຶ່ງມີລັກສະນະໃຫ້ຄຳປຶກສາ ?

ASSIST ບໍ່ແມ່ນລະບົບຍຸຕິທຳທີ່ເປີດເຜີຍຕໍ່ຫນ້າສານລະດັບປະເທດ ຫຼື ລະດັບສາກົນ ແລະ ບໍ່ໄດ້ຮັບການຈັດການ ແລະ ຕັດສິນໂດຍຜູ້ພິພາກສາອິດສະຫຼະ, ຜູ້ຕັດສິນ, ຜູ້ໄກ່ເກ່ຍ, ຄະນະຜູ້ຊ່ຽວຊານ ຫຼື ອົງການພິພາກສາຂັ້ນ 3. ເປັນການເປີດເຜີຍຜ່ານການປຶກສາຫາລືທາງອອນໄລນ້ໂດຍກົງ ຜ່ານເວທີຊອບແວຂອງ ASSIST ລະຫວ່າງວິສາຫະກິດຢູ່ໃນອາຊຽນ (ບັນດາບໍລິສັດ ຫຼື ສະ ມາຄົມການຄ້າ/ສະພາການຄ້າ) ແລະ ບັນດາລັດຖະບານຂອງປະເທດອາຊຽນ

1.5 ຂໍ້ມູນປະເພດໃດແດ່ທີ່ຈະຈັດວົງໃນຫນ້າເວທີສາທາລະນະໃນເວັບໄຊທ້ຂອງ ASSIST ?

ຕະຫຼອດເວລາຜ່ານໄປ, ເວທີສາທາລະນະຈະສະຫນອງຂໍ້ມູນທີ່ສາມາດເປັນປະໂຫຍດໃຫ້ແກ່ບັນດາວິສາຫະກິດຂອງອາຊຽນທີ່ ພວມຊອກຫາວິທີແກ້ໄຂດ້ານທຸລະກິດ ໃນເວລາດຳເນີນທຸລະກິດໃນພາກພື້ນ. ຂໍ້ມູນດັ່ງກ່າວຈະປະກອບມີບົດເລື່ອງຕ່າງໆກ່ຽວກັບຄວາມສຳເລັດ, ບັນດາກໍລະນີສຶກສາ ແລະ ຄູ່ມືຕ່າງໆ ເພື່ອຊ່ວຍໃຫ້ບັນດາທຸລະກິດເຂົ້າໃຈເຖິງຂໍ້ຕົກລົງຂອງອາຊຽນໄດ້ດີຂຶ້ນ. ເວທີດັ່ງກ່າວ ຍັງຈະຊຸກຍູ້ໃຫ້ບັນດາທຸລະກິດແລກປ່ຽນປະ ສົບການ ແລະ ບົດຮຽນຕ່າງໆ ຂອງຕົນທີ່ເປັນປະໂຫຍດຕໍ່ການຊອກຫາວິ ທີແກ້ໄຂໃນອາຊຽນ. ຈະບໍ່ຈັດໃຫ້ມີຂໍ້ມູນໃດທີ່ເປັນຄວາມລັບວົງໃນເວທີດັ່ງກ່າວ.

1.6 ຈະຮັກສາຄຳຮ້ອງທຸກເປັນຄວາມລັບໄດ້ບໍ? ແມ່ນໃຜສາມາດເຂົ້າເຖິງຂໍ້ມູນທີ່ຜູ້ຮ້ອງທຸກ ຫຼື ລັດຖະບານອາຊຽນ ສະຫນອງໃຫ້ໃນຄຳຮ້ອງທຸກ ຊຶ່ງເປັນສ່ວນຫນຶ່ງຂອງການແກ້ໄຂທີ່ໄດ້ສະເໜີ ?

ການຮັກສາຄວາມລັບມີຄວາມສຳຄັນທີ່ສຸດ ແລະ ພຽງແຕ່ຜູ້ຮ້ອງທຸກ, ປະເທດສະມາຊິກອາຊຽນທີ່ກ່ຽວຂ້ອງໂດຍກົງ ແລະ ຄະນະເລຂາອາຊຽນເທົ່ານັ້ນ ຈຶ່ງມີສິດສາມາດເຂົ້າເຖິງຄຳຮ້ອງທຸກຕົວຈິງ ແລະ ວິທີແກ້ໄຂທີ່ໄດ້ສະ ເໜີໃຫ້. (ຈົ່ງເບິ່ງ ຄຳປະຕິເສດຕໍ່ຄວາມຮັບຜິດຊອບໃນເວັບໄຊທ້ ASSIST ໃນເລື່ອງນີ້).

1.7 ສາມາດນຳໃຊ້ຂໍ້ມູນທີ່ໄດ້ແລກປ່ຽນຜ່ານ ASSIST ໃນສານ ໃນເວລາຕໍ່ມາບໍ່ ເພື່ອຈຸດປະສົງໃນການດຳເນີນຄະດີພາຍໃນປະເທດ ຫຼື ເພື່ອແກ້ໄຂຂໍ້ຂັດແຍ່ງລະຫວ່າງປະເທດ (ເຊັ່ນ: WTO ແລະ/ຫຼື ອາຊຽນ)?

ບໍ່. ຄຳປະຕິເສດຂອງ ASSIST ແມ່ນຊັດເຈນ (ຈົ່ງເບິ່ງ link ໃນ footer ຂອງຫນ້າເວັບທັງໝົດຂອງ ASSIST). ບໍ່ສາມາດນຳໃຊ້ຂໍ້ມູນ ຫຼື ຄຳຖະແຫຼງໃດໆຂອງຜູ້ຮ້ອງທຸກ ຫຼື ຂອງປະເທດສະມາຊິກອາຊຽນທີ່ຢູ່ໃນຂັ້ນຕອນຂອງ ASSIST

ເຂົ້າໃນການດຳ ເນີນຄະດີໃນລະດັບປະເທດ ຫຼື ລະດັບສາກົນ. ເຖິງຢ່າງໃດກໍ່ຕາມ, ໃນຂະນະທີ່ບໍ່ສາມາດບັງຄັບໃຊ້ໄດ້ໃນ ສານ, ການແກ້ໄຂທີ່ໄດ້ສະເໜີ ອາດຈະມີຄຸນຄ່າສະເພາະ ໃນສະພາບການທີ່ຄ້າຍຄືກັນຂອງການຮ້ອງທຸກດັ່ງກ່າວ ສຳລັບ ເຈົ້າໜ້າທີ່ບໍລິຫານ (ເຊັ່ນ: ເຈົ້າໜ້າທີ່ພາສີອາກອນ, ເຈົ້າໜ້າທີ່ການຄ້າ, ເຈົ້າໜ້າທີ່ອອກໃບອະນຸຍາດສິນຄ້ານຳເຂົ້າ, ອົງ ການປະເມີນຄວາມສອດຄ່ອງ ແລະອື່ນໆ) ຂອງປະເທດສະມາຊິກອາຊຽນທີ່ໄດ້ສະເໜີວິທີແກ້ໄຂ.

2. ຂອບເຂດຂອງ ASSIST

2.1 ວິສາຫະກິດຂອງອາຊຽນສາມາດຮ້ອງທຸກກ່ຽວກັບລັດຖະບານຂອງປະເທດຕົນເອງໄດ້ບໍ?

ບໍ່. ASSIST ແມ່ນສໍາລັບປະດັນບັນຫາການຄ້າຂ້າມຊາຍແດນລະຫວ່າງວິສາຫະກິດອາຊຽນທີ່ໄດ້ຂຶ້ນທະບຽນຢ່າງຖືກຕ້ອງຕາມກົດໝາຍຕໍ່ປະເທດສະມາຊິກອາຊຽນໃດໜຶ່ງ ແລະ ລັດຖະບານຂອງປະເທດໃດໜຶ່ງ ໃນ 9 ປະເທດສະມາຊິກອາຊຽນອື່ນເທົ່ານັ້ນ. ບໍ່ສາມາດຍື່ນປະດັນບັນຫາຕ່າງໆຂອງພາຍໃນປະເທດລ້ວນໆກ່ຽວກັບລັດ ຖະບານປະເທດຂອງວິສາຫະກິດທີ່ຮ້ອງທຸກ ຜ່ານ ASSIST. ໃນກໍລະນີຜູ້ສະໜອງການບໍລິການທີ່ຂຶ້ນກັບບໍລິ ສັດແມ່ ຊຶ່ງມີທີ່ຕັ້ງໃນປະເທດສະມາຊິກອາຊຽນ A, ແຕ່ວ່າ ສະໜອງການບໍລິການຂອງຕົນຢູ່ໃນປະເທດສະມາ ຊິກອາຊຽນ B, ຕັ້ງໃຈຈະຍື່ນຄໍາຮ້ອງທຸກຕໍ່ປະເທດສະມາຊິກອາຊຽນ B, ຄວນແມ່ນບໍລິສັດແມ່ໃນປະເທດສະມາຊິກອາຊຽນ A ຍື່ນຄໍາຮ້ອງທຸກໃນ ASSIST. ເຖິງຢ່າງໃດກໍ່ຕາມ, ສະມາຄົມການຄ້າ, ສະພາການຄ້າ, ສະພາທຸລະກິດ, ສະຫະພັນທຸລະກິດ, ທະນາຍຄວາມ ຫຼື ບໍລິສັດກົດໝາຍທີ່ໄດ້ຈົດທະບຽນຢູ່ໃນອາຊຽນໃນນາມຂອງຜູ້ຮ້ອງທຸກຕົວຈິງ ກໍຍັງສາມາດຍື່ນເອກະສານແບບບໍ່ລະບຸຊື່ເຂົ້າມາສໍາລັບກໍລະນີດັ່ງກ່າວ.

2.2 ສາມາດໃຊ້ ASSIST ເພື່ອຍື່ນຄໍາຮ້ອງທຸກເຂົ້າມາກ່ຽວກັບລັດຖະບານຂອງປະເທດໃດໜຶ່ງຢູ່ນອກອາຊຽນ ບໍ່ (ເຊັ່ນ: ອິດສະຕາລີ, ຈີນ, EU, ຍີ່ປຸ່ນ, ເກົາຫຼີ, US ແລະອື່ນໆ)?

ບໍ່. ASSIST ແມ່ນສໍາລັບປະດັນບັນຫາການຄ້າຂ້າມຊາຍແດນພາຍໃນອາຊຽນລະຫວ່າງວິສາຫະກິດອາຊຽນທີ່ໄດ້ຈົດທະບຽນຢ່າງຖືກຕ້ອງຕາມກົດໝາຍໃນປະເທດສະມາຊິກອາຊຽນໃດໜຶ່ງ ແລະ ລັດຖະບານຂອງປະເທດໃດໜຶ່ງ ໃນ 9 ປະເທດສະມາຊິກອາຊຽນອື່ນໆເທົ່ານັ້ນ.

2.3 ຜູ້ຮ້ອງທຸກສາມາດຍື່ນຄໍາຮ້ອງທຸກທີ່ກ່ຽວຂ້ອງກັບມາດຕະການທີ່ມີຢູ່ແລ້ວຕໍ່ສານຂອງປະເທດໃນການດໍາເນີນຄະ ດີພາຍໃນປະເທດ ຫຼືວ່າ ມີຈຸດປະສົງເພື່ອສືບຕໍ່ການໄກ່ເກ່ຍ ຫຼື ຖືກລັດຖະບານນໍາຂຶ້ນພາຍໃນ WTO ຫຼື ອາ ຊຽນພາຍໃຕ້ກົນໄກການແກ້ໄຂຂໍ້ຂັດແຍ້ງທີ່ກ່ຽວຂ້ອງບໍ ?

ບໍ່. ຖ້າມີຄໍາຮ້ອງທຸກໃດໜຶ່ງທີ່ຍື່ນເຂົ້າມາພາຍໃຕ້ສະພາບການດັ່ງກ່າວ, ມີທ່າອ່ຽງວ່າ ກອງເລຂາອາຊຽນ ຫຼື ປະເທດ ປາຍທາງຈະປະຕິເສດຄໍາຮ້ອງທຸກດັ່ງກ່າວ ຍ້ອນວ່າເປັນການຍື່ນເຂົ້າມາແບບບໍ່ຖືກຕ້ອງ.

3. ກ່ອນທີ່ຈະຍື່ນຄໍາຮ້ອງທຸກເຂົ້າມາ

3.1 ຈໍາເປັນຕ້ອງໄດ້ຮັບການອະນຸຍາດ ຫຼື ຮັບການສະໜັບສະໜູນ ຈາກລັດຖະບານອາຊຽນບ່ອນທີ່ຜູ້ຮ້ອງທຸກ ໄດ້ຈົດທະບຽນຖືກຕ້ອງຕາມກົດໝາຍກ່ອນໜ້າການຍື່ນຄໍາຮ້ອງທຸກເຂົ້າມາໃນ ASSIST ບໍ ?

ບໍ່, ບໍ່ໄດ້. ASSIST ມີໄວ້ໃຫ້ວິສາຫະກິດອາຊຽນນໍາໃຊ້ໂດຍກົງ ແລະ ບໍ່ຈໍາເປັນຕ້ອງໄດ້ຮັບການອະນຸຍາດຈາກລັດຖະບານ ປະເທດຂອງຕົນ. ດັ່ງທີ່ກ່າວໄປແລ້ວ, ໄດ້ຈຸກຍູ້ໃຫ້ຜູ້ຮ້ອງທຸກຊອກຫາຄວາມຄິດເຫັນຂອງລັດຖະບານປະເທດຂອງຕົນ ແລະ ການສະໜັບສະໜູນທີ່ເປັນໄປໄດ້ກ່ອນທີ່ຈະຍື່ນຄໍາຮ້ອງທຸກເຂົ້າມາໂດຍຜ່ານ ASSIST.

3.2 ຖ້າວ່າ ຜູ້ຮ້ອງທຸກບໍ່ເຂົ້າໃຈຕໍ່ຂໍ້ຕົກລົງອາຊຽນທີ່ກ່ຽວຂ້ອງຢ່າງເຕັມສ່ວນ ຫຼື ຕ້ອງການຄໍາແນະນໍາກ່ອນທີ່ຈະຍື່ນ ຄໍາຮ້ອງທຸກເຂົ້າມາ, ມີຊັບພະຍາກອນໃດແດ່ ທີ່ມີໃຫ້ເພື່ອຂໍຄໍາປຶກສາ ແລະ ຂໍຄໍາແນະນໍາ ?

ຜູ້ຮ້ອງທຸກ ອາດຈະຊອກຫາຄວາມຄິດເຫັນ ແລະ ການສະໜັບສະໜູນ ທີ່ເປັນໄປໄດ້ຈາກລັດຖະບານຂອງປະເທດ ກ່ອນ ທີ່ຈະຍື່ນຄໍາຮ້ອງທຸກຜ່ານ ASSIST. ພວກເຂົາຍັງອາດຈະຂໍຄໍາແນະນໍາ ແລະ ການຊ່ວຍເຫຼືອຈາກທີ່ປຶກສາອິດສະຫຼະ, ທະນາຍຄວາມ, ບໍລິສັດກົດໝາຍ, ສະພາການຄ້າ, ສະພາທຸລະກິດ, ສະຫະພັນທຸລະກິດ, ສະມາຄົມການຄ້າ ຫຼື ແມ່ນແຕ່ສະຖາບັນການສຶກສາ. ຂໍແນະນໍາທີ່ສຸດໃຫ້ມີຄໍາແນະນໍາ ແລະ ການສະໜັບສະໜູນຂອງໃຜກໍຕາມໃນພາກສ່ວນ ກ່ຽວຂ້ອງດັ່ງກ່າວ ເມື່ອຜູ້ຮ້ອງທຸກເປັນວິສາ ຫະກິດທີ່ອາດຈະມີຂໍ້ຈໍາກັດດ້ານຄວາມສາມາດທາງວິຊາການກ່ຽວກັບ ຄວາມເຂົ້າໃຈຕໍ່ປະດັນບັນຫາອາຊຽນ ຫຼື ມີຄວາມຫຍຸ້ງ ຍາກໃນການສື່ສານເປັນພາສາອັງກິດ.

3.3 ຖ້າຄໍາຮ້ອງທຸກແມ່ນວິສາຫະກິດຂະໜາດນ້ອຍ, ຂະໜາດກາງ (MSME), ມີວິທີໃດທີ່ດີທີ່ສຸດ ເພື່ອຊອກຫາ ການສະໜັບສະໜູນ ໃນເວລາຍື່ນຄໍາຮ້ອງທຸກເຂົ້າໃນ ASSIST ?

ດ້ວຍການຊອກຫາຄໍາແນະນໍາ ແລະ ການຊ່ວຍເຫຼືອຈາກທີ່ປຶກສາອິດສະຫຼະ, ທະນາຍຄວາມ, ບໍລິສັດກົດໝາຍ, ສະພາການ ຄ້າ, ສະພາທຸລະກິດ, ສະຫະພັນທຸລະກິດ, ສະມາຄົມການຄ້າ ຫຼື ແມ່ນແຕ່ສະຖາບັນການສຶກສາ. ຫຼື ດ້ວຍການຊອກຫາຄວາມ ຄິດເຫັນ ແລະ ການສະໜັບສະໜູນທີ່ເປັນໄປໄດ້ຈາກລັດຖະບານຂອງປະເທດ ກ່ອນທີ່ຈະຍື່ນຄໍາຮ້ອງທຸກ ໂດຍຜ່ານ ASSIST.

3.4 ຜູ້ຮ້ອງທຸກສາມາດຫັ້ນໃຈໄດ້ແນວໃດວ່າ ປະເດັນບັນຫາທີ່ສົ່ງຜົນກະທົບຕໍ່ກິດຈະກຳທຸລະກິດແມ່ນຢູ່ໃນ ຂອບເຂດຂອງ ASSIST?

ໄດ້ນຳສະເໜີຂອບເຂດຂອງ ASSIST ໃນເວັບໄຊທ໌ຂອງ ASSIST. ຄຳຮ້ອງທຸກ ອາດຈະຖືກປະຕິເສດ ຖ້າວ່າ ມັນຢູ່ໃນ ໜຶ່ງໃນປະເພດຕ່າງໆດັ່ງຕໍ່ໄປນີ້: ບໍ່ຖືກກວມເອົາ ຫຼື ຖືກກຳນົດໄວ້ໃນຂໍ້ຕົກລົງສັນຍາການຄ້າອາ ຊຽນໃດໆ; ຍູ່ນອກເໜືອ ຈາກການຄ້າພາຍໃນອາຊຽນ; ເປັນການຂັດແຍ້ງກັນລະຫວ່າງທຸລະກິດພຽງຢ່າງດຽວເທົ່ານັ້ນ; ບໍ່ມີຂໍ້ມູນພຽງພໍ ແລະ ເຊື່ອຖືໄດ້ເພື່ອສະໜັບສະໜູນ; ມັນຂຶ້ນກັບການທົບທວນດ້ານກົດໝາຍຂອງບໍລິຫານ ຫຼື ຍຸຕິທຳ ແລະ/ຫຼື ການດຳເນີນ ຄະດີ; ແລະ ມັນເປັນການແກ້ໄຂປະເດັນບັນຫາດ້ານການລົງທຶນ ຊຶ່ງປະຈຸບັນນີ້ຍັງບໍ່ທັນມີຢູ່ພາຍໃຕ້ ASSIST.

ດັ່ງນັ້ນ, ຜູ້ຮ້ອງທຸກ ຄວນທຳການຄົ້ນຄ້ວາວິໄຈຢ່າງຮອບຄອບບົນພື້ນຖານຂໍ້ມູນທີ່ໄດ້ສະໜອງໃຫ້ໃນເວັບໄຊທ໌ຂອງ ASSIST ແລະ/ຫຼື ດ້ວຍການຊອກຫາຄຳແນະນຳ ແລະ ຄວາມຊ່ວຍເຫຼືອຈາກລັດຖະບານປະເທດຂອງຕົນ ຫຼື ຈາກທີ່ ປຶກສາອິດສະຫຼະ, ທະນາຍຄວາມ, ບໍລິສັດກົດໝາຍ, ສະພາທຸລະກິດ, ສະພາການຄ້າ, ສະຫະພັນທຸລະກິດ ແລະ ສະມາຄົມ ການຄ້າ.

3.5 ເປັນຫຍັງການສ້າງກໍລະນີຢ່າງຮອບຄອບ ແລະ ໄດ້ຮັບການພິສູດເປັນຢ່າງດີແລ້ວ ກ່ອນທີ່ຈະຍື່ນຄຳ ຮ້ອງທຸກເຂົ້າມາໃນ ASSIST ຈຶ່ງສຳຄັນ ?

ອັນນີ້ແມ່ນສິ່ງທີ່ສຳຄັນທີ່ສຸດ ເພາະວ່າກໍລະນີດັ່ງກ່າວຈະໄດ້ຮັບການກວດສອບໂດຍເຈົ້າໜ້າທີ່ຜູ້ກ່ຽວຂ້ອງທີ່ມີສວ່ນຮ່ວມ ກັບ ASSIST. ຕ້ອງໄດ້ນຳສະເໜີບັນດາມາດຕະການ ຫຼື ການປະຕິບັດຕົວຈິງທີ່ເປັນສິ່ງທ້າທາຍ ຫຼື ບັນຫາທີ່ຜູ້ຮ້ອງທຸກ ພວມປະເຊີນນັ້ນຢ່າງຈະແຈ້ງ, ແລະ ຂໍແນະນຳໃຫ້ມີເອກະສານສະໜັບສະໜູນ. ຜູ້ຮ້ອງທຸກຍັງອາດຈະພິຈາລະນາສະເໜີ ວິທີແກ້ໄຂທີ່ເປັນໄປໄດ້ເພື່ອອຳນວຍຄວາມສະດວກໃຫ້ແກ່ຂັ້ນຕອນ. ຄຳຮ້ອງທຸກທີ່ນຳສະເໜີຢ່າງຄົບຖ້ວນຈະມີໂອກາດ ສູງກ່ວາ ທີ່ຈະໄດ້ຮັບການຍອມ ຮັບຈາກປະເທດປາຍທາງ, ໂດຍມີຈຸດປະສົງເພື່ອຊອກຫາວິທີແກ້ໄຂ.

4. ການຍື່ນຄຳຮ້ອງທຸກເຂົ້າມາ

4.1 ຜູ້ຮ້ອງທຸກຕ້ອງໄດ້ລົງທະບຽນລ່ວງໜ້າບໍ່ ເພື່ອສະແດງໃຫ້ເຫັນວ່າບໍລິສັດຂອງຕົນແມ່ນວິສາຫະກິດ ຫຼື ສະມາ ຄົມການຄ້າຢູ່ໃນອາຊຽນ ຫຼື ຈົດທະບຽນແບບອັດຕະໂນມັດເມື່ອຍື່ນຄຳຮ້ອງທຸກເຂົ້າມາ ?

ບໍ່ມີຂັ້ນຕອນການຈົດທະບຽນລ່ວງໜ້າ. ຜູ້ຮ້ອງທຸກ ຕ້ອງສະໜອງໝາຍເລກທະບຽນທຸລະກິດໃນປະເທດ ແລະ ມີຫຼັກ ຖານການຈົດທະບຽນ ຊຶ່ງເປັນພາກບັງຄັບໃນແບບຟອມຄຳຮ້ອງທຸກໃນເວັບໄຊທ໌ຂອງ ASSIST. ທະນາຍຄວາມ ຫຼື ບໍລິສັດກົດໝາຍທີ່ຍື່ນຄຳຮ້ອງທຸກເຂົ້າມາໃນນາມຂອງລູກຄ້າຂອງຕົນ (ຄຳຮ້ອງທຸກແບບບໍ່ລະບຸຊື່) ກ່ອນອື່ນໝົດຕ້ອງ ໄດ້ຈົດທະບຽນກັບກອງເລຂາອາ ຊຽນ ແລະ ຍື່ນແບບຟອມສະເພາະເພື່ອໃຫ້ໄດ້ເລກລະຫັດຂອງກໍລະນີແບບເປັນຄວາມ ລັບຈາກກອງເລຂາອາຊຽນເສຍກ່ອນ.

4.2 ຜູ້ຮ້ອງທຸກຈຳເປັນຕ້ອງຂຽນແບບຟອມຄຳຮ້ອງທຸກທາງອອນໄລນ໌ ແລະ ລົງທະບຽນທຸກຄັ້ງທີ່ຢາກຍື່ນຄຳ ຮ້ອງ ທຸກບໍ່ ຫຼື ສາມາດຍື່ນຄຳຮ້ອງທຸກຫຼາຍຄັ້ງດ້ວຍແບບຟອມດຽວ ?

ຜູ້ຮ້ອງທຸກຕ້ອງຂຽນແບບຟອມຄຳຮ້ອງທຸກຜ່ານທາງອອນໄລນ໌ໃນແຕ່ລະຄັ້ງທີ່ວິສາຫະກິດ (ຫຼື ນິຕິບຸກຄົນທີ່ເປັນຕົວ ແທນຂອງຕົນ ໃນຄຳຮ້ອງທຸກແບບບໍ່ລະບຸຊື່) ຍື່ນຄຳຮ້ອງທຸກຄົນໃໝ່ເຂົ້າມາພ້ອມດ້ວຍທຸກຂົງເຂດທີ່ເປັນພາກບັງຄັບ.

4.3 ຜູ້ຮ້ອງທຸກຈຳເປັນຕ້ອງລົງທະບຽນເປັນວິສາຫະກິດອາຊຽນໃນການລົງທະບຽນບາງອັນຢູ່ຂັ້ນສູນກາງບໍ່ ?

ບໍ່, ບໍ່ມີການລົງທະບຽນຢູ່ຂັ້ນສູນກາງ. ພຽງແຕ່ທະນາຍຄວາມ ຫຼື ບໍລິສັດກົດໝາຍທີ່ຍື່ນຄຳຮ້ອງທຸກໃນນາມລູກຄ້າ ຂອງຕົນເທົ່ານັ້ນ (ຄຳຮ້ອງທຸກແບບບໍ່ລະບຸຊື່) ກ່ອນອື່ນໝົດຕ້ອງໄດ້ລົງທະບຽນກັບກອງເລຂາອາຊຽນ ແລະ ຍື່ນ ແບບຟອມສະເພາະ ເພື່ອໃຫ້ໄດ້ເລກລະຫັດກໍລະນີທີ່ເປັນຄວາມລັບຈາກກອງເລຂາອາຊຽນ.

4.4 ການເປັນວິສາຫະກິດຂອງອາຊຽນ ໝາຍຄວາມວ່າແນວໃດ (ເຊັ່ນ: ບໍລິສັດ ຫຼື ສະມາຄົມການຄ້າ) ທີ່ຈົດ ທະ ບຽນຢ່າງຖືກຕ້ອງຕາມກົດໝາຍໃນໜຶ່ງ ໃນ 10 ປະເທດສະມາຊິກອາຊຽນ ?

ອັນນີ້ໝາຍຄວາມວ່າ ວິສາຫະກິດຂອງອາຊຽນໄດ້ປະຕິບັດພັນທະຕາມກົດໝາຍຂອງປະເທດທີ່ຕົນດຳເນີນງານ ແລະ ໄດ້ຈົດທະ ບຽນເປັນສະມາຄົມທຸລະກິດ ຫຼື ສະມາຄົມການຄ້າ/ສະພາການຄ້າ/ສະພາທຸລະກິດ/ສະຫະພັນທຸ ລະກິດ. ອັນນີ້ ຈະສອດຄ່ອງກັບກົດໝາຍທີ່ມີຢູ່ໃນປະເທດອາຊຽນທີ່ກ່ຽວຂ້ອງ. ເງື່ອນໄຂທີ່ຄ້າຍຄືກັນນີ້ ໃຊ້ກັບທະນາຍຄວາມ ຫຼື

ບໍລິສັດກົດໝາຍທີ່ຍື່ນຄຳຮ້ອງ ທຸກເຂົ້າມາໃນນາມລູກຄ້າຂອງຕົນ. ພວກເຂົາຈະຕ້ອງສະແດງການລົງທະບຽນກັບໜຶ່ງ ໃນປະເທດສະມາຊິກອາຊຽນ ແລະ ມີໃບອະນຸຍາດວິຊາຊີບເພື່ອປະຕິບັດຕົວຈິງດ້ານກົດໝາຍ ໃນຂອບເຂດອາຊຽນທີ່ ກ່ຽວຂ້ອງ

4.5 ຖ້າວ່າ ຜູ້ຮ້ອງທຸກແມ່ນຫ້ອງການຂອງອາຊຽນທີ່ຈົດທະບຽນຢ່າງຖືກຕ້ອງຕາມກົດໝາຍ (ເຊັ່ນ: ສາຂາ, ບໍລິສັດລູກ, ຫ້ອງການຜູ້ຕາງໜ້າ, ໂຮງງານ, ສູນແຈກຈ່າຍສິນຄ້າ ແລະອື່ນໆ) ຂອງບໍລິສັດຫຼາຍປະເທດ ຈາກປະເທດທີ່ ຢູ່ນອກອາຊຽນ, ສຳນັກງານໃຫຍ່ຂອງຜູ້ຮ້ອງທຸກ ຊຶ່ງ "ມີສຳນັກງານໃຫຍ່" ຕັ້ງຢູ່ນອກປະ ເທດອາຊຽນ ສາມາດຍື່ນຄຳຮ້ອງທຸກດັ່ງກ່າວເຂົ້າມາ ບໍ ?

ບໍ່. ຕ້ອງແມ່ນວິສາຫະກິດທີ່ດຳເນີນງານຢູ່ໃນໜຶ່ງຂອງປະເທດອາຊຽນເປັນຜູ້ຍື່ນຄຳຮ້ອງທຸກເຂົ້າມາ. ເຖິງຢ່າງໃດກໍ່ຕາມ, 'ສຳນັກງານໃຫຍ່' ສາມາດໃຫ້ຄຳແນະນຳ ຫຼື ໃຫ້ການສະໜັບສະໜູນດ້ານວິຊາການແກ່ວິສາຫະກິດອາຊຽນເມື່ອວິສາຫະກິດ ຍື່ນຄຳຮ້ອງທຸກເຂົ້າມາ.

4.6 ທີ່ປຶກສາ, ທະນາຍຄວາມ ຫຼື ຜູ້ໃຫ້ຄຳປຶກສາສາມາດຍື່ນຄຳຮ້ອງທຸກເຂົ້າມາ ໃນນາມຂອງວິສາຫະກິດ ອາຊຽນໄດ້ບໍ? ຖ້າໄດ້, ຄວນສະໜອງເລກທະບຽນທຸລະກິດໃດ ແລະ ຫຼັກຖານການຈົດທະບຽນໃດແດ່ ?

ໄດ້, ທີ່ປຶກສາ, ທະນາຍຄວາມ ຫຼື ຜູ້ໃຫ້ຄຳປຶກສາ ອາດຈະຍື່ນຄຳຮ້ອງທຸກເຂົ້າມາ ໃນນາມຂອງວິສາຫະກິດອາ ຊຽນ, ແຕ່ໃນ ກໍລະນີນີ້, ເລກລະຫັດການຈົດທະບຽນ ແລະ ຫຼັກຖານການຈົດທະບຽນຖືກຕ້ອງຕາມກົດໝາຍ ຕ້ອງແມ່ນຂອງວິສາຫະ ກິດອາຊຽນ (AE) ທີ່ຈະເປັນຕົວແທນໃຫ້, ເພາະວ່າ ເປັນຄຳຮ້ອງທຸກຂອງ AE ນັ້ນທີ່ຈະຍື່ນເຂົ້າມາ. ແນ່ນອນວ່າ, ຜູ້ ຮ້ອງທຸກຈະໄດ້ຮັບຄຳແນະນຳ ແລະ ຄວາມຊ່ວຍເຫຼືອໃນການຍື່ນຄຳຮ້ອງທຸກເຂົ້າມາຂອງບຸກຄົນ ຫຼື ນິຕິບຸກຄົນທີ່ບໍ່ໄດ້ ເຮັດວຽກໃຫ້ວິສາຫະກິດອາຊຽນນັ້ນ. ເຖິງຢ່າງໃດກໍ່ຕາມ, ຖ້າຄຳຮ້ອງທຸກທີ່ຍື່ນເຂົ້າມາເປັນຄຳຮ້ອງທຸກແບບບໍ່ລະບຸຊື່, ເລກທະບຽນທຸລະກິດ (ສຳລັບສະມາຄົມການຄ້າ, ສະພາການຄ້າ, ສະ ພາທຸລະກິດ, ສະຫະພັນທຸລະກິດ, ແລະອື່ນໆ) ແລະ ຫຼັກຖານຢັ້ງຢືນການຈົດທະບຽນທີ່ຖືກຕ້ອງຕາມທາງກົດ ໝາຍ (ສຳລັບທະນາຍຄວາມ ແລະ ບໍລິສັດກົດໝາຍ) ຕ້ອງ ແມ່ນນິຕິບຸກຄົນທີ່ຍື່ນຄຳຮ້ອງເຂົ້າມາທຸກໃນນາມຂອງວິສາຫະກິດອາ ຊຽນ ແລະ ບໍ່ແມ່ນຂອງວິສາຫະກິດອາຊຽນເອງ.

4.7 ບຸກຄົນສາມາດຍື່ນຄຳຮ້ອງທຸກເຂົ້າມາໃນ ASSIST ໄດ້ບໍ ?

ບໍ່. ໃນເວລານີ້, ສາມາດໃຊ້ ASSIST ໄດ້ພຽງແຕ່ສຳລັບທຸລະກິດທີ່ຈົດທະບຽນຢ່າງຖືກຕ້ອງຕາມກົດໝາຍ (ຕົວຢ່າງ: ນິຕິບຸກ ຄົນ). ບໍ່ແມ່ນສຳລັບບຸກຄົນ (ຕົວຢ່າງ: ຄົນສາມັນທົ່ວໄປ). ເຖິງຢ່າງໃດກໍ່ຕາມ, ທະນາຍຄວາມແຕ່ລະຄົນ ສາມາດຍື່ນຄຳຮ້ອງທຸກເຂົ້າມາແບບບໍ່ລະບຸຊື່ໃນນາມລູກຄ້າຄົນໜຶ່ງຂອງຕົນ (ເຊັ່ນ: ວິສາຫະກິດຢູ່ໃນອາຊຽນ), ຕາບໃດ ທີ່ຜູ້ກ່ຽວມີຄຸນສົມບັດສອດຄ່ອງກັບທຸກຂໍ້ກຳນົດອື່ນໆ.

4.8 ຜູ້ຮ້ອງທຸກສາມາດຍື່ນຄຳຮ້ອງທຸກແບບບໍ່ລະບຸຊື່ເຂົ້າມາໂດຍບໍ່ໃຊ້ຊື່ບໍລິສັດຂອງຕົນໄດ້ບໍ? ຖ້າໄດ້, ມີວິທີທາງ ທີ່ເປັນທາງເລືອກໃດແດ່ເພື່ອເຮັດແນວນັ້ນ ?

ໄດ້, ອາດຈະຍື່ນຄຳຮ້ອງທຸກແບບບໍ່ລະບຸຊື່ ໃນເມື່ອຜູ້ຮ້ອງທຸກຢາກເຮັດແນວນັ້ນ, ບໍ່ວ່າຈະດ້ວຍເຫດຜົນໃດກໍ່ຕາມ, ຈະບໍ່ ເປີດ ເຜີຍຕົວຕົນຕໍ່ບ່ອນຕິດຕໍ່ພົວພັນຕົ້ນທາງ ແລະ/ຫຼື ປາຍທາງ. ເພື່ອເຮັດແນວນັ້ນ, ຜູ້ຮ້ອງທຸກອາດຈະນຳໃຊ້ ສະມາຄົມການຄ້າ ຫຼື ອົງການຕົວແທນທີ່ຄ້າຍຄືກັນ (ເຊັ່ນ: ສະພາການຄ້າ, ສະພາທຸລະກິດ, ສະຫະພັນທຸລະກິດ, ທະນາຍຄວາມ ຫຼື ບໍລິສັດກົດໝາຍ) ເພື່ອຍື່ນຄຳຮ້ອງທຸກໃນນາມຂອງຕົນ. ສະມາຄົມການຢູ່ໃນອາຊຽນ ຫຼື ອົງການຕົວ ແທນ ບໍ່ຈຳເປັນຕ້ອງລະບຸຊື່ຂອງວິສາຫະກິດອາຊຽນສະເພາະທີ່ຕົນເປັນຕົວແທນໃຫ້ ເພື່ອຍື່ນຄຳຮ້ອງທຸກເຂົ້າມາ ແລະ ພຽງແຕ່ຍື່ນຄຳຮ້ອງທຸກເຂົ້າມາ ໂດຍນຳໃຊ້ເລກທະ ບຽນທຸລະກິດຂອງຕົນເທົ່ານັ້ນ (ເຊັ່ນ: ເລກທະບຽນທຸລະກິດໃນຂອບ ເຂດສິດອຳນາດຂອງອາຊຽນທີ່ມີການຈົດທະບຽນຈັດຕັ້ງ ຫຼືໃບອະນຸຍາດເຮັດວຽກ ສຳລັບທະນາຍຄວາມ ຫຼື ບໍລິສັດກົດ ໝາຍ). ທະນາຍຄວາມ ແລະ ບໍລິສັດກົດໝາຍ ຍັງຈຳເປັນຕ້ອງຈົດທະບຽນລ່ວງໜ້າກັບກອງເລຂາອາຊຽນ ແລະ ຍື່ນ ແບບຟອມສະເພາະ ເພື່ອຮັບເອົາເລກລະຫັດກໍລະນີທີ່ເປັນຄວາມລັບ ເພື່ອນຳໃຊ້ໃນເວລາຍື່ນຄຳຮ້ອງທຸກແບບບໍ່ລະບຸຊື່. ວິທີການນີ້ຍັງມີຈຸດປະສົງເພື່ອໃຫ້ຜູ້ຮ້ອງທຸກຫຼາຍຄົນທີ່ມີບັນຫາດ້ານການຄ້າແບບດຽວກັນ, ເພື່ອຫຼີກລ່ຽງການຮ້ອງທຸກ ຫຼາຍຂໍ້. ຕ້ອງຕັ້ງຂໍ້ສັງເກດວ່າ ອາດຈະມີຄ່າທຳນຽມ ໃນເວລາທີ່ອົງການຕົວແທນສະໜອງການບໍລິການແບບນີ້ແກ່ບັນ ດາວິສາຫະກິດອາຊຽນທີ່ຂໍຮ້ອງບໍ່ໃຫ້ລະບຸຊື່.

4.9 ເປັນຫຍັງ/ໃນເວລາໃດ ທີ່ຜູ້ຮ້ອງທຸກ ຫຼື ຜູ້ຮ້ອງທຸກຫຼາຍຄົນ ຄວນພິຈາລະນາຍື່ນຄຳຮ້ອງທຸກເຂົ້າມາ ຜ່ານສະມາຄົມການຄ້າອາຊຽນ, ສະພາທຸລະກິດ ຫຼື ສະຫະພັນທຸລະກິດອາຊຽນທີ່ຈົດທະບຽນຢ່າງຖືກຕ້ອງຕາມກົດໝາຍ ?

ອາດຈະນຳໃຊ້ຮູບແບບນີ້ ຖ້າວ່າມີຫຼາຍບໍລິສັດມີບັນຫາ ຫຼື ປະເດັນບັນຫາດ້ານການຄ້າແບບດຽວກັນ ແລະ ພວກເຂົາຕັດສິນໃຈວ່າຈະນຳໃຊ້ສະມາຄົມທຸລະກິດທີ່ເປັນຕົວແທນຂອງພວກເຂົາ (ເຊັ່ນ: ສະມາຄົມການຄ້າ, ສະ ພາການຄ້າ, ສະພາທຸລະກິດ, ສະຫະພັນທຸລະກິດ ແລະອື່ນໆ) ເພື່ອຍື່ນຄຳຮ້ອງທຸກເຂົ້າມາໃນນາມຂອງພວກເຂົາເພື່ອຊອກຫາວິທີແກ້ໄຂບັນຫາທັງໝົດຂອງພວກເຂົາ. ສະຖານະການໜຶ່ງອີກ, ອາດຈະແມ່ນບ່ອນທີ່ວິສາຫະກິດບໍ່ຢາກເປີດເຜີຍຕົວຕົນຂອງຕົນ ເນື່ອງຈາກຄວາມລະອຽດອ່ອນທີ່ອາດຈະເກີດຂຶ້ນຂອງບັນ ຫາ ແລະ ຢາກໃຫ້ສະມາຄົມທຸລະກິດຂອງຕົນຍື່ນຄຳຮ້ອງທຸກເຂົ້າມາໃນນາມຂອງຕົນ , ສະນັ້ນຈຶ່ງຮັກສາໄວ້ໂດຍບໍ່ເປີດເຜີຍຊື່. ໃນກໍລະ ນີສຸດທ້າຍນີ້, ອາດຈະນຳໃຊ້ພຽງແຕ່ທະນາຍຄວາມ ຫຼື ບໍລິສັດກົດໝາຍທີ່ໄດ້ຈົດທະບຽນ ແລະ ມີໃບອະນຸຍາດຢູ່ໃນອາຊຽນເທົ່ານັ້ນ, ໂດຍອີງໃສ່ວ່າ ພວກເຂົາມີເງື່ອນໄຂຄົບຕາມຂໍ້ກຳນົດໃນການຈົດທະບຽນກັບກອງເລຂາອາຊຽນ.

4.10 ຜູ້ຮ້ອງທຸກສາມາດອັບโหลดເອກະສານໃດໜຶ່ງບໍ່ (ເຊັ່ນ: ກົດໝາຍຕ່າງໆ, ການຕົດຕໍ່ພົວພັນກັບເຈົ້າໜ້າທີ່, ໃບອະ ນຸຍາດຕ່າງໆ, ຮູບຖ່າຍທີ່ເປັນຫຼັກຖານ, ບົດບັນທຶກດ້ານກົດໝາຍ ແລະອື່ນໆ) ໃນເວລາຍື່ນຄຳ ຮ້ອງທຸກເຂົ້າມາ ?

ໄດ້. ໃນທຸກຮູບແບບ, ຕາບໃດທີ່ມັນຢູ່ໃນຂອບເຂດຈຳກັດຂອງ Mb ສຳລັບເອກະສານຄັດຕິດທີ່ໄດ້ລະບຸໃນແບບຟອມ ຄຳຮ້ອງທຸກທາງອອນໄລນ້ຂອງ ASSIST. ໃນກໍລະນີພິເສດ, ອາດຈະຮ້ອງຂໍໃຫ້ຜູ້ຮ້ອງທຸກສະໜອງຂໍ້ມູນເພີ່ມເຕີມແກ່ຜູ້ດູແລລະບົບກາງໂດຍທາງອີເມວ.

4.11 ສາມາດບັນທຶກ (save) ຮ່າງຄຳຮ້ອງທຸກໄວ້ໃນເວບໄຊທ້ຂອງ ASSIST ໄດ້ບໍ່ (ເຊັ່ນ: ແບບຟອມຄຳຮ້ອງທຸກ ທາງອອນໄລນ້) ເພື່ອເຮັດສຳເລັດຕາມພາຍຫຼັງ ?

ບໍ່. ຜູ້ຮ້ອງທຸກ ຄວນເຮັດວຽກແບບອອບໄລນ້ ເພື່ອກະກຽມຄຳຮ້ອງທຸກ ແລະຫຼັງຈາກນັ້ນ ຈຶ່ງຄັດລອກ (copy) ແລະ ໃສ່ຂໍ້ມູນ (paste) ໃນແບບຟອມຄຳຮ້ອງທຸກທາງອອນໄລນ້ ໃນເວລາທີ່ຍື່ນຄຳຮ້ອງ ທຸກເຂົ້າມາ.

4.12 ສາມາດຍື່ນຄຳຮ້ອງທຸກແບບຄັ້ງດຽວຕ່າງຫຼາຍປະເທດສະມາຊິກອາຊຽນໄດ້ບໍ່ ຖ້າວ່າມີບັນຫາການຄ້າ ແບບດຽວກັນຢູ່ໃນຫຼາຍປະເທດ ?

ບໍ່. ຄຳຮ້ອງແຕ່ລະສະບັບສາມາດໃຊ້ໄດ້ຕໍ່ 1 ປະເທດສະມາຊິກອາຊຽນຄັ້ງດຽວເທົ່ານັ້ນ. ຜູ້ຮ້ອງທຸກຈະຕ້ອງຍື່ນ ຄຳ ຮ້ອງທຸກຫຼາຍຄັ້ງ ຖ້າວ່າປະສົບບັນຫາດຽວກັນໃນຫຼາຍປະເທດ.

4.13 ຜູ້ຮ້ອງທຸກຈຳເປັນຕ້ອງສົ່ງສຳເນົາຄຳຮ້ອງທຸກຂອງຕົນຕໍ່ຜູ້ມີສ່ວນກ່ຽວຂ້ອງອື່ນໆພາຍໃຕ້ ASSIST ບໍ?

ບໍ່. ທຸກການສື່ສານແມ່ນເຮັດຜ່ານທາງອອນໄລນ້ ໂດຍຜ່ານເວທີຂອງ ASSIST.

4.14 ສາມາດຍື່ນຄຳຮ້ອງທຸກໃນພາສາອື່ນນອກຈາກພາສາອັງກິດ ໄດ້ບໍ? ຖ້າບໍ່ໄດ້, ຢ່າງໜ້ອຍກໍ່ສາມາດສະໜອງ ຂໍ້ມູນຄວາມຈິງ ແລະ ກົດ ໝາຍທີ່ສະໜັບສະໜູນ (ຕົວຢ່າງ: ຫຼັກຖານການລົງທະບຽນຂອງບໍລິສັດ ຫຼື ສຳ ເນົາກົດໝາຍຂອງປະເທດ) ເປັນພາສາຂອງຜູ້ຮ້ອງທຸກ ຫຼື ຂອງປະເທດທີ່ມີບັນຫາການຄ້າເກີດຂຶ້ນ ໄດ້ບໍ ?

ພາສາອັງກິດເປັນພາສາຂອງການສື່ສານຢ່າງເປັນທາງການພາຍໃນລະບົບ ແລະ ຕ້ອງຂຽນຄຳຮ້ອງທຸກເປັນພາສາ ອັງກິດ. ເອກະສານສະໜັບສະໜູນທີ່ໄດ້ອັບโหลดโดยผู้ร้องทุก (ເຊັ່ນ: ບົດສະຫຼຸບຫຍໍ້ທາງກົດໝາຍ, ບົດລາຍງານດ້ານ ວິຊາການ ແລະອື່ນໆ) ຕ້ອງຂຽນເປັນພາສາອັງກິດ. ເຖິງຢ່າງໃດກໍ່ຕາມ, ທຸກເອກະສານທາງການ ເຊັ່ນ: ຫຼັກຖານຢັ້ງຢືນ ການຈົດທະບຽນ, ກົດໝາຍຂອງປະເທດ, ໃບຢັ້ງຢືນ, ໃບອະນຸຍາດ ຫຼື ຄ້າຍຄືກັນ ຊຶ່ງຂຽນເປັນພາສາທາງການຂອງປະ ເທດ ອາດຈະໄດ້ອັບโหลดเข้าในระบบเพื่อสะหັນບສະໜູນຄຳຮ້ອງທຸກ, ແຕ່ຄວນຈະມີການແປເປັນພາສາອັງກິດ. ຍັງ ຈະໄດ້ຮັບສະເໜີວິທີແກ້ໄຂບັນຫາຈາກປະເທດປາຍທາງເປັນພາສາອັງກິດອີກດ້ວຍ.

5. ເມື່ອໄດ້ຍື່ນຄຳຮ້ອງທຸກເຂົ້າມາແລ້ວ

5.1 ຜູ້ຮ້ອງທຸກ ຄວນເຮັດແນວໃດ ຖ້າວ່າ ເຮັດເສຍ ຫຼື ລືມເລກລະຫັດຕິດຕາມ ແລະ ອີເມວທີ່ໃຊ້ເພື່ອຮ້ອງທຸກ?

ຜູ້ຮ້ອງທຸກ ຄວນຕິດຕໍ່ບ່ອນຕິດຕໍ່ພົວພັນຂອງກອງເລຂາອາຊຽນ ດັ່ງທີ່ສະແດງຢູ່ໃນເວັບໄຊທ້ຂອງ ASSIST.

5.2ມີຫຍັງເກີດຂຶ້ນກັບຄຳຮ້ອງທຸກ ຖ້າວ່າ ຜູ້ດູແລລະບົບກາງ (CA) ຫຼື ບ່ອນຕິດຕໍ່ພົວພັນປາຍທາງ (DCP)

ປະຕິ ເສດ ?

ເມື່ອຄຳຮ້ອງທຸກຖືກປະຕິເສດ, ນັ້ນແມ່ນໄດ້ສະຫຼຸບດ້ານວິຊາການໃນການດຳເນີນການສະເພາະນັ້ນແລ້ວ ແລະ ຈະໄດ້ຍຸດຕິຄຳຮ້ອງທຸກດັ່ງກ່າວ. ເຖິງຢ່າງໃດກໍ່ຕາມ, ຜູ້ຮ້ອງທຸກ ອາດຈະຍື່ນຄຳຮ້ອງທຸກເຂົ້າມາໃໝ່ ພາຍໃຕ້ ASSIST, ດ້ວຍການສະໜອງຂໍ້ມູນເພີ່ມເຕີມ ຫຼື ຂໍ້ມູນໃໝ່ ເພື່ອຍັ້ງຍືນຄຳຮ້ອງທຸກຂອງຕົນ, ຫຼື ຊອກຫາທາງເລືອກອື່ນ ເພື່ອຊອກຫາວິທີແກ້ໄຂທີ່ເໝາະສົມ, ລວມທັງການສົ່ງຕໍ່ເຖິງກົນໄກການແກ້ໄຂຂໍ້ຂັດແຍ່ງອື່ນໆ (ເບິ່ງຂໍ້ມູນທີ່ຢູ່ຂ້າງລຸ່ມໃນພາກ "ເມື່ອໄດ້ສະໜອງວິທີແກ້ໄຂໃຫ້ແລ້ວ").

5.3ຜູ້ດູແລລະບົບກາງ ຫຼື ບ່ອນຕິດຕໍ່ພົວພັນປາຍທາງ ສາມາດຂໍຂໍ້ມູນເພີ່ມເຕີມຈາກຜູ້ຮ້ອງທຸກ (ວິສາຫະກິດຂອງອາຊຽນ) ໄດ້ບໍ?

ແມ່ນແລ້ວ, ພວກເຂົາສາມາດເຮັດໄດ້. ຜູ້ດູແລລະບົບກາງສາມາດສົ່ງຄຳຮ້ອງທຸກດັ່ງກ່າວກັບຄືນຫາວິສາຫະກິດດ້ວຍການນຳໃຊ້ປຸ່ມ 'Incomplete - ບໍ່ຄົບຖ້ວນ' ໃນລະບົບ ASSIST ແລະ ຂໍຂໍ້ມູນເພີ່ມເຕີມ. ບ່ອນຕິດຕໍ່ ພົວພັນປາຍທາງສາມາດຂໍຂໍ້ມູນເພີ່ມເຕີມຈາກວິສາຫະກິດອາຊຽນໂດຍຜ່ານຜູ້ດູແລລະບົບກາງເທົ່ານັ້ນ ແລະ ອັນນີ້ຕ້ອງເຮັດແບບ 'ອອບໄລນ໌' (ເຊັ່ນ: ທາງອີເມວ ຫຼື ການສື່ສານທາງໂທລະສັບ). ບ່ອນຕິດຕໍ່ພົວພັນປາຍທາງບໍ່ມີການພົວພັນໂດຍກົງກັບວິສາຫະກິດຂອງອາຊຽນ.

5.4ຜູ້ຮ້ອງທຸກສາມາດສະໜອງຂໍ້ມູນເພີ່ມເຕີມໄດ້ ດ້ວຍຄວາມສະຫັນກໃຈບໍ? ຖ້າໄດ້, ມີຂັ້ນຕອນຫັຍງແດ່ ເພື່ອເຮັດແນວນັ້ນ?

ບໍ່. ຜູ້ຮ້ອງທຸກບໍ່ສາມາດໃຫ້ຂໍ້ມູນເພີ່ມເຕີມໄດ້ ເມື່ອຜູ້ດູແລລະບົບກາງ ຫຼື ປະເທດປາຍທາງຍອມຮັບ ຫຼື ປະຕິ ເສດ ຄຳຮ້ອງທຸກແລ້ວ. ເພື່ອເຮັດແນວນັ້ນ, ຜູ້ຮ້ອງທຸກຈະຕ້ອງຖອນຄຳຮ້ອງທຸກອອກໄປ ແລະ ຍື່ນຄຳຮ້ອງເຂົ້າມາໃໝ່ ໂດຍມີຂໍ້ມູນເພີ່ມເຕີມ.

5.5 ສາມາດຖອນຄຳຮ້ອງທຸກອອກໄປໄດ້ບໍ ເມື່ອຜູ້ຮ້ອງທຸກຍື່ນຄຳຮ້ອງທຸກເຂົ້າມາແລ້ວ? ຖ້າໄດ້, ມີຂັ້ນຕອນຫັຍງແດ່ ເພື່ອເຮັດແນວນັ້ນ?

ແມ່ນແລ້ວ, ສາມາດເຮັດໄດ້. ຜູ້ຮ້ອງທຸກພຽງແຕ່ສາມາດຖອນຄຳຮ້ອງທຸກຄືນອອກໄປໄດ້ທຸກເວລາໃນລະຫວ່າງການດຳເນີນການ. ເພື່ອເຮັດແນວນັ້ນ, ຜູ້ຮ້ອງທຸກຈະຕ້ອງ log ເຂົ້າໄປໃນ dashboard ຂອງ ASSIST, ເປີດຄຳຮ້ອງທຸກ ແລະ ກົດທີ່ປຸ່ມ 'Withdraw-ຖອນ'. ຜູ້ມີສ່ວນກ່ຽວຂ້ອງທັງໝົດພາຍໃຕ້ ASSIST ຈະໄດ້ຮັບການແຈ້ງເຕືອນໂດຍອັດຕະໂນມັດໃນລະບົບ ASSIST ກ່ຽວກັບການຖອນຄຳຮ້ອງທຸກດັ່ງກ່າວ.

5.6 ວິສາຫະກິດຂອງອາຊຽນສື່ສານໂດຍກົງກັບບ່ອນຕິດຕໍ່ພົວພັນປາຍທາງ ຫຼື ເຈົ້າໜ້າທີ່ຜູ້ຮັບຜິດຊອບບໍ ?

ບໍ່. ບໍ່ມີການສື່ສານໂດຍກົງ ບໍ່ວ່າໃນຂັ້ນໃດຂອງຂັ້ນຕອນກໍ່ຕາມ.

5.7 ບ່ອນຕິດຕໍ່ພົວພັນປາຍທາງສາມາດຂໍຕໍ່ເວລາເພີ່ມສູງສຸດ 20 ມື້ ໄດ້ຈັກເທື່ອ ?

ໄດ້ພຽງຄັ້ງດຽວເທົ່ານັ້ນ ໂດຍກົດປຸ່ມທາງອອນໄລນ໌.

5.8 ຜູ້ຮ້ອງທຸກ ຄວນເຮັດແນວໃດ ຖ້າວ່າ ບໍ່ໄດ້ຮັບຂ່າວຈາກ ASSIST ດ້ວຍຄຳຕອບພາຍໃນ 30 ຫາ 50 ມື້ ເຮັດວຽກ (ເຊັ່ນ: 6-10 ອາທິດຕາມມື້ປະຕິທິນ) ຈາກວັນທີ ທີ່ບ່ອນຕິດຕໍ່ພົວພັນປາຍທາງໄດ້ຮັບເອົາຄຳຮ້ອງທຸກແລ້ວ ?

ໃນກໍລະນີນີ້, ຜູ້ຮ້ອງທຸກ ອາດຈະຕິດຕໍ່ພົວພັນຫາຜູ້ດູແລລະບົບກາງຂອງ ASSIST ຜ່ານທາງອີເມວ (ເບິ່ງເວັບໄຊທ໌ ASSIST ສຳລັບລາຍລະອຽດການຕິດຕໍ່ພົວພັນຂອງບ່ອນຕິດຕໍ່ພົວພັນຂອງ ASSIST ໃນກອງເລຂາອາ ຊຽນ) ເພື່ອສອບຖາມກ່ຽວກັບສະຖານະການຂອງການດຳເນີນການ, ຫຼື ຕິດຕໍ່ພົວພັນກັບບ່ອນຕິດຕໍ່ພົວພັນຕົ້ນທາງໃນປະເທດຂອງຕົນ ເພື່ອຕິດຕາມໃນນາມຂອງຕົນກັບບ່ອນຕິດຕໍ່ພົວພັນປາຍທາງວ່າ ເປັນຫຍັງຈຶ່ງມີຄວາມຊັກຊ້າ.

6. ການສະໜອງວິທີແກ້ໄຂຕ່າງໆ

6.1 ຜູ້ຮ້ອງທຸກ ສາມາດເຮັດຫຍັງໄດ້ແດ່ ຖ້າວ່າ ຄຳຮ້ອງທຸກຂອງຕົນບໍ່ໄດ້ຮັບການແກ້ໄຂ?

ໃນກໍລະນີນີ້, ຜູ້ຮ້ອງທຸກ ອາດຈະຕິດຕໍ່ພົວພັນກັບຜູ້ດູແລລະບົບກາງຂອງ ASSIST ຜ່ານທາງອີເມວເພື່ອສອບຖາມກ່ຽວກັບສະພາບການດຳເນີນການ, ແລະ ຕິດຕໍ່ພົວພັນກັບບ່ອນຕິດຕໍ່ພົວພັນໃນປະເທດຂອງຕົນ ເພື່ອຂໍາ ນວຍຄວາມສະດວກໃຫ້ແກ່ຂັ້ນຕອນ. ຜູ້ຮ້ອງທຸກສາມາດຊອກຫາທາງເລືອກອື່ນ ລວມທັງກົນໄກການແກ້ໄຂຂໍ້ຂັດແຍ່ງ (ຕົວຢ່າງ: ຂັ້ນຕອນຂອງກົນໄກການແກ້ໄຂຂໍ້ຂັດແຍ້ງຂັ້ນສູງຂອງອາຊຽນ (ASEAN Enhanced Dispute Settlement Mechanism), ໂດຍຜ່ານລັດຖະບານປະ ເທດຂອງຕົນ, ຫຼື ການດຳເນີນຄະດີຂອງປະເທດໃນປະເທດປາຍທາງ, ຫຼື ການໄກ່ເກ່ຍ, ຫຼື ຂັ້ນຕອນຂອງກົນໄກການແກ້ໄຂຂໍ້ຂັດແຍ້ງຂອງ WTO, ໂດຍຜ່ານລັດຖະບານປະເທດຂອງຕົນ ໃນຖານະເປັນສະມາຊິກຂອງ WTO ຕໍ່ ປະເທດປາຍທາງ).

6.2 ຜູ້ຮ້ອງທຸກ ສາມາດເຮັດຫຍັງໄດ້ແດ່ ຖ້າວ່າ ບໍ່ພໍໃຈຕໍ່ວິທີແກ້ໄຂຕໍ່ຄຳຮ້ອງທຸກ?

ໃນກໍລະນີນີ້, ຜູ້ຮ້ອງທຸກ ອາດຈະພິຈາລະນາຍື່ນຄຳຮ້ອງທຸກສະບັບໃໝ່ຂຶ້ນມາ ພາຍໃຕ້ ASSIST ດ້ວຍຂໍ້ມູນຄວາມຈິງໃໝ່ ຫຼື ຂໍ້ມູນຄວາມຈິງເພີ່ມເຕີມ, ຫຼື ຊອກຫາທາງເລືອກອື່ນ, ລວມທັງການຊອກຫາຄວາມຊ່ວຍເຫຼືອຈາກກົນໄກການແກ້ໄຂຂໍ້ຂັດແຍ່ງດັ່ງທີ່ໄດ້ກ່າວໃນຂໍ້ 6.1 ຂ້າງເທິງ.

6.3 ຜູ້ຮ້ອງທຸກ ສາມາດຂໍອຸທອນຕໍ່ການດຳເນີນການ ທີ່ບໍ່ໄດ້ຮັບການແກ້ໄຂ ຫຼື ວິທີການທີ່ບໍ່ເປັນຫນ້າເພິ່ງພໍໃຈໄດ້ບໍ?

ບໍ່. ASSIST ແມ່ນກົນໄກ “ແບບບໍ່ຜູກມັດ” ແລະ ແບບສະໝັກໃຈ. ມັນບໍ່ແມ່ນສ່ວນໜຶ່ງຂອງການດຳເນີນຄະ ດີທາງກົດໝາຍທີ່ຜູ້ຮ້ອງທຸກສາມາດອຸທອນຄຳຕັດສິນຂອງລັດຖະບານໄດ້.

6.4 ຜູ້ຮ້ອງທຸກ ສາມາດຍື່ນຄຳຮ້ອງທຸກເຂົ້າມາໃໝ່ໄດ້ອີກບໍ່ ຖ້າວ່າບໍ່ໄດ້ຮັບຄຳຕອບ ຫຼື ໄດ້ຮັບວິທີແກ້ໄຂທີ່ພິຈາລະນາແລ້ວເຫັນວ່າບໍ່ເປັນຫນ້າພໍໃຈ ?

ໄດ້, ໃນດ້ານເຕັກນິກແລ້ວ ສາມາດເຮັດໄດ້, ແຕ່ອາດຈະບໍ່ມີຜົນດີ ແລະ ເສຍເວລາ ແລະ ຊັບພະຍາກອນ. ເຖິງຢ່າງ ໃດກໍ່ຕາມ, ຖ້າຜູ້ຮ້ອງ ທຸກຕັດສິນໃຈຈະເຮັດແນວນັ້ນ, ຂໍແນະນຳທີ່ສຸດໃຫ້ພິຈາລະນາປັບປຸງແກ້ໄຂຄຳຮ້ອງທຸກ, ສະ ຫນອງຫຼັກຖານຄວາມຈິງເພີ່ມເຕີມ ຫຼື ຂໍ້ໂຕ້ແຍ້ງທາງກົດໝາຍ ເພື່ອໃຫ້ປະເທດປາຍທາງພິຈາລະນາ.

ຍັງສາມາດໃຊ້ຫນ້າ 'ຄຳຖາມທີ່ຖາມເລື້ອຍໆ' ໄດ້ສຳລັບຜູ້ໃຊ້ ຫຼື ຜູ້ມີສ່ວນສຳຄັນ ຂອງ ASSIST ພາຍໃຕ້ແຖບ ‘FAQ’ ໃນເວັບໄຊທ໌ຂອງ ASSIST ທີ່: https://assist.asean.org/read/faq/30/.

ເອກະສານຊ້ອນທ້າຍ 4.
ກໍລະນີສຶກສາແບບສົມມຸດຕິຖານ

ໄດ້ສ້າງຫຼາຍກໍລະນີສຶກສາຂຶ້ນ ເພື່ອທົດສອບການດຳເນີນງານ ແລະ ການເຮັດວຽກຂອງລະບົບ ASSIST. ສະຖານະການຈຳລອງເຫຼົ່ານີ້ເພີ່ມລາຍລະ ອຽດທີ່ແທ້ຈິງໃນການສະແດງໃຫ້ເຫັນເຖິງຂອບເຂດຂອງ ASSIST ທີ່ມີຈຸດປະສົງ ແລະ ການພົວພັນຂອງວິສາຫະກິດຜູ້ຮ້ອງທຸກ, ຜູ້ດູແລລະບົບແລະ ຈຸດຕິດຕໍ່ແຫ່ງຊາດ. ຂໍ້ມູນໃນການສຶກສາຫ້າກໍລະນີນີ້ແມ່ນເລື່ອງເລົ່າ ແລະ ບໍ່ໄດ້ສະທ້ອນເຖິງ ຖານະ ແລະ/ຫຼື ຂໍ້ກຳນົດໃດໆທີ່ກ່ຽວຂ້ອງກັບປະ ເທດສະມາຊິກອາຊຽນໃດໜຶ່ງ. ບໍ່ມີການກຳນົດຕົວຕົນກັບບໍລິສັດຕົວຈິງ, ປະເທດ, ການຄ້າສິນຄ້າ, ການບໍລິການ ຫຼື ການລົງທຶນແມ່ນມີຈຸດປະສົງ ຫຼື ຄວນຈະຖືກຕີຄວາມໝາຍ.

ຍັງໄດ້ສ້າງການສອນເພີ່ມແບບເທື່ອລະກ້າວໂດຍອີງໃສ່ກໍລະນີສຶກສາດັ່ງຕໍ່ໄປນີ້ ເພື່ອໃຫ້ມີຄວາມເຂົ້າໃຈດີຂຶ້ນກ່ຽວກັບຂັ້ນຕອນຂອງ ASSIST. ມີການສອນເພີ່ມໃນພາກສຸດທ້າຍຂອງຊຸດເຄື່ອງມື ແລະ ຍັງມີຢູ່ໃນເວັບໄຊທ້ຂອງ ASSIST ທີ່ https://assist.asean.org/read/proces/20. ອີກດ້ວຍ.

ສະຖານະການທຳອິດແມ່ນສຳລັບຄຳຮ້ອງທຸກທີ່ບໍ່ຢູ່ພາຍໃຕ້ ASSIST, ສະຖານະການທີ 2 ແລະ 3 ແມ່ນກໍລະນີການຄ້າທີ່ດີ, ໃນ ຂະນະທີ່ 2 ສະຖານະການສຸດທ້າຍແມ່ນສົມມຸດຖານໃນກໍລະນີການຄ້າການບໍລິການ.

ສະຖານະການຕ່າງໆ

ກໍລະນີ 1:

ຄຳຮ້ອງທຸກຖືກຍື່ນໂດຍວິສາຫະກິດອາຊຽນ ແລະ ຖືກຜູ້ດູແລລະບົບຂອງ ASSIST ປະຕິເສດ

ເຫດຜົນຂອງການປະຕິເສດ:

ຄຳຮ້ອງທຸກໄດ້ແກ້ໄຂບັນຫາທີ່ຢູ່ນອກຂອບເຂດຂອງ ASSIST ແລະດັ່ງນັ້ນ ວິສາຫະກິດອາຊຽນບໍ່ໄດ້ຍື່ນຢ່າງຖືກຕ້ອງ.

ກໍລະນີ 2:

ຄຳຮ້ອງທຸກທີ່ຍື່ນໂດຍສະມາຄົມການຄ້າອາຊຽນໃນນາມຂອງສະມາຊິກ, ວິສາຫະກິດອາຊຽນ, ໄດ້ຮັບການຍອມຮັບຈາກຜູ້ດູແລລະບົບ ຂອງ ASSIST ວ່າຖືກຍື່ນໃຫ້ຢ່າງຖືກຕ້ອງ, (ເຊັ່ນ: ຄົບຖ້ວນ ແລະ ຢູ່ໃນຂອບເຂດຂອງ ASSIST), ແຕ່ຖືກ ຈຸດຕິດຕໍ່ປາຍທາງ ປະຕິເສດ

ເຫດຜົນຂອງການປະຕິເສດ:

ຄຳຮ້ອງທຸກດັ່ງກ່າວຖືກຈຸດຕິດຕໍ່ປາຍທາງປະຕິເສດ ເພາະວ່າຂໍ້ຂັດແຍ້ງດຽວກັນນີ້ໄດ້ຖືກຟ້ອງຢູ່ທີ່ອົງການການຄ້າໂລກ (WTO) ແລ້ວ ໃນຄຳຮ້ອງທຸກທີ່ປະເທດທີ່ລົງທະບຽນວິສາຫະກິດອາຊຽນ (ບ່ອນທີ່ຈຸດຕິດຕໍ່ຕົ້ນທາງຕັ້ງຢູ່) ດຳເນີນຕໍ່ປະເທດຂອງຈຸດຕິດຕໍ່ ປາຍທາງ. ອັນນີ້ເປັນຄຳຮ້ອງທຸກຢູ່ນອກຂອບເຂດຂອງ ASSIST ແລະ ພາຍໃນສິດທິຂອງຈຸດຕິດຕໍ່ປາຍທາງເພື່ອປະຕິເສດ. ໃນ ກໍລະນີທີ່ສ່ຽງ, ການປະຕິເສດໂດຍຈຸດຕິດຕໍ່ປາຍທາງໄດ້ຖືກກະຕຸ້ນຢ່າງພຽງພໍ ແລະ ຢູ່ໃນອະທິປະໄຕຂອງບັນດາປະເທດສະມາຊິກ ອາຊຽນພາຍໃນລະບົບ ASSIST.

ກໍລະນີ 3:

ຄຳຮ້ອງທຸກທີ່ຍື່ນໂດຍທະນາຍຄວາມຂອງບໍລິສັດກົດໝາຍຈິດທະບຽນໃນອາຊຽນໃນນາມລູກຄ້າຂອງຕົນ, ວິສາຫະກິດອາຊຽນ, ໄດ້ຮັບ ການຍອມຮັບຈາກຜູ້ດູແລລະບົບວ່າ ເປັນການຍື່ນຢ່າງຖືກຕ້ອງ (ເຊັ່ນ: ຄົບຖ້ວນ ແລະ ຢູ່ໃນຂອບເຂດຂອງ ASSIST), ຍັງໄດ້ ຍອມຮັບ ແລະ ໄດ້ສະເໜີວິທີແກ້ໄຂໂດຍຈຸດຕິດຕໍ່ປາຍທາງ ແລະ ເປັນທີ່ຍອມຮັບຂອງວິສາຫະກິດອາຊຽນແລ້ວ.

ເຫດຜົນຂອງການຍອມຮັບ:

ຈຸດຕິດຕໍ່ຂອງຈຸດໝາຍປາຍທາງຍອມຮັບເອົາຄຳຮ້ອງທຸກດັ່ງກ່າວເປັນບັນຫາ ຊຶ່ງຍົນດີທີ່ຈະພົວພັນກັບທະນາຍຄວາມອາຊຽນໂດຍຜ່ານ ASSIST, ພົວ ພັນກັບເຈົ້າໜ້າທີ່ກ່ຽວຂ້ອງພາຍໃນປະເທດ (RAs) ແລະ ໃຫ້ວິທີແກ້ໄຂຕໍ່ທະນາຍຄວາມອາຊຽນໂດຍຜ່ານ ASSIST.

ໃນກໍລະນີທີ່ມີສ່ວນຮ່ວມ, ຈຸດຕິດຕໍ່ຕົ້ນທາງບໍ່ໄດ້ມີສ່ວນຮ່ວມຢ່າງຈິງຈັງ, ແຕ່ວ່າທຸກຂັ້ນຕອນທີ່ເປັນໄປໄດ້ໃນຂັ້ນຕອນ ASSIST ລວມທັງການຮ້ອງຂໍເບື້ອງຕົ້ນຈາກຜູ້ດູແລລະບົບ ເພື່ອຂໍຂໍ້ມູນເພີ່ມເຕີມຈາກທະນາຍຄວາມອາຊຽນ ແມ່ນເປັນການຈຳລອງ ເພື່ອ ຈຸດປະສົງໃນການກວດກາການຄົນຄ້າເນີນການຢ່າງເຕັມທີ່ຂອງ ASSIST.

ກໍລະນີ 4:
ຄຳຮ້ອງທຸກທີ່ຍື່ນໂດຍລັດວິສາຫະກິດອາຊຽນ, ໂດຍຜູ້ດູແລລະບົບຍອມຮັບວ່າມີການຍື່ນຢ່າງຖືກຕ້ອງ (ເຊັ່ນ: ຄົບຖ້ວນ ແລະ ຢູ່ໃນ ຂອບເຂດຂອງ **ASSIST**), ຍັງໄດ້ຍອມຮັບ ແລະ ໄດ້ສະເໜີວິທີແກ້ໄຂ ແລະ ຈຸດຕິດຕໍ່ປາຍທາງ ແລະ ເປັນທີ່ຍອມຮັບໂດຍວິສາຫະ ກິດອາຊຽນ

ເຫດຜົນຂອງການຍອມຮັບ:
ຈຸດຕິດຕໍ່ປາຍທາງຍອມຮັບຄຳຮ້ອງທຸກດັ່ງກ່າວເປັນປະເດັນທີ່ປະເທດສະມາຊິກອາຊຽນ ໂດຍສະເພາະແມ່ນເຕັມໃຈທີ່ຈະພົວພັນກັບວິ ສາຫະກິດອາຊຽນ, ພົວພັນກັບອົງການທີ່ກ່ຽວຂ້ອງພາຍໃນປະເທດ (**RAs**) ແລະ ສະໜອງການແກ້ໄຂໃຫ້ **AE** ຜ່ານ **ASSIST.** ກໍລະນີທີ່ເປັນເດີມພັນແມ່ນມີໂຄງສ້າງເພື່ອສະທ້ອນໃຫ້ເຫັນຮູບແບບ **1** (ຫຼື ອັນທີ່ເອີ້ນວ່າການສະໜອງຂ້າມຊາຍແດນ) ຂອງການຄ້າ ການບໍລິການລະຫວ່າງປະເທດ, **ຊຶ່ງ**ໄດ້ກຳນົດໄວ້ໃນສັນຍາຂອບການບໍລິການອາຊຽນ (**AFAS**) ແລະ ສັນຍາທົ່ວໄປກ່ຽວກັບການຄ້າ ການບໍລິການ (**GATS**), ເປັນການສະໜອງການບໍລິການຈາກອານາເຂດຂອງປະເທດໜຶ່ງເຂົ້າໄປໃນອານາເຂດຂອງປະເທດອື່ນ ຫຼື ເວົ້າອີກຢ່າງໜຶ່ງໃນທຸກກໍລະນີການຄ້າທີ່ການບໍລິການຂ້າມຊາຍແດນ.

ກໍລະນີ 5:
ຄຳຮ້ອງທຸກທີ່ຍື່ນໂດຍວິສາຫະກິດອາຊຽນ (ບໍລິສັດແມ່ຂອງບໍລິສັດຍ່ອຍຂອງຕົນ), ທີ່ຍອມຮັບໂດຍຜູ້ດູແລລະບົບວ່າມີການຍື່ນຢ່າງ ຖືກຕ້ອງ (ເຊັ່ນ: ຄົບຖ້ວນ ແລະ ຢູ່ໃນຂອບເຂດຂອງ ASSIST), ແຕ່ຖືກ ຈຸດຕິດຕໍ່ປາຍທາງປະຕິເສດ.

ເຫດຜົນຂອງການປະຕິເສດ:
ຈຸດຕິດຕໍ່ປາຍທາງໄດ້ປະຕິເສດຄຳຮ້ອງທຸກ ເພາະວ່າພົບວ່າຂໍ້ກ່າວຫາຂອງວິສາຫະກິດອາຊຽນຂາດຄຸນລັກສະນະດັ່ງທີ່ຈຸດຕິດຕໍ່ ປາຍທາງໄດ້ປະຕິບັດຕາມຄຳໝັ້ນສັນຍາຂອງອາຊຽນທີ່ກ່ຽວຂ້ອງແລ້ວ. ກໍລະນີນີ້ແມ່ນຢູ່ພາຍໃຕ້ຮູບແບບ 3 (ການມີໜ້າການຄ້າ) ຂອງການຄ້າການບໍລິການ, ຊຶ່ງໄດ້ກຳນົດໄວ້ໃນ GATS ແລະ AFAS, ເປັນການສະໜອງໃຫ້ແກ່ຜູ້ສະໜອງການບໍລິການຂອງປະເທດ ໜຶ່ງ, ຜ່ານການມີໜ້າການຄ້າໃນອານາເຂດຂອງປະເທດອື່ນ.

ວິສາຫະກິດອາຊຽນແມ່ນກໍລະນີນີ້ແມ່ນບໍລິສັດແມ່ໃນປະເທດສະມາຊິກອາຊຽນອື່ນຂອງບໍລິສັດທີ່ເປັນສາຂາຍ່ອຍຂອງຕົນທີ່ມີ ສະມາຊິກອາຊຽນ ຫຼື DCP ຕັ້ງຢູ່ ແລະ ຕົວຈິງແລ້ວແມ່ນຜູ້ທີ່ມີບັນຫາ ຫຼື ຮ້ອງທຸກ.

ກໍລະນີ 1:

ຄຳຮ້ອງທຸກຖືກປະຕິເສດໂດຍຜູ້ດູແລລະບົບ

ຜູ້ຮ້ອງທຸກ
ທ່ານ Very Upset ເປັນຜູ້ອ່ານວຍການບໍລິສັດທີ່ປຶກສາ Blue Sapphire (ວິສາຫະກິດອາຊຽນ) ແລະ ມີລະດັບປະລິນຍາໂທດ້ານ ເສດຖະກິດ. ລາວຖືກສະເໜີໃຫ້ເຮັດວຽກໃນບໍລິສັດທີ່ປຶກສາໃນ AMS-Y (ປະເທດປາຍທາງ) ແລະ ຕັ້ງໃຈຈະຍ້າຍໄປຢູ່ເພະນົມເປັນ ແລະ ດຳລົງຊີວິດຢູ່ທີ່ນັ້ນຢ່າງຖາວອນ.

ລາຍລະອຽດຂອງການຮ້ອງທຸກ
ບໍລິສັດກຳປູເຈຍໄດ້ລະບຸວ່າມັນຈະໃຊ້ເວລາປະມານໜຶ່ງເດືອນເພື່ອໃຫ້ໄດ້ຮັບໃບອະນຸຍາດເຮັດວຽກຂອງທ່ານ Upset. ເຖິງຢ່າງໃດກໍ່ຕາມ, ຂັ້ນຕອນດັ່ງກ່າວຕ້ອງໃຊ້ເວລາດົນກວ່າ ແລະ ປະຈຸບັນເກືອບ 3 ເດືອນທີ່ລັດຖະບານຂອງ AMS-Y ໄດ້ອະນຸຍາດ. ອັນນີ້ມັນເປັນການທຳລາຍໂອກາດຂອງທ່ານ Upset ໃນການໄດ້ວຽກ. ທ່ານ Upsets ປາດຖະໜາຍາກຮ້ອງທຸກຜ່ານ ASSIST ຕໍ່ລັດຖະບານກຳປູເຈຍ, ເຖິງແມ່ນວ່າບໍລິສັດຂອງລາວຢູ່ AMS-X, ຍ້ອນວ່າມີການຊັກຊ້າໃນການອອກໃບອະນຸຍາດເຮັດວຽກຂອງລາວ. ພື້ນຖານຄຳຮ້ອງທຸກຂອງທ່ານ Upset ແມ່ນວ່າມີຂໍ້ຕົກລົງອາຊຽນວ່າດ້ວຍການເຄື່ອນໄຫວຂອງບຸກຄົນທຳມະດາສາມັນຊຶ່ງອະນຸຍາດໃຫ້ມີການເຄື່ອນໄຫວຂອງບຸກຄົນທີ່ມີຄວາມຊຳນິຊຳນານພາຍໃນອາຊຽນພ້ອມທັງກອບສັນຍາອາຊຽນກ່ຽວກັບການບໍລິການ (AFAS).

ການທົບທວນຂອງຜູ້ດູແລລະບົບຂອງ ASSIST
ຜູ້ດູແລລະບົບຂອງ ASSIST (ເຊັ່ນ: ເລຂາທິການໃຫຍ່ອາຊຽນ) ກວດກາຄຳຮ້ອງທຸກ ແລະ ປະຕິເສດ. ປະກົດວ່າກໍລະນີນີ້ ເປັນບັນຫາສ່ວນຕົວຂອງບຸກຄົນແທນທີ່ຈະແມ່ນບັນຫາຂອງບໍລິສັດ ແລະດັ່ງນັ້ນ, ບໍ່ໄດ້ກຳນົດໄວ້ໃນສັນຍາອາຊຽນວ່າດ້ວຍການເຄື່ອນໄຫວຂອງບຸກຄົນທຳມະດາສາມັນທີ່ໄດ້ລະບຸໄວ້ໃນມາດຕາ 2.2 ວ່າ ມັນບໍ່ໄດ້ນຳໃຊ້ມາດຕະການທີ່ມີຜົນກະທົບຕໍ່ບຸກຄົນທຳມະດາທີ່ຊອກຫາການເຂົ້າເຖິງຕະຫຼາດການຈ້າງງານຂອງປະເທດສະມາຊິກອາຊຽນອື່ນ, ແລະ ຈະບໍ່ນຳໃຊ້ກັບມາດຕະການຕ່າງໆທີ່ກ່ຽວຂ້ອງກັບການເປັນພົນລະເມືອງ, ທີ່ຢູ່ອາໄສ ຫຼື ການຈ້າງງານໂດຍຖາວອນ.

ສາມາດນຳໃຊ້ ASSISTສຳລັບການຮ້ອງທຸກທີ່ເກີດຂຶ້ນໂດຍວິສາຫະກິດອາຊຽນ (ເຊັ່ນ: ນິຕິບຸກຄົນທີ່ຈົດທະບຽນຖືກຕ້ອງ, ບໍ່ແມ່ນບຸກຄົນທຳມະດາ) ແລະ ການນຳໃຊ້ນິຕິບຸກຄົນປອມ (ເຊັ່ນ: ວິສາຫະກິດອາຊຽນ), ເພື່ອແກ້ໄຂປະເດັນບັນຫາທີ່ອ້າງອີງເຖິງການຕິດຕໍ່ພົວພັນກັນລະຫວ່າງ ບັນດາປະເທດສະມາຊິກອາຊຽນ ແລະ ບຸກຄົນທຳມະດາສາມັນ, ບໍ່ພຽງພໍທີ່ຈະຂະຫຍາຍຂອບເຂດການຄຸ້ມຄອງຂອງ ASSIST ໃຫ້ແກ່ມັນ. ໃນກໍລະນີທີ່ສ່ຽງ, ທ່ານ Upset ຄວນພົວພັນໂດຍກົງກັບກະຊວງພາຍໃນຂອງ AMS-Y ແລະ/ຫຼື ກະຊວງແຮງງານ. ASSIST ບໍ່ແມ່ນເຄື່ອງມືທີ່ມີຢູ່.

ຜົນໄດ້ຮັບ
ການປະຕິເສດເບິ່ງຄືວ່າຖືກຕ້ອງ ແລະ ມີເຫດຜົນພຽງພໍ. ASSIST ຈະພິຈາລະນາຂັ້ນຕອນນີ້ເປັນໜຶ່ງໃນບ່ອນທີ່ບໍ່ມີການຮ້ອງທຸກ.

ກໍລະນີ 2:

ການຮ້ອງທຸກຍື່ນໂດຍສະມາຄົມການຄ້າອາຊຽນ - ອາຊຽນແລະຖືກປະຕິເສດໂດຍຈຸດຕິດຕໍ່ຈຸດ ຫນ າຍປາຍທາງ

ຜູ້ຮ້ອງທຸກ
ວິສາຫະກິດອາຊຽນແມ່ນບໍລິສັດທີ່ຈົດທະບຽນຢູ່ AMS-X. ສະມາຄົມການຄ້າຍາສູບອາຊຽນ, ສະມາຄົມການຄ້າທີ່ຕັ້ງຢູ່ອາຊຽນ, ຍື່ນຄຳຮ້ອງ ທຸກໃນ ASSIST ໃນນາມຂອງວິສາຫະກິດອາຊຽນຕໍ່ AMS-Y (ຈຸດຕິດຕໍ່ປາຍທາງ) ກ່ຽວກັບມາດຕະການທາງດ້ານການເງິນ ແລະ ພາສີຂອງ AMS-Y ທີ່ສົ່ງຜົນກະທົບຕໍ່ຍາສູບທີ່ສົ່ງອອກຈາກ AMS- X ເຖິງ AMS-Y.

ລາຍລະອຽດຂອງການຮ້ອງທຸກ
ມາດຕະການດັ່ງກ່າວປະກອບມີການປະຕິບັດການປະເມີນມູນຄ່າແຈ້ງພາສີຂອງ AMS-Y, ອາກອນຊົມໃຊ້, ອາກອນສຸຂະພາບ, ລະບອບ VAT, ຂໍ້ກຳນົດການອະນຸຍາດຂາຍຍ່ອຍ ແລະ ການຄ້ຳປະກັນການນຳເຂົ້າທີ່ຖືກບັງຄັບໃຫ້ຜູ້ນຳເຂົ້າຍາສູບ. ສະມາຄົມການຄ້າຍາສູບອາຊຽນອ້າງວ່າ AMS-Y ຄຸ້ມຄອງບັນດາມາດຕະການດັ່ງກ່າວດ້ວຍລັກສະນະບາງສ່ວນ ແລະ ບໍ່ມີເຫດຜົນ ແລະດ້ວຍເຫດນີ້ ຈຶ່ງເປັນການລະເມີດຕໍ່ມາດຕາ 57 ຂອງ ATIGA ຊຶ່ງໄດ້ລວມເຂົ້າໃນອາຊຽນ, mutatis mutandis, ຂໍ້ຕົກລົງສັນຍາ WTO ກ່ຽວກັບການປະເມີນມູນຄ່າແຈ້ງພາສີ. ອີງຕາມສະມາຄົມການຄ້າຍາສູບອາຊຽນ, AMS-Y ບໍ່ໄດ້ນຳໃຊ້ມູນຄ່າການເຮັດທຸລະກຳເປັນພື້ນຖານຕົ້ນຕໍສຳລັບການປະເມີນມູນຄ່າແຈ້ງພາສີຕາມທີ່ໄດ້ກຳນົດ ແລະ ບໍ່ປະຕິບັດຕາມລຳດັບຂອງວິທີການປະເມີນມູນຄ່າທີ່ໄດ້ກຳນົດໄວ້ໃນມາດຕາ 57 ຂອງ ATIGA, ແທນທີ່ຈະໃຊ້ວິທີການປະເມີນມູນຄ່າກັບບໍ່ມີພື້ນຖານໃນຂໍ້ຕົກລົງສັນຍາ.

ນອກນັ້ນ, ສະມາຄົມການຄ້າຢາສູບອາຊຽນອ້າງວ່າໂຄງການມີ 2 ໃບອະນຸຍາດຂອງ AMS-Y ຊຶ່ງຮຽກຮ້ອງໃຫ້ຜູ້ຂາຍຍ່ອຍຢາສູບ ແລະ/ຫຼື ຜູ້ຂາຍ ຍ່ອຍຢາສູບຖືໃບອະນຸຍາດແຍກຕ່າງຫາກ ເພື່ອຂາຍຢາສູບພາຍໃນ ແລະ ນຳເຂົ້າແມ່ນບໍ່ສອດຄ່ອງກັບມາດຕາ 6 ຂອງ ATIGA, ລວມເອົາມາດຕາ III ຂອງຂໍ້ຕົກລົງທົ່ວໂປກ່ຽວກັບພາສີ ແລະ ການຄ້າ (GATT) ປີ 1994, ເພາະວ່າມັນສະໜອງການຮັກສາທີ່ເອື້ອອຳນວຍໃຫ້ແກ່ຜະລິດຕະພັນທີ່ນຳເຂົ້າໜ້ອຍກວ່າຜະລິດຕະພັນພາຍໃນ.

ການທົບທວນຂອງຜູ້ດູແລລະບົບຂອງ ASSIST

ຄຳຮ້ອງທຸກນີ້ຖືກຍື່ນຂຶ້ນຢ່າງຖືກຕ້ອງ ແລະ ໄດ້ຮັບການອະນຸມັດຈາກຜູ້ດູແລລະບົບ ASSIST - ກອງເລຂາອາຊຽນ.

ລາຍລະອຽດຂອງຄຳຮ້ອງທຸກແມ່ນສົ່ງຕໍ່ໂດຍຜູ້ດູແລລະບົບເຖິງຈຸດຕິດຕໍ່ປາຍທາງ(AMS-Y) ແລະ ຈຸດຕິດຕໍ່ຕົ້ນທາງ (AMS-X).

ການທົບທວນ ແລະ ການຕັດສິນໃຈຂອງຈຸດຕິດຕໍ່ປາຍທາງ

ຈຸດຕິດຕໍ່ປາຍທາງ (AMS-Y) ໄດ້ປະຕິເສດຄຳຮ້ອງທຸກ ເພາະວ່າໄດ້ໃຕ້ຖຽງວ່າ ຄະດີດັ່ງກ່າວແມ່ນຄືກັນກັບວ່າ AMS-X ໄດ້ນຳໃຊ້ຕໍ່ AMS-Y ພາຍໃຕ້ກົນໄກການແກ້ໄຂຂໍ້ຂັດແຍ້ງຂອງ WTO.

ໃນຄວາມເປັນຈິງ, ໃນວັນທີ 29 ເດືອນກັນຍາ 2008, AMS-X ໄດ້ຮຽກຮ້ອງໃຫ້ມີການສ້າງຕັ້ງຄະນະເພື່ອແກ້ໄຂຂໍ້ຂັດແຍ່ງທີ່ທ້າທາຍລະບອບປະເມີນມູນຄ່າແຈ້ງພາສີດຽວກັນຂອງ AMS-Y ຍ້ອນວ່າມັນນຳໃຊ້ກັບຢາສູບທີ່ນຳເຂົ້າ.

- ໃນກອງປະຊຸມຂອງຕົນໃນວັນທີ 17 ພະຈິກ 2008, ອົງການແກ້ໄຂຂໍ້ຂັດແຍ່ງຂອງ WTO (DSB) ໄດ້ສ້າງຕັ້ງຄະນະ, ຊຶ່ງກະຈາຍບົດລາຍງານຂອງຕົນຕໍ່ບັນດາສະມາຊິກໃນວັນທີ 15 ພະຈິກ 2010.

- 22 ເດືອນກຸມພາ ປີ 2011, AMS-Y ໄດ້ແຈ້ງໃຫ້ DSB ຊາບກ່ຽວກັບການຕັດສິນໃຈຂອງຕົນໃນການອຸທອນຕໍ່ອົງການອຸທອນ.

- ໃນວັນທີ 17 ມີຖຸນາ 2011, ບົດລາຍງານຂອງອົງການອຸທອນໄດ້ຖືກເຜີຍແຜ່ຕໍ່ບັນດາສະມາຊິກແລະໃນກອງປະຊຸມຂອງຕົນໃນວັນທີ 15 ກໍລະກົດ 2011, DSB ໄດ້ຮັບຮອງເອົາບົດລາຍງານຂອງອົງການອຸທອນແລະບົດລາຍງານຂອງຄະນະກຳມະການດັ່ງທີ່ຖືກດັດແກ້ໂດຍບົດລາຍງານຂອງອົງການອຸທອນ.

- ໃນວັນທີ 11 ເດືອນສິງຫາປີ 2011, AMS-Y ໄດ້ແຈ້ງໃຫ້ DSB ຊາບວ່າມັນມີຈຸດປະສົງໃນການຈັດຕັ້ງປະຕິບັດຄຳແນະນຳ ແລະກົດລະບຽບຂອງ DSB ສອດຄ່ອງກັບພັນທະຂອງ WTO ແລະມັນຕ້ອງການໄລຍະເວລາທີ່ເໝາະສົມເພື່ອເຮັດແນວນັ້ນ.

- ໃນວັນທີ 23 ເດືອນກັນຍາປີ 2011, AMS-Y ແລະ AMS-X ໄດ້ແຈ້ງໃຫ້ DSB ຊາບວ່າພວກເຂົາໄດ້ຕົກລົງຊຶ່ງກັນແລະກັນໃນໄລຍະເວລາທີ່ ເໝາະສົມສຳລັບ AMS-Y ເພື່ອປະຕິບັດຕາມຂໍ້ສະເໜີແນະແລະກົດລະບຽບຂອງ DSB.

- ໃນກອງປະຊຸມ DSB ໃນວັນທີ 28 ມັງກອນ 2013, AMS-Y ໄດ້ລາຍງານວ່າມັນໄດ້ສຳເລັດຂັ້ນຕອນສຸດທ້າຍທີ່ຍັງຄ້າງຄາໃນຂັ້ນຕອນການຈັດຕັ້ງປະຕິບັດ. ເຖິງຢ່າງໃດກໍ່ຕາມ, AMS-X ບໍ່ໄດ້ຕົກລົງເຫັນດີວ່າ AMS-Y ໄດ້ປະຕິບັດຄຳແນະນຳແລະກົດລະບຽບຂອງ DSB ຢ່າງເຕັມສ່ວນ.

- ໃນກອງປະຊຸມ DSB ໃນວັນທີ 27 ເດືອນກຸມພາປີ 2013, AMS-X ໄດ້ສະແດງຄວາມກັງວົນວ່າມັນບໍ່ໄດ້ແຈ້ງໃຫ້ຊາບກ່ຽວກັບຄວາມຄືບໜ້າໃດໆໃນການແກ້ໄຂບັນຫາຄວາມບໍ່ສອດຄ່ອງຂອງ WTO ທີ່ຍັງເຫຼືອແລະກ່າວຕື່ມວ່າມັນຈະດຳເນີນບາດກ້າວທີ່ເໝາະສົມໃນໄວໆນີ້.

- ໃນກອງປະຊຸມ DSB ໃນວັນທີ 18 ມີຖຸນາ 2014, AMS-Y ໄດ້ລາຍງານວ່າມັນບໍ່ຈຳເປັນຕ້ອງມີການກະທຳຫຍັງອີກຕໍ່ໄປເພື່ອປະຕິບັດຄຳແນະນຳ ແລະ ຄຳຕັດສິນຂອງ DSB. AMS-X ບໍ່ເຫັນດີແລະແມ່ນທັດສະນະທີ່ວ່າ AMS-Y ບໍ່ປະຕິບັດຕາມ

ເຖິງວ່າບໍ່ມີຂໍ້ຕົກລົງລະຫວ່າງ AMS-X ແລະ AMS-Y ກ່ຽວກັບວ່າຂໍ້ຂັດແຍ່ງຂອງ WTO ໄດ້ຖືກແກ້ໄຂຢ່າງແທ້ຈິງຫຼືບໍ່ແລະວ່າ AMS-

Y ໄດ້ປະຕິບັດຕາມພັນທະຂອງ WTO ຫຼືບໍ່, ຄຳຮ້ອງທຸກທີ່ສະມາຄົມການຄ້າຍາສູບອາຊຽນເປັນຫນຶ່ງໃນນັ້ນແມ່ນຈຸດຫມາຍປາຍທາງຢ່າງຖືກຕ້ອງພິຈາລະນາທີ່ໄດ້ກ່າວມາແລ້ວໃນຂອບ WTO, ລວມທັງພັນທະຂອງອາຊຽນທີ່ສະມາຄົມການຄ້າຍາສູບອາຊຽນໄດ້ກ່າວເຖິງໃນຄຳຮ້ອງທຸກຂອງ ASSIST. ຈຸດຕິດຕໍ່ປາຍທາງແມ່ນອະທິປະໄຕໃນການຕັດສິນໃຈວ່າມັນມີເຈດຕະນາທີ່ຈະເຂົ້າຮ່ວມໃນຂະບວນການ ASSIST ເພື່ອສະເຫນີວິທີແກ້ໄຂໃຫ້ແກ່ສະມາຄົມການຄ້າທີ່ອີງໃສ່ອາຊຽນ.

ຜົນໄດ້ຮັບ

ການປະຕິເສດເບິ່ງຄືວ່າຖືກຕ້ອງແລະມີເຫດຜົນພຽງພໍ. ASSIST ຈະພິຈາລະນາຂັ້ນຕອນນີ້ບ່ອນທີ່ຄຳຮ້ອງທຸກຖືກປະຕິເສດແລະບໍ່ໄດ້ມີການແກ້ໄຂ.

ກໍລະນີ 3:

ຄຳຮ້ອງທຸກທີ່ຍື່ນໂດຍທະນາຍຄວາມ ຫຼື ບໍລິສັດກົດຫມາຍຈິດທະບຽນໃນອາຊຽນ ແລະ ວິທີແກ້ໄຂຕໍ່ຄຳຮ້ອງທຸກທີ່ຖືກສະເຫນີ ແລະເປັນທີ່ຍອມຮັບ

ຜູ້ຮ້ອງທຸກ

ບໍລິສັດ *ARISE & Partners* (ວິສາຫະກິດອາຊຽນ) ແມ່ນບໍລິສັດກົດຫມາຍທີ່ຈົດທະບຽນຢ່າງຖືກຕ້ອງໃນ AMS-X. ໄດ້ຍື່ນຄຳຮ້ອງທຸກພາຍໃຕ້ ASSIST ໃນນາມລູກຄ້າຂອງຕົນ ຊຶ່ງເປັນບໍລິສັດຈົດທະບຽນຢ່າງຖືກຕ້ອງໃນ AMS-X, ກ່ຽວກັບພາສີໃຫມ່ ທີ່ AMS-Y ໄດ້ກຳນົດໂດຍ (ຈຸດຕິດຕໍ່ປາຍທາງຫຼື DCP) ກ່ຽວກັບນ້ຳມັນປາມ ແລະ ຜະລິດຕະພັນອາຫານທີ່ບັນຈຸນ້ຳມັນປາມ ພາຍໃຕ້ລະບຽບການດ້ານອາຫານຂອງກະຊວງສາທາລະນະສຸກ ພາກ 1000, ຫມວດທີ 100 ປີ 2015.

ລາຍລະອຽດຂອງການຮ້ອງທຸກ

ມາດຕະການທີ່ລັດຖະບານ AMS-Y ໄດ້ນຳສະເຫນີໃຫ້ກັບພາສີອາຫານທີ່ມີທາດນ້ຳຕານ ແລະ ໄຂມັນອີ່ມຕົວ ຊຶ່ງເປັນສ່ວນຫນຶ່ງຂອງຍຸດທະສາດໃນການແກ້ໄຂບັນຫາທີ່ເພີ່ມຂຶ້ນຂອງພາວະອ້ວນໃນປະເທດສົງກະໂບ.

ບໍລິສັດ *ARISE & Partners* ອ້າງວ່າມາດຕະການຂອງ AMS-Y ໄດ້ສະແດງອອກຢ່າງແນ່ນອນກ່ຽວກັບນ້ຳມັນປາມ ແລະ ບໍ່ພຽງແຕ່ສ່ວນປະກອບໄຂມັນອີ່ມຕົວຂອງນ້ຳມັນປາມ ແລະ ຜະລິດຕະພັນທີ່ບັນຈຸນ້ຳມັນປາມ, ເຮັດໃຫ້ມີການຈຳແນກນ້ຳມັນປາມ ແລະ ເຮັດໃຫ້ຜະລິດຕະພັນເສື່ອມເສຍທັງຫມົດ ແທນທີ່ຈະພຽງແຕ່ຂັດຂວາງການຊົມໃຊ້ຜະລິດຕະພັນຫຼາຍເກີນໄປມີໄຂມັນອີ່ມຕົວ, ເອກະລາດຈາກພືດຜັກຫຼືສັດຂອງໄຂມັນ.

ບໍລິສັດ *ARISE & Partners* ອ້າງໃນຄຳຮ້ອງທຸກຂອງ ASSIST, ວ່າມາດຕະການທີ່ຖືກຮັບຮອງ ແລະ ນຳໃຊ້ໂດຍ *AMS-Y* ແມ່ນກົງກັນຂ້າມກັບມາດຕາ *6* ຂອງ ATIGA *(*ກ່ຽວກັບການຮັກສາລະດັບຊາດກ່ຽວກັບການເກັບພາສີພາຍໃນແລະລະບຽບການ), ເທົ່າທີ່ມັນຈຳແນກກັບນ້ຳມັນປາມໂດຍລວມ. ແລະບໍ່ຖືກນຳໃຊ້ກັບຜະລິດຕະພັນທີ່ຄ້າຍຄືກັບຜະລິດຕະພັນອື່ນໆທີ່ຜະລິດຫຼືຂາຍໃນ AMS-Y *(*ເຊັ່ນ: ຜະລິດຕະພັນອາຫານທີ່ມີໄຂມັນອີ່ມຕົວທີ່ມາຈາກຖົ່ວເຫຼືອງ, ດອກຕາເວັນ, *ແກ່ນຫມາກອາງຸ່ນ,* ສາລີ, ຖົ່ວດິນ ຫຼື ໄຂມັນສັດ).

ການທົບທວນຂອງຜູ້ດູແລລະບົບຂອງ ASSIST

ຄຳຮ້ອງທຸກນີ້ ຖືກຕ້ອງຕາມກົດຫມາຍຊຶ່ງຍື່ນໂດຍທະນາຍຄວາມຈິດທະບຽນໃນອາຊຽນ, ແຕ່ວ່າ ຜູ້ດູແລລະບົບຂອງ ASSIST ຂໍຮ້ອງຂໍ້ມູນເພີ່ມເຕີມຈາກຜູ້ຮ້ອງທຸກ ເພື່ອປະເມີນຂໍ້ຮຽກຮ້ອງ ແລະ ຍອມຮັບຄຳຮ້ອງທຸກຢ່າງຖືກຕ້ອງ. ໂດຍສະເພາະ, ຜູ້ດູແລລະບົບຮ້ອງຂໍໃຫ້ຍື່ນຄຳຮ້ອງທຸກຄືນໃຫມ່ ໂດຍມີຂໍ້ມູນເພີ່ມເຕີມກ່ຽວກັບມາດຕະການ AMS-Y ທີ່ຖືກກ່າວຫາວ່າ ບໍ່ສອດຄ່ອງກັບ ATIGA.

ການຍື່ນຄຳຮ້ອງທຸກຄືນໃຫມ່ ພ້ອມດ້ວຍຂໍ້ມູນເພີ່ມເຕີມ

ARISE & Partners ຍື່ນຄຳຮ້ອງທຸກຄືນໃຫມ່ ແລະ ຄັດຕິດທັງສຳເນົາ (ເປັນພາສາອັງກິດ) ຂອງລະບຽບກົດລະບຽບດ້ານອາຫານຂອງກະຊວງສາທາລະນະສຸກ *AMS-Y* ພາກ 1000, ຫມວດທີ 100 ປີ2015, ແລະ ຂໍ້ມູນໂດຍຫຍໍ້ດ້ານກົດຫມາຍທີ່ກ່າວເຖິງການກ່າວຫາຂອງຕົນ , ພາກສ່ວນມາດຕະການຕ່າງໆຂອງ *AMS-Y* ທີ່ຖືວ່າເປັນການຈຳແນກ, ແລະ ການໂຕ້ຖຽງທີ່ວິສາຫະກິດອາຊຽນເຊື່ອວ່າຄວນໄດ້ຮັບການພິຈາລະນາ ເພື່ອຈຸດປະສົງຮັບເອົາຄຳຮ້ອງທຸກ ແລະ ອາດຈະໄດ້ຮັບການແກ້ໄຂ.

ການຍອມຮັບຂອງຜູ້ດູແລລະບົບ

ບົນພື້ນຖານການຍື່ນຄຳຮ້ອງທຸກຄືນໃຫມ່ ແລະ ດຽວນີ້ເປັນຄຳຮ້ອງທຸກທີ່ຄົບຖ້ວນແລ້ວ, ຜູ້ດູແລລະບົບຍອມຮັບເອົາຄຳຮ້ອງທຸກ ດັ່ງກ່າວແມ່ນຢູ່ໃນຂອບເຂດຂອງ ASSIST ແລະ ເປັນການຍື່ນທີ່ຖືກຕ້ອງ. ASSIST ເລີ່ມຕົ້ນດຳເນີນການແລະ ໄດ້ສົ່ງຄຳຮ້ອງທຸກໄປຫາ AMS-Y (ຈຸດຕິດຕໍ່ປາຍທາງ) ແລະ ສຳເນົາສົ່ງໃຫ້ AMS-X (ຈຸດຕິດຕໍ່ຕົ້ນທາງ) ເພື່ອຮັບຊາບ.

ຈຸດຕິດຕໍ່ປາຍທາງຕົກລົງເຫັນດີຍອມຮັບເອົາ
ຈຸດຕິດຕໍ່ປາຍທາງ (ເຊັ່ນ: ກະຊວງການຄ້າ ແລະ ອຸດສາຫະກຳຂອງ AMS-Y) ກວດກາຄຳຮ້ອງທຸກ, ຕິດຕໍ່ພົວພັນຢ່າງບໍ່ເປັນທາງການກັບເຈົ້າໜ້າທີ່ທີ່ກ່ຽວຂ້ອງພາຍໃນປະເທດ ເຊັ່ນ: ສຳນັກງານນາຍົກລັດຖະມົນຕີ, ກະຊວງສາທາລະນະສຸກ, ກະຊວງການເງິນ, ເຈົ້າໜ້າທີ່ດ້ານກະສິກຳ ແລະ ອາຫານສັດ ແລະ ສັດຕະວະແພດ, ແລະ ຄະນະກຳມະການສົ່ງເສີມສຸຂະພາບຂອງ AMS-Y, ແລະ ຕອບຜູ້ດູແລລະບົບວ່າ ຕົນເອງຂໍຍອມຮັບເອົາຄຳຮ້ອງທຸກ ແລະ ເຂົ້າຮ່ວມໃນຂັ້ນຕອນຂອງ ASSIST.

ວິທີແກ້ໄຂທີ່ໄດ້ມາ
ພາຍຫຼັງການສົນທະນາພາຍໃນລະຫວ່າງຈຸດຕິດຕໍ່ປາຍທາງ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ, ອອກມາວ່າແທ້ຈິງແລ້ວ ມາດຕະການທີ່ AMS-Y ໄດ້ຮັບຮອງ ໄດ້ບັງຄັບໃຊ້ພາລະໜ້າທີ່ທີ່ເພີ່ມຂຶ້ນໃຫ້ກັບອາຫານທີ່ມີລະດັບນ້ຳຕານ ແລະ ໄຂມັນອີ່ມຕົວຫຼາຍ, ຊຶ່ງແນໃສ່ການກີດຂວາງການບໍລິໂພກຫຼາຍເກີນໄປ ສານທີ່ຖືວ່າເປັນອັນຕະລາຍພາຍໃຕ້ຍຸດທະສາດຂອງປະເທດສົງກະໂປ ເພື່ອແກ້ໄຂບັນຫາທີ່ເພີ່ມຂຶ້ນຂອງພາວະອ້ວນໃນບັນດາພົນລະເມືອງ. ນີ້ແມ່ນສອດຄ່ອງກັບການກະທຳທີ່ຄ້າຍຄືກັນຂອງຫຼາຍປະເທດໃນທົ່ວໂລກ ແລະ ດ້ວຍແຜນປະຕິບັດງານທົ່ວໂລກຂອງອົງການອະນາໄມໂລກ ເພື່ອການປ້ອງກັນ ແລະ ຄວບຄຸມພະຍາດທີ່ບໍ່ຕິດຕໍ່ ປີ 2013-2020 ເຊັ່ນ: ພະຍາດເບົາຫວານ ແລະ ພາວະອ້ວນ.

ເຖິງຢ່າງໃດກໍ່ຕາມ, AMS-Y ຮັບຮູ້ວ່າ ມາດຕະການດັ່ງກ່າວ ໄດ້ໝາຍຜະລິດຕະພັນບາງຢ່າງ (ຕົວຢ່າງ: ນ້ຳມັນປາມ) ແລະ ເປັນສານທີ່ບໍ່ໄດ້ວາງເປົ້າໝາຍ *'ໃນລັກສະນະເປັນກາງ'* (ເຊັ່ນ: ໄຂມັນອີ່ມຕົວ) ທີ່ລັດຖະບານຖືວ່າເປັນອັນຕະລາຍ (ຖ້າບໍລິໂພກຫຼາຍເກີນໄປ) ຈາກທັດສະນະດ້ານນະ�โยบายດ້ານອາຫານ ແລະ ສຸຂະພາບ. ດັ່ງນັ້ນ, ຈຸດຕິດຕໍ່ປາຍທາງ, ໂດຍປະສານສົມທົບກັບເຈົ້າໜ້າທີ່ທີ່ກ່ຽວຂ້ອງຂອງ AMS-Y, ສະເໜີໃຫ້ໂຈະມາດຕະການທີ່ມີຢູ່ໃນລະບຽບການຂອງກະຊວງສາທາລະນະສຸກຂອງລາວໃນ ພາກທີ່ 1000, ໝວດທີ 100 ປີ 2015, ໂດຍລໍຖ້າການດັດແກ້ຂອງຕົນ ເພື່ອລົບລ້າງການອ້າງອີງທີ່ສະແດງອອກຕໍ່ຜະລິດຕະພັນສະເພາະ ແລະ ນຳໃຊ້ກັບຜະລິດຕະພັນທີ່ບັນຈຸໄຂມັນອີ່ມຕົວ, ໂດຍບໍ່ຄຳນຶງເຖິງຕົນກຳເນີດຂອງຜັກ ຫຼື ສັດ. ປະເທດສົງກະ�โປຊີ້ແຈງວ່າ ມາດຕະການຂອງຕົນບໍ່ເຄີຍມີຈຸດປະສົງເພື່ອໃຫ້ມີຜົນກະທົບທີ່ມີການຈຳແນກໃດໆ, ຖືກຕ້ອງຕາມຫຼັກວິທະຍາສາດ ແລະ ໃນຈຸດປະສົງເພື່ອປົກປ້ອງສຸຂະພາບຂອງຕົນ ແລະ ນຳໃຊ້ກັບຜະລິດຕະພັນທຸກຢ່າງທີ່ຄ້າຍຄືກັນໄຂມັນອີ່ມຕົວ.

ວິທີແກ້ໄຂບັນຫາທີ່ໄດ້ນຳສະເໜີ ແລະ ເປັນທີ່ຍອມຮັບ
ຈຸດຕິດຕໍ່ປາຍທາງ ໄດ້ສື່ສານວິທີແກ້ໄຂທີ່ສະເໜີຕໍ່ຜູ້ດູແລລະບົບ ຊຶ່ງເປັນການແຈ້ງໃຫ້ເຈົ້າໜ້າທີ່ກ່ຽວຂ້ອງ ແລະ ຈຸດຕິດຕໍ່ຕົ້ນທາງ ໂດຍຜ່ານ ASSIST.

ດ້ວຍການທົບທວນວິທີແກ້ໄຂທີ່ໄດ້ສະເໜີ, ARISE & Partners ຕອບຜູ້ດູແລລະບົບ ໂດຍຜ່ານ ASSIST ແລະ ສະແດງຄວາມເພິ່ງພໍໃຈຂອງຕົນໃນວິທີແກ້ໄຂທີ່ສະເໜີໂດຍໄດ້ມີການຍອມຮັບ.

ASSIST ພິຈາລະນາຂັ້ນຕອນນີ້ວ່າ ເປັນໜຶ່ງໃນການຮ້ອງທຸກທີ່ຖືກຍອມຮັບ ແລະ ຈຸດຕິດຕໍ່ປາຍທາງໄດ້ສະໜອງວິທີແກ້ໄຂ ແລະ ຜູ້ຮ້ອງທຸກຍອມຮັບເອົາແລ້ວ.

ກໍລະນີ 4:

ຄຳຮ້ອງທຸກທີ່ຍື່ນໂດຍວິສາຫະກິດອາຊຽນ ແລະ ວິທີແກ້ໄຂຕໍ່ຄຳຮ້ອງທຸກທີ່ໄດ້ສະເໜີ ແລະ ເປັນທີ່ຍອມຮັບ

ຜູ້ຮ້ອງທຸກ
ບໍລິສັດ *Star 88* ຈຳກັດ ຊຶ່ງເປັນວິສາຫະກິດອາຊຽນ, ແມ່ນບໍລິສັດຂົນສົ່ງຈິດທະບຽນຢ່າງຖືກຕ້ອງໃນ AMS-X. ໃນຖານະເປັນເຈົ້າຂອງເຮືອ, *ບໍລິສັດ*ໄດ້ມີຂໍ້ຕົກລົງຜູກມັດ 2ປີ ນັບຕັ້ງແຕ່ເດືອນມັງກອນ ປີ 2018 ກັບບໍລິສັດນຳເຂົ້າ-ສົ່ງອອກ ໃນ AMS-X. ຂອບເຂດຂອງຂໍ້ຕົກລົງແມ່ນການສົ່ງເຫຼັກ ແລະ ອະລູມິນຽມຈາກ AMS-X *ເຖິງ* AMS-Y ແລະ ນຳເຂົ້າຢາງພາລາ ແລະ ຝ້າຍຈາກ AMS-Y ເຖິງ AMS-X ໂດຍນຳໃຊ້ເຮືອຂອງບໍລິສັດ Star 88 Co., Ltd. ໄດ້ຕົກລົງທີ່ຈະດຳເນີນທຸລະກຳກ່ຽວກັບການສົ່ງອອກ-ນຳເຂົ້າໃນການເດີນທາງໄປ-ກັບຈາກ AMS-X ເຖິງ AMS-Y ໂດຍນຳໃຊ້ເຮືອລຳດຽວກັນ. ຈຸດປະສົງແມ່ນເພື່ອປະຫຍັດຄ່າໃຊ້ຈ່າຍໃນການນຳໃຊ້ນ້ຳມັນເຊື້ອໄຟ ແລະ ກຳລັງແຮງງານໂດຍມີພາລະຂົນສົ່ງສິນຄ້າຢ່າງເຕັມສ່ວນໃນການເດີນທາງທັງພາຍໃນ ແລະ ຕ່າງປະເທດ, ດັ່ງນັ້ນຈຶ່ງສາມາດໃຫ້ການບໍລິການທີ່ມີປະ ສິດທິພາບດ້ານຄ່າໃຊ້ຈ່າຍ ແລະ ການແຂ່ງຂັນບົນພື້ນຖານຂ້າມຊາຍແດນ ໃຫ້ແກ່ລູກຄ້າ ໃນທັງ AMS-X ແລະ AMS-Y.

ລາຍລະອຽດຂອງການຮ້ອງທຸກ

ໃນເດືອນສິງຫາ ປີ 2018, ບໍລິສັດ Star 88 ຈຳກັດໄດ້ຮູ້ວ່າ AMS-Y ໄດ້ອອກກົດໝາຍໃໝ່ວ່າດ້ວຍການຂົນສົ່ງ, ເຊັ່ນ: ກົດໝາຍຂອງກະຊວງການຄ້າສະບັບເລກທີ 13 ປີ 2018, ກ່ານົດວ່າ ສິນຄ້າບາງຊະນິດສາມາດຂົນສົ່ງ ເພື່ອນ່ຳເຂົ້າ ຫຼື ສົ່ງອອກທາງທະເລໂດຍບໍລິສັດຂົນສົ່ງປະເທດໄດ້. ສິນຄ້າ 4 ຊະນິດ (ເຊັ່ນ: ເຫຼັກ, ອາລູມິນຽມ, ຢາງພາລາ ແລະ ຝ້າຍ) ແມ່ນໜຶ່ງໃນບັນດາສິນຄ້າທີ່ມີລາຍຊື່ໃນກົດໝາຍວ່າດ້ວຍການຂົນສົ່ງສະບັບໃໝ່ນີ້. ແນ່ນອນວ່າ, ກົດໝາຍໃໝ່ນີ້ ຈະເຮັດໃຫ້ທຸລະກິດຂອງບໍລິສັດ Star 88 ຈຳກັດມີຂໍ້ຈຳກັດ ແລະ ປ້ອງກັນບໍ່ໃຫ້ບໍລິສັດໄດ້ສະໜອງການບໍລິການຂົນສົ່ງທາງທະເລລະຫວ່າງ AMS-X ແລະ AMS-Y. ບໍລິສັດ Star 88 ຈຳກັດມີຄວາມວິຕົກກັງວົນຫຼາຍແລະ ເຊື່ອວ່າການສ້າງນິຕິກຳນີ້ ຂັດຕໍ່ການຄ້າເສລີ, ຈິດໃຈຂອງປະຊາຄົມເສດຖະກິດອາຊຽນ (AEC) ແລະ ອາດເປັນໄປໄດ້ຕໍ່ຄວາມມຸ່ງໝັ້ນແລະ ພັນທະສະເພາະຂອງ AMS-Y ພາຍໃຕ້ ສັນຍາເສດຖະກິດອາຊຽນທີ່ກ່ຽວຂ້ອງ (ຕົວຢ່າງ: ກອບຂໍ້ຕົກລົງສັນຍາອາຊຽນກ່ຽວກັບການບໍລິການ, ຫຼື AFAS).

Star 88 Co., Ltd. ຍື່ນຄຳຮ້ອງທຸກພາຍໃຕ້ ASSIST ກ່ຽວຂ້ອງກັບການອອກກົດໝາຍການຂົນສົ່ງສິນຄ້າໃໝ່ ໂດຍ AMS-Y. AE ໄດ້ໂຕ້ຖຽງວ່າ ກົດໝາຍສະບັບໃໝ່ນີ້ ເປັນມາດຕະການທີ່ແນ່ນອນຂອງການປົກປ້ອງ ແລະ ບໍ່ສອດຄ່ອງກັບຫຼັກການການຄ້າເສລີ ແລະ ກົດໝາຍປະເພນີກ່ຽວກັບການບໍລິການທາງທະເລລະຫວ່າງປະເທດ ຊຶ່ງຈະສົ່ງຜົນກະທົບຢ່າງຫັນກຕໍ່ບັນດາບໍລິສັດຂົນສົ່ງຂອງ AMS-X ທີ່ກຳລັງໃຫ້ບໍລິການຂົນສົ່ງທາງທະເລຂ້າມຊາຍແດນທີ່ກ່ຽວຂ້ອງກັບສິນຄ້າທີ່ຖືກກະທົບຈາກກົດໝາຍນີ້. ຍິ່ງໄປກວ່ານັ້ນ, AE ອ້າງວ່າມາດຕະການໃໝ່ນີ້ຂອງ AMS-Y ແມ່ນການລະເມີດຢ່າງຈະແຈ້ງຕໍ່ຄວາມມຸ່ງໝັ້ນຂອງ AMS-Y ຕໍ່ອົງການການຄ້າໂລກ ແລະ ເປັນສິ່ງສຳຄັນທີ່ສຸດຕໍ່ຈຸດປະສົງຂອງ ASSIST ແມ່ນການລະເມີດຢ່າງຈະແຈ້ງຕໍ່ຕາຕະລາງສັນຍາອາຊຽນສະເພາະຂອງ AMS-Y ພາຍໃຕ້ AFAS, ບ່ອນທີ່ AMS-Y ໄດ້ໃຫ້ຄຳໝັ້ນສັນຍາທີ່ຈະອະນຸຍາດໃຫ້ບໍລິສັດຂົນສົ່ງຕ່າງປະເທດທີ່ສະໜອງການບໍລິການຂົນສົ່ງຂ້າມຊາຍແດນພາຍໃນອາຊຽນດຳເນີນການພາຍໃນເຂດນ່ານນ້ຳຂອງຕົນ ໂດຍບໍ່ມີຂໍ້ຈຳກັດໃນການເຂົ້າເຖິງຕະຫຼາດ ແລະ ການຮັກສາລະດັບຊາດ.

ການທົບທວນຂອງຜູ້ດູແລລະບົບຂອງ ASSIST

ຜູ້ດູແລລະບົບ ASSIST - ກອງເລຂາອາຊຽນ ໃນເບື້ອງຕົ້ນໄດ້ທົບທວນ ແລະ ຮັບເອົາຄຳຮ້ອງທຸກດັ່ງກ່າວ ຢູ່ໃນຂອບເຂດຂອງ ASSIST ແລະ ເປັນການຍື່ນທີ່ຖືກຕ້ອງ.

ວິສາຫະກິດອາຊຽນໄດ້ສະໜອງຫຼັກຖານສະແດງວ່າ ຕົນເອງແມ່ນທຸລະກິດທີ່ຈົດທະບຽນຢູ່ໃນປະເທດສະມາຊິກອາຊຽນ (ເຊັ່ນ: AMS-X) ໂດຍໃຫ້ໝາຍເລກທະບຽນຂອງບໍລິສັດ ແລະ ສຳເນົາເອເລັກໂຕຣນິກຂອງບໍລິສັດ/ທຸລະກິດທີ່ລົງທະບຽນເປັນພາສາທ້ອງຖິ່ນ ແລະ ແປເປັນພາສາອັງກິດ (ບໍ່ເປັນທາງການ). ວິສາຫະກິດອາຊຽນ ຍັງໄດ້ຄັດຕິດສຳເນົາກົດໝາຍກະຊວງການຄ້າສະບັບເລກທີ 13 ປີ 2018 ທີ່ຖືກກ່າວຫາວ່າລະເມີດຕໍ່ຕາຕະລາງສັນຍາອາຊຽນສະເພາະຂອງ AMS-Y ພາຍໃຕ້ AFAS. AE ຍັງໄດ້ໃຫ້ຄຳອະທິບາຍລະອຽດໃນຮູບແບບການຮ້ອງທຸກຂອງບັນຫາໃນສະພາບການຂອງກົດໝາຍໃໝ່ ແລະ ຂໍ້ກ່າວຫາຂອງຕົນ ຊຶ່ງຜູ້ດູແລລະບົບຖືວ່າພຽງພໍ.

ລາຍລະອຽດຂອງຄຳຮ້ອງທຸກຖືກສົ່ງໄປຫາ AMS-Y (ຈຸດຕິດຕໍ່ປາຍທາງ ຫຼື DCP) ແລະ ໄດ້ສຳເນົາສົ່ງເຖິງ AMS-X (ຈຸດຕິດຕໍ່ຕົ້ນທາງ ຫຼື HCP) ເພື່ອຮ້ອງຂໍເອົາຂໍ້ມູນ.

ຈຸດຕິດຕໍ່ປາຍທາງຍອມຮັບການຮ້ອງທຸກ

ຈຸດຕິດຕໍ່ປາຍທາງຂອງ AMS-Y, (ເຊັ່ນ: ກະຊວງການຄ້າຂອງ AMS-X) ກວດກາຄຳຮ້ອງທຸກ, ຕິດຕໍ່ພົວພັນຢ່າງບໍ່ເປັນທາງການກັບເຈົ້າໜ້າທີ່ທີ່ກ່ຽວຂ້ອງພາຍໃນປະເທດ (RAs), ເຊັ່ນ: ກົມການຄ້າສາກົນ, ກະຊວງຄົມມະນາຄົມຂົນສົ່ງ, ກະຊວງວຽກງານທະເລ ແລະ ການປະມົງ, ແລະກະຊວງການເງິນ, ແລະ ສື່ສານກັບຜູ້ດູແລລະບົບວ່າ ຕົນເອງປາດຖະໜາທີ່ຈະຍອມຮັບຄຳຮ້ອງທຸກ ແລະ ເຂົ້າຮ່ວມໃນຂັ້ນຕອນຂອງ ASSIST.

ວິທີແກ້ໄຂທີ່ໄດ້ມາ

ພາຍຫຼັງການສົນທະນາພາຍໃນລະຫວ່າງ DCP ແລະ RAs, AMS-Y ຕັດສິນໃຈເລື່ອນການນຳໃຊ້ກົດລະບຽບໃໝ່ຮຽກຮ້ອງໃຫ້ຜູ້ສົ່ງອອກ ແລະຜູ້ນຳເຂົ້າສິນຄ້າບາງຊະນິດ, ລວມທັງ ເຫຼັກ, ອາລູມິນຽມ, ຝ້າຍ ແລະ ຢາງພາລາ, ໂດຍໃຊ້ເຮືອພາຍໃນຂອງ AMS-Y ເທົ່ານັ້ນ (ຕົວຢ່າງ: ເຮືອທີ່ຂຶ້ນກັບບໍລິສັດຂົນສົ່ງທາງທະເລໃນ AMS-Y), ຍ້ອນວ່າ ຍັງມີການວິພາກວິຈານ ແລະ ຄວາມບໍ່ເຫັນດີຈາກຜູ້ສົ່ງອອກພາຍໃນປະເທດວ່າ ກົດລະບຽບໃໝ່ ນີ້ ອາດຈະສົ່ງຜົນກະທົບຕໍ່ປະລິມານການສົ່ງອອກ ແລະ ລາຍໄດ້ຂອງລັດ, ເພາະວ່າມັນຈະເຮັດໃຫ້ນັກລົງທຶນຕ່າງປະເທດບໍ່ສົນໃຈ, ຍ້ອນວ່າຜູ້ຊື້ຫຼາຍຄົນຕໍ່ສິນຄ້າທີ່ຖືກຈຳກັດໃນປະຈຸບັນກຳລັງລໍຖ້າການເຮັດສຳເລັດຂໍ້ຕົກລົງສັນຍາຂອງຕົນ. ເຖິງຢ່າງໃດກໍ່ຕາມ, AMS-Y ລະບຸວ່າ ຕົນເອງບໍ່ມີຈຸດປະສົງທີ່ຈະເຮັດໃຫ້ເຫັນວ່າເປັນມາດຕະການປົກປ້ອງ

ຕ່ເຮືອຕ່າງປະເທດ ແລະ ເປັນການລະເມີດຫຼັກການການຄ້າເສລີ. AMS-Y ຊີ້ໃຫ້ເຫັນວ່າມາດຕະການຂອງຕົນແມ່ນມີຈຸດປະສົງໃນເບື້ອງຕົ້ນເພື່ອຈຸກຍູ້ອຸດສະຫະກຳຂົນສົ່ງຂອງ AMS-Y ໃຫ້ເພີ່ມຄວາມສາມາດໃນການຂົນສົ່ງພາຍໃນປະເທດຫຼາຍຂຶ້ນ ຍ້ອນວ່າ 90% ຂອງການຂົນສົ່ງທັງໝົດໃນເຂດນ່ານນ້ຳຂອງ AMS-Y ແມ່ນຈັດການໂດຍເຮືອຕ່າງປະເທດ. ດັ່ງນັ້ນ, ຕົວຢ່າງ, ໃນອຸດສະຫະກຳຍາງພາລາຫຼາຍກວ່າ 90% ຂອງການຂົນສົ່ງສົ່ງອອກແມ່ນດຳເນີນໂດຍເຮືອຕ່າງປະເທດ. ຄວາມສາມາດຂົນສົ່ງພາຍໃນປະເທດໄດ້ປະມານ 50 ລ້ານໂຕນໃນປີ 2017, ໃນຂະນະທີ່ເຮືອຕ່າງປະເທດສົ່ງອອກ 800 ລ້ານໂຕນໃນປີດຽວກັນ, ຊຶ່ງມີຄວາມແຕກຕ່າງກັນຢ່າງໃຫ່ຍຫຼວງ.

AMS-Y ກ່າວຕື່ມວ່າ ເປົ້າໝາຍສຳຄັນຂອງຂໍ້ກຳນົດແມ່ນບໍລິສັດບໍລິການຂົນສົ່ງສິນຄ້າພາຍໃນປະເທດ ເລີ່ມຕົ້ນໄດ້ຮັບຜົນປະໂຫຍດຫຼາຍກວ່າເກົ່າຈາກການເພີ່ມຂຶ້ນຂອງການຄ້າທາງທະເລໃນເຂດນ່ານນ້ຳ AMS-Y. ປະຈຸບັນ, ຂໍ້ຕົກລົງສັນຍາ ແລະ ບໍລິມາດການຄ້າສ່ວນໃຫຍ່ຖືກຄອບງຳໂດຍບໍລິສັດບໍລິການຂົນສົ່ງຂອງຕ່າງປະເທດ. ເຖິງຢ່າງໃດກໍ່ຕາມ, AMS-Y ເຫັນດີວ່າ ຕົນເອງຮຽກຮ້ອງໃຫ້ມີຂັ້ນຕອນແບບເທື່ອລະນ້ອຍ ແທນທີ່ຈະການຍຸດເຊົ່ານ່ຍ່ງກະທັນຫັນ, ດັ່ງນັ້ນ ຈຶ່ງມີການຕັດສິນໃຈເລື່ອນເວລາຢ່າງບໍ່ມີກຳນົດ (ເຖິງວ່າຈະບໍ່ຖອນຄືນ) ຕ່ການນຳໃຊ້ກົດໝາຍໃໝ່.

ວິທີແກ້ໄຂບັນຫາທີ່ໄດ້ສະເໜີ ແລະ ໄດ້ຮັບຮອງເອົາ

ຈຸດຕິດຕໍ່ປາຍທາງໄດ້ສື່ສານວິທີແກ້ໄຂທີ່ສະເໜີຕໍ່ຜູ້ດູແລລະບົບ, ຊຶ່ງເປັນການແຈ້ງໃຫ້ເຈົ້າໜ້າທີ່ກ່ຽວຂ້ອງ ແລະຈຸດຕິດຕໍ່ຕົ້ນທາງໄດ້ຮັບຊາບ ໂດຍຜ່ານ ASSIST.

ໂດຍໄດ້ທົບທວນການແກ້ໄຂທີ່ໄດ້ສະເໜີ, ບໍລິສັດ Star 88 Co., Ltd ຕອບກັບຕໍ່ຜູ້ດູແລລະບົບໂດຍຜ່ານ ASSIST ແລະ ສະແດງຄວາມເພິ່ງພໍໃຈຕໍ່ວິທີແກ້ໄຂທີ່ໄດ້ສະເໜີ ໂດຍໄດ້ຍອມຮັບເອົາ.

ASSIST ພິຈາລະນາວ່າຂັ້ນຕອນນີ້ເປັນໜຶ່ງໃນການຮ້ອງທຸກທີ່ໄດ້ຍອມຮັບເອົາ ແລະ ຈຸດຕິດຕໍ່ປາຍທາງໄດ້ສະໜອງວິທີແກ້ໄຂບັນຫາ ແລະ ຜູ້ຮ້ອງທຸກໄດ້ຍອມຮັບເອົາແລ້ວ.

ກໍລະນີ 5:

ຄຳຮ້ອງທຸກທີ່ຍື່ນໂດຍວິສາຫະກິດອາຊຽນ (ບໍລິສັດແມ່ຂອງບໍລິສັດຍ່ອຍຂອງຕົນ) ແລະ ຖືກຈຸດຕິດຕໍ່ປາຍທາງປະຕິເສດ

ຜູ້ຮ້ອງທຸກ

AirTel Co., Ltd. ແມ່ນບໍລິສັດໂທລະຄົມມະນາຄົມທີ່ຈົດທະບຽນຖືກຕ້ອງໃນ AMS-X. ເປັນບໍລິສັດຍ່ອຍຂອງບໍລິສັດ *AirTel Holdings, Inc* ທີ່ຕັ້ງໃນ AMS-Y. 80% ຂອງຈຳນວນຮຸ້ນທັງໝົດທີ່ອອກໂດຍບໍລິສັດ *AirTel Co., Ltd.* ແມ່ນ ຜູ້ຖືຫຸ້ນໃນ AMS-X ເປັນເຈົ້າຂອງ ແລະ ຕຳແໜ່ງລະດັບບໍລິຫານຂັ້ນສູງແມ່ນຄອບງຳໂດຍຄົນສັນຊາດ AMS-Y. ໃບອະນຸຍາດດຳເນີນງານຂອງບໍລິສັດ *AirTel Co., Ltd.* ຖືກຖອນຄືນໂດຍອົງການສື່ສານແຫ່ງຊາດ AMS-Y ໃນເດືອນກັນຍາ ປີ 2018 ດ້ວຍຂໍ້ໂຕ້ຖຽງວ່າ ໃບອະນຸຍາດດ້ານໂທລະຄົມມະນາຄົມທີ່ບໍລິສັດ *AirTel Co., Ltd.* ບໍ່ມີຜົນບັງຄັບໃຊ້ອີກຕໍ່ໄປ. ໃນຄວາມເປັນຈິງ, ໃນເດືອນສິງຫາ ປີ 2018, AMS-Y ໄດ້ປັບປຸງກົດໝາຍວ່າດ້ວຍທຸລະກິດດ້ານໂທລະຄົມມະນາຄົມເລກທີ 1500, *ຊຶ່ງ*ຜູ້ປະກອບການຕ່າງປະເທດບໍ່ໄດ້ຮັບອະນຸຍາດສະໝັກຂໍອະນຸຍາດປະເພດ B ແລະ C ອີກຕໍ່ໄປ.

ໃບອະນຸຍາດໂທລະຄົມມະນາຄົມປະເພດ B ແມ່ນ ສຳລັບຜູ້ປະຕິບັດງານທີ່ມີ ຫຼື ບໍ່ມີເຄືອຂ່າຍຂອງຕົນເອງ, ແຕ່ໃຫ້ບໍລິການທີ່ແນໃສ່ພາກສ່ວນໜຶ່ງ ຫຼື ຫຼາຍພາກສ່ວນຂອງປະຊາຊົນ. ໃບອະນຸຍາດໂທລະຄົມມະນາຄົມປະເພດ C ແມ່ນສຳລັບຜູ້ປະຕິບັດການທີ່ມີເຄືອຂ່າຍທີ່ໃຫ້ບໍລິການແກ່ປະຊາຊົນທົ່ວໄປ, ຫຼື ການບໍລິການທີ່ພາໃຫ້ເກີດຜົນກະທົບທີ່ສຳຄັນຕໍ່ການແຂ່ງຂັນທີ່ຍຸດຕິທຳ, ຄວາມສົນໃຈຂອງປະຊາຊົນ, ຫຼືຕ້ອງການການປົກປ້ອງຜູ້ບໍລິໂພກເປັນພິເສດ. ຜູ້ທີ່ສະໝັກຂໍອະນຸຍາດປະເພດ B ແລະ Type C ຕ້ອງແມ່ນບໍລິສັດທີ່ຜົນລະເມືອງ AMS-Y ຖືຮຸ້ນຢ່າງຫນ້ອຍ 51% ແລະຢ່າງຫນ້ອຍສາມໄຕມາດຂອງຜູ້ບໍລິຫານລະດັບສູງຂອງຜູ້ສະໝັກ ແລະຜູ້ທີ່ໄດ້ຮັບອະນຸຍາດໃຫ້ເຊັນສັນຍາຜູກມັດໃດໜຶ່ງ, ເປັນຕົວແທນຂອງ ບໍລິສັດຜູ້ສະໝັກ, ຕ້ອງແມ່ນຄົນ AMS-Y. *AirTel Co., Ltd.* ຮູ້ສຶກວ່າໄດ້ຮັບການປະຕິບັດຢ່າງບໍ່ຍຸດຕິທຳຍ້ອນວ່າ ຕົນເອງພຽງແຕ່ປະຕິບັດຕາມຂັ້ນຕອນຂອງລັດຖະບານໃນເວລາທີ່ໄດ້ສະໝັກຂໍອະນຸຍາດ ແລະ ບໍ່ໄດ້ຮັບການແຈ້ງເຕືອນໃດໆຈາກ AMS-Y ກ່ຽວກັບການພັດທະນາໃໝ່ນີ້. ຕົນເອງຍັງໄດ້ປະຕິບັດຕາມຂໍ້ກຳນົດຂອງບໍລິສັດຕ່າງປະເທດທີ່ມີຫຸ້ນສ່ວນຕ່າງປະເທດເປັນສ່ວນໃຫຍ່, ຊຶ່ງບໍ່ໄດ້ຮັບໃບອະນຸຍາດດຳເນີນທຸລະກິດຕ່າງປະເທດຈາກກະຊວງການຄ້າ.

ການຖອນໃບອະນຸຍາດຂອງບໍລິສັດ AirTel ຈຳກັດ ແລະ ການປັບປຸງລະບຽບການກ່ຽວກັບໃບອະນຸຍາດດຳເນີນທຸລະກິດໄດ້ເຮັດ ໃຫ້ຮຸ້ນຂອງບໍລິສັດແມ່ຂອງ *AirTel Co., Ltd., AirTel Holdings, Inc.* ຫຼຸດລົງ 5,67% ໃນ AMS-X ຍ້ອນວ່າ AMS-Y ເປັນຕະຫຼາດໂທລະສັບມືຖືໃຫຍ່ທີ່ສຸດອັນດັບສອງຂອງໂລກ. *AirTel Co., Ltd.* ເຊື່ອວ່າການຖອນໃບອະນຸຍາດຂອງຕົນ ເປັນ ການຈຳແນກຕໍ່ນັກລົງທຶນຕ່າງປະເທດໃນຂະແໜງການໂທລະຄົມມະນາຄົມ ແລະ ເປັນການລະເມີດຕໍ່ບັນດາຄຳໝັ້ນສັນຍາ ແລະ ພັນທະສະເພາະຂອງ AMS-Y ພາຍໃຕ້ກອບຂໍ້ຕົກລົງສັນຍາດ້ານການບໍລິການ ທີ່ກ່ຽວຂ້ອງຂອງອາຊຽນ (AFAS).

ລາຍລະອຽດຂອງການຮ້ອງທຸກ

AirTel Co., Ltd. ຕັດສິນໃຈຍື່ນຄຳຮ້ອງທຸກຂອງຕົນຜ່ານ *ASSIST.* ເຖິງຢ່າງໃດກໍ່ຕາມ, ພາຍໃຕ້ *ASSIST,* ວິສາຫະກິດ ອາຊຽນທີ່ລົງທະບຽນຢ່າງຖືກກົດໝາຍ ໃນ *AMS-Y* ບໍ່ສາມາດຍື່ນຄຳຮ້ອງທຸກຕໍ່ *AMS-Y* ສຳລັບມາດຕະການທີ່ຖືກຮັບຮອງ ຫຼືຮັກສາໄວ້ໂດຍກົດໝາຍສະບັບສຸດທ້າຍ. ກ່ຽວກັບການຄ້າດ້ານການບໍລິການ, ຫຼັກການນີ້ຈະປະຕິເສດຄຳຮ້ອງທຸກທີ່ຖືກຍື່ນ ພາຍໃຕ້ຮູບແບບ *3* ກ່ຽວກັບການມີໜ້າທີ່ການຄ້າ, ຊຶ່ງວິສາຫະກິດອາຊຽນໄດ້ລົງທະບຽນຢ່າງຖືກກົດໝາຍ ແລະ 'ມີການ ຄ້າຂາຍ 'ໃນ *AMS-Y* ຈຳເປັນຕ້ອງໄດ້ນຳເອົາຄຳຮ້ອງທຸກຕໍ່ມາດຕະການຂອງ *AMS-Y.* ດັ່ງນັ້ນ, *AirTel Co., Ltd.* ໄດ້ຕັດສິນ ໃຈຮຽກຮ້ອງໃຫ້ບໍລິສັດແມ່ຂອງຕົນ, *AirTel Holdings, Inc,* ຊຶ່ງຂຶ້ນກັບແລະ ລົງທະບຽນຢ່າງຖືກຕ້ອງຕາມກົດໝາຍໃນ *AMS-X,* ເພື່ອນຳເອົາກໍລະນີນີ້ພາຍໃຕ້ *ASSIST* ຕໍ່ *AMS-Y.*

ດັ່ງນັ້ນ, ບໍລິສັດ AirTel Holdings, Inc, ວິສາຫະກິດອາຊຽນ, ຊຶ່ງເປັນບໍລິສັດທີ່ຈົດທະບຽນຖືກຕ້ອງໃນ AMS-X, ຍື່ນຄຳ ຮ້ອງທຸກພາຍໃຕ້ ASSIST ກ່ຽວຂ້ອງກັບການຍົກເລີກໃບອະນຸຍາດຂອງບໍລິສັດຍ່ອຍຂອງ *AirTel Co., Ltd.,* ຊຶ່ງໄດ້ ລົງທະບຽນຢູ່ AMS -Y. ບໍລິສັດ AirTel Holdings, Inc ໃຫ້ເຫດຜົນວ່າ ການຍົກເລີກໃບອະນຸຍາດຂອງບໍລິສັດ AirTel ຈຳກັດ ແລະ ການປັບປຸງກົດໝາຍວ່າດ້ວຍທຸລະກິດໂທລະຄົມມະນາຄົມແມ່ນການກະທຳທີ່ຜິດກົດໝາຍໃນຂະແໜງການ ສື່ສານໂດຍ AMS-Y ແລະດັ່ງນັ້ນ, ການຈຳແນກຕໍ່ນັກລົງທຶນຕ່າງປະເທດ ແລະ ຈະແຈ້ງແລ້ວວ່າເປັນການລະເມີດຕາຕະລາງ ຄຳໝັ້ນສັນຍາອາຊຽນສະເພາະຂອງ AMS-Y ພາຍໃຕ້ AFAS ບ່ອນທີ່ AMS-Y ໄດ້ສັນຍາວ່າຈະອະນຸຍາດໃຫ້ມີການຄ້າຂອງ ບໍລິສັດຕ່າງປະເທດ (ເຊັ່ນ: ການໃຫ້ບໍລິການດ້ານໂທລະຄົມມະນາຄົມແບບ 3), ເວົ້າອີກຢ່າງໜຶ່ງແມ່ນສິດທາງກົດໝາຍສຳລັບ ຜູ້ປະກອບການຕ່າງປະເທດ, ໄດ້ລົງທະບຽນຢ່າງຖືກຕ້ອງຕາມກົດໝາຍໃນປະເທດສະມາຊິກອາຊຽນອື່ນເພື່ອໃຫ້ບໍລິການຜ່ານ ການສ້າງຕັ້ງການຄ້າ, ໂດຍບໍ່ມີຂໍ້ຈຳກັດໃນການເຂົ້າເຖິງຕະຫຼາດ ແລະ ການຮັກສາລະດັບຊາດ.

ການທົບທວນຂອງຜູ້ດູແລລະບົບຂອງ ASSIST

ຜູ້ດູແລລະບົບ ASSIST - ກອງເລຂາອາຊຽນໃນເບື້ອງຕົ້ນທົບທວນ ແລະ ຮັບເອົາຄຳຮ້ອງທຸກດັ່ງກ່າວຕົກຢູ່ໃນຂອບເຂດຂອງ ASSIST ແລະ ໄດ້ຍື່ນຢ່າງຖືກຕ້ອງ.

ວິສາຫະກິດອາຊຽນໄດ້ສະໜອງຫຼັກຖານສະແດງວ່າມັນແມ່ນທຸລະກິດທີ່ຈົດທະບຽນຖືກຕ້ອງໃນປະເທດສະມາຊິກອາຊຽນໂດຍ ໃຫ້ ໝາຍເລກທະບຽນຂອງບໍລິສັດ ແລະ ສຳເນົາເອເລັກໂຕຣນິກຂອງການລົງທະບຽນບໍລິສັດ/ທຸລະກິດຂອງຕົນເປັນທັງການ ເປັນພາສາທ້ອງຖິ່ນ ແລະ ແປເປັນພາສາອັງກິດ (ບໍ່ເປັນທາງການ). ວິສາຫະກິດອາຊຽນກໍ່ໄດ້ຄັດຕົດສຳເນົາຕາຕະລາງສະເພາະ ຂອງຄຳໝັ້ນສັນຍາການບໍລິການອາຊຽນ, ໂດຍສະເພາະໃນຂະແໜງ ບໍລິການດ້ານໂທລະຄົມມະນາຄົມ, ພ້ອມທັງ ກົດໝາຍວ່າ ດ້ວຍທຸລະກິດດ້ານໂທລະຄົມມະນາຄົມ AMS-Y 2010 ເລກທີ 1500 ແລະ ສະບັບປັບປຸງ (ປີ 2018).

ລາຍລະອຽດຂອງຄຳຮ້ອງທຸກຖືກສົ່ງໄປຫາ AMS-Y (ຈຸດຕິດຕໍ່ປາຍທາງຫຼື DCP) ແລະ ໄດ້ສົ່ງສຳເນົາເຖິງ AMS-X (ຈຸດຕິດຕໍ່ ຕົ້ນທາງຫຼື HCP) ເພື່ອຂໍ້ມູນ.

ການທົບທວນ ແລະ ການຕັດສິນໃຈຂອງຈຸດຕິດຕໍ່ປາຍທາງ

ຈຸດຕິດຕໍ່ປາຍທາງຂອງ AMS-Y, (ເຊັ່ນ: ກະຊວງການຄ້າຂອງ AMS-X) ກວດກາຄຳຮ້ອງທຸກ, ພົວພັນຢ່າງບໍ່ເປັນທາງການກັບ ເຈົ້າໜ້າທີ່ທີ່ກ່ຽວຂ້ອງພາຍໃນປະເທດ (RAs), ຄົກະຊວງໂທລະຄົມມະນາຄົມ, ອົງການສື່ສານແຫ່ງຊາດ, ແລະກະຊວງການຄ້າ, ແລະ ສື່ສານກັບ CA ທີ່ຕົນຕ້ອງ ການປະຕິເສດຄຳຮ້ອງທຸກ.

ຈຸດຕິດຕໍ່ປາຍທາງພົບເຫັນພື້ນຖານທີ່ພຽງພໍທີ່ AMS-Y ໄດ້ປະຕິບັດຕາມຄຳໝັ້ນສັນຍາຂອງອາຊຽນທີ່ກ່ຽວຂ້ອງ ແລະ ເຫັນວ່າຄຳ ຮ້ອງທຸກດັ່ງກ່າວຂາດຄຸນສົມບັດ. ໄດ້ໃຕ້ຖຽງວ່າ, ເຖິງແມ່ນວ່າພາຍໃຕ້ແຜນການຂອງ AFAS ຂອງຄຳໝັ້ນສັນຍາສະເພາະ, AMS-Y ບໍ່ມີຂໍ້ຈຳກັດຕໍ່ຄວາມເປັນເຈົ້າຂອງຂອງຕ່າງປະເທດ, ແຕ່ມັນໄດ້ຖືກລະບຸໄວ້ໃນຄຳໝັ້ນສັນຍາຕາມແນວຂວາງວ່າ, ເປັນຂໍ້ຈຳກັດ ໃນການເຂົ້າເຖິງຕະຫຼາດ, ການເປັນຕົວແທນການຄ້າຂອງຜູ້ໃຫ້ບໍລິການຕ່າງປະເທດ. ອາດຈະຢູ່ໃນຮູບແບບຂອງບໍລິສັດຮ່ວມທຸລະ

ກົດ ແລະ/ຫຼື ຫ້ອງການຜູ້ຕາງໜ້າຊຶ່ງຄວນຈະຕອບສະໜອງກັບຂໍ້ກຳນົດດັ່ງຕໍ່ໄປນີ້: (ii) ຢ່າງໜ້ອຍ 3 ໄຕມາດຂອງການບໍລິຫານລະດັບອາວຸโสຂອງບໍລິສັດ ແລະ ຜູ້ທີ່ໄດ້ຮັບອະນຸຍາດໃຫ້ເຊັນສັນຍາຜູກມັດຕ່າງໆໃນຖານະທີ່ເປັນຕົວແທນຂອງບໍລິສັດຕ້ອງເປັນຄົນສັນຊາດ AMS-Y. ດັ່ງນັ້ນ, ການປັບປຸງກົດໝາຍວ່າດ້ວຍທຸລະກິດດ້ານໂທລະຄົມມະນາຄົມສະບັບເລກທີ 1500 ປີ 2018 ບໍ່ໄດ້ລະເມີດກົດໝາຍຕາຕະລາງບໍລິການຂອງ AMS-Y.

ເພື່ອຕອບສະໜອງຄຳຮຽກຮ້ອງຂອງ AE ທີ່ບໍ່ໄດ້ຮັບແຈ້ງການໃດໆຈາກ AMS-Y ກ່ຽວກັບການປັບປຸງໃໝ່, AMS-Y ໄດ້ຕອບວ່າ ລັດຖະ ບານ AMS-Y ໄດ້ປະກາດໃຊ້ການປັບປຸງກົດໝາຍຜ່ານເວັບໄຊທ໌ທາງການຂອງລັດຖະບານ ແລະ ໜັງສືພິມພາຍໃນປະເທດ ຫຼັງຈາກໄດ້ຮັບຮອງເອົາສະບັບປັບປຸງໃນວັນທີ 1 ເດືອນກັນຍາ ປີ 2018.

ຜົນໄດ້ຮັບ

ເຫດຜົນສຳລັບການປະຕິເສດຂອງຈຸດຕິດຕໍ່ປາຍທາງຖືກສົ່ງໄປຫາຜູ້ດູແລລະບົບ ແລະ ໄດ້ຮັບການທົບທວນຄືນດ້ານພາສາ ແລະ ຄວາມພຽງພໍຂອງຂໍ້ມູນ. ຜູ້ດູແລລະບົບ ຍອມຮັບເຫດຜົນຂອງການປະຕິເສດ ຍ້ອນວ່າມັນເບິ່ງຄືວ່າຖືກຕ້ອງ ແລະ ມີເຫດຜົນພຽງພໍ. ຜູ້ດູແລລະບົບ: (i) ແຈ້ງໃຫ້ວິສາຫະກິດອາຊຽນຕັດສິນໃຈ; (ii) ແຈ້ງໃຫ້ວິສາຫະກິດອາຊຽນຊາບວ່າ ການດຳເນີນການຂອງ ASSIST ໄດ້ສິ້ນສຸດລົງແລ້ວ; ແລະ (iii) ແຈ້ງໃຫ້ວິສາຫະກິດອາຊຽນໃຫ້ມີທາງເລືອກຂອງຕົນ (ເຊັ່ນ: ການກະທຳທາງກົດໝາຍ, ການໄກ່ເກ່ຍ, ການຖອດຖອນຈາກການບໍລິການ, ແລະອື່ນໆ) ແລະ ໃຫ້ຄຳແນະນຳແກ່ຜູ້ດູແລລະບົບວ່າ ມີຈຸດປະສົງດຳເນີນການໃດໜຶ່ງຂອງກົດຈະກຳດັ່ງກ່າວ.

ASSIST ຈະພິຈາລະນາຂັ້ນຕອນນີ້ວ່າ ເປັນໜຶ່ງໃນຄຳຮ້ອງທຸກທີ່ຖືກປະຕິເສດ ແລະ ບໍ່ມີທາງແກ້ໄຂ ຫຼືບໍ່.

ການສອນເພີ່ມຂອງ ASSIST

ຮູບພາບໂດຍ: Deborah Tomasowa for US-ACTI

ຍັງມີການສອນເພີ່ມໃນເວັບໄຊທ์ຂອງ ASSIST ທີ່ https://assist.asean.org/read/proces/20 ອີກດ້ວຍ

ຮູບພາບໂດຍ:: Deborah Tomasowa ສໍາລັບ US-ACTI

ຄຳຮ້ອງທຸກທີ່ຍື່ນໂດຍວິສາຫະກິດອາຊຽນ (ASEAN Enterprise) ແລະ ຖືກປະຕິເສດ ໂດຍຜູ້ດູແລລະບົບ (Central Administrator)

ລາຍລະອຽດໂດຍຫຍໍ້ກ່ຽວກັບກໍລະນີ: ສະຖານະການນີ້ແມ່ນການຮ້ອງທຸກທີ່ຖືກປະຕິເສດໂດຍຜູ້ດູແລລະບົບ(CA) ຂອງ ASSIST ເນື່ອງຈາກວ່າມັນບໍ່ໄດ້ຖືກຍື່ນໂດຍຜູ້ຮ້ອງທຸກເອງ. ໃນກໍລະນີທີ່ເປັນການເດີນພັນ, ການປະຕິເສດໄດ້ເກີດຂຶ້ນກໍ່ຍ້ອນວ່າການຮ້ອງທຸກໄປກ່ຽວຂ້ອງກັບບັນຫາທີ່ຢູ່ນອກຂອບເຂດຂອງ ASSIST.

ຄຳຮ້ອງທຸກແມ່ນກ່ຽວຂ້ອງກັບຄວາມລ່າຊ້າຂອງການອອກໃບອະນຸຍາດເຮັດວຽກຂອງຜູ້ຮ້ອງທຸກໃນປະເທດປາຍທາງ. ຜູ້ຮ້ອງທຸກແມ່ນຜູ້ອໍານວຍການບໍລິສັດໃຫ້ຄຳປຶກສາໃນປະເທດເຈົ້າບ້ານ ທີ່ມີການສຶກສາໃນລະດັບປະລິນຍາຕີດ້ານເສດຖະກິດ, ຊຶ່ງເຄີຍໄດ້ສະເໜີວຽກໃຫ້ແກ່ບໍລິສັດທີ່ປຶກສາໃນປະເທດປາຍທາງ

ແລະ ຕັ້ງໃຈທີ່ຈະຍົກຍ້າຍແລະໄປອາໄສຢູ່ທີ່ນັ້ນເປັນການຖາວອນ. ເຖິງຢ່າງໃດກໍ່ຕາມ, ຂັ້ນຕອນດັ່ງກ່າວໃຊ້ເວລາດົນນານແລະມາຮອດປັດຈຸບັນມັນກໍ່ເກືອບ 3 ເດືອນແລ້ວທີ່ໃບອະນຸຍາດໄດ້ຖືກລະງັບຈາກປະເທດປາຍທາງ. ນີ້ເປັນການທຳລາຍໂອກາດຂອງຜູ້ຮ້ອງທຸກທີ່ຈະໄດ້ວຽກເຮັດ. ດັ່ງນັ້ນ, ລາວມີຄວາມຕ້ອງການຈະຮ້ອງທຸກໃຫ້ກັບ ASSIST ຕໍ່ປະເທດປາຍທາງ, ໂດຍຜ່ານບໍລິສັດຂອງລາວຢູ່ປະເທດເຈົ້າບ້ານໃນຫົວຂໍ້ເຮື່ອງຄວາມລ່າຊ້າໃນການອອກໃບອະນຸຍາດເຮັດວຽກຂອງລາວ. ພື້ນຖານໃນການອ້າງອີງຂອງຄຳຮ້ອງທຸກຂອງທ່ານ Upset ແມ່ນໄດ້ມີຂໍ້ຕົກລົງອາຊຽນວ່າດ້ວຍການເຄື່ອນຍ້າຍຂອງບຸກຄົນທຳມະດາ, ເຊິ່ງອະນຸຍາດໃຫ້ມີການເຄື່ອນຍ້າຍຢ່າງເສລີຂອງບຸກຄົນທີ່ມີຄວາມຊຳນານພາຍໃນອາຊຽນ, ແລະໃນຂອບເຂດຄວາມຕົກລົງວ່າດ້ວຍການບໍລິການການຄ້າ (AFAS).

ລາຍຊື່ຜູ້ດຳເນີນການຫລັກແລະຕົວຫຍໍ້:

- ຜູ້ຮ້ອງທຸກ = ວິສາຫະກິດອາຊຽນ (AE)
- ກອງເລຂາອາຊຽນ = ຜູ້ດູແລລະບົບ ASSIST (CA)
- ປະເທດເຈົ້າບ້ານ = ຈຸດທີ່ໃຊ້ຕິດຕໍ່ໃນປະເທດຕົ້ນທາງ (HCP) ໃນບັນດາປະເທດສະມາຊິກອາຊຽນ -X (AMS-X)
- ປະເທດປາຍທາງ = ຈຸດທີ່ໃຊ້ຕິດຕໍ່ໃນປະເທດປາຍທາງ (DCP) ໃນບັນດາປະເທດສະມາຊິກອາຊຽນ - -X (AMS-X)
- ປະເທດປາຍທາງ = ຈຸດທີ່ໃຊ້ຕິດຕໍ່ໃນປະເທດປາຍທາງ (DCP) ໃນບັນດາປະເທດສະມາຊິກອາຊຽນ -Y (AMS-Y)

ຂັ້ນຕອນ 1 ໄປທີ່ເວັບໄຊທ໌ຂອງ ASSIST

ຖ້າທ່ານຮູ້ສຶກວ່າຄະດີຂອງທ່ານແມ່ນບັນຫາກ່ຽວກັບການຄ້າຂ້າມຊາດຂອງອາຊຽນ, ແລະ ທ່ານເອງມີທຸລະກິດທີ່ຈົດທະບຽນຢູ່ໃນປະເທດສະມາຊິກອາຊຽນ, ແລະ ທ່ານຕ້ອງການການບໍລິການໃຫ້ຄຳປຶກສາແບບບໍ່ເສຍຄ່າ, ບໍ່ຜູກມັດ, ແລະໄດ້ຮັບວິທີແກ້ໄຂແບບວ່ອງໄວ ແລະ ທີ່ມີປະສິດຕິພາບ, ຈົ່ງໄປທີ່ລິ້ງຕໍ່ໄປນີ້: http://assist.asean.org.

ASSOCIATION OF SOUTHEAST ASIAN NATIONS
ASSIST
ASEAN Solutions for Investments, Services and Trade

WELCOME TO ASSIST | WHAT IS ASSIST? | FILE A COMPLAINT | FOLLOW A COMPLAINT | PROCESS | FAQ | CONTACT

ຂ້າງລຸ່ມນີ້ແມ່ນ ໜ້າທຳອິດຂອງເວັບໄຊທ์ ASSIST.



ຂັ້ນຕອນ 2 ຈົ່ງເລືອກເອົາແຖບ 'FILE A COMPLAINT' (ໄອຄອນ ASEAN ENTERPRISE)

ຖ້າທ່ານກຳລັງຍື່ນຄຳຮ້ອງທຸກພາຍໃຕ້ບໍລິສັດຂອງທ່ານເອງ (ຄຳຮ້ອງທຸກໂດຍທີ່ບໍ່ລະບຸຊື່) ແລະທ່ານບໍ່ໄດ້ເປັນຕົວແທນຂອງສະມາຄົມການຄ້າທີ່ອາຊຽນ, ຫຼື ໜ່ວຍງານຕົວແທນອື່ນໆທີ່ທ່ານໄດ້ເລືອກ, ເຊັ່ນວ່າ ຫໍການຄ້າ, ສະພາທຸລະກິດ, ສະຫະພັນທຸລະກິດ, ຫຼືທະນາຍຄວາມທີ່ໄດ້ລົງທະບຽນ ຫລື ສຳນັກງານດ້ານກົດຫມາຍ, ກໍ່ໃຫ້ທ່ານຄລິກທີ່' ASEAN Enterprise - ລັດວິສາຫະກິດອາຊຽນ' ຢູ່ໃນແຖບເມນູ ' File a Complaint - ຍື່ນຄຳ ຮ້ອງທຸກ'.



ເມື່ອທ່ານຄລິກທີ່ໄອຄອນ ' ASEAN Enterprise', ໜ້າເວັບຕໍ່ໄປກໍ່ຈະປາກົດຂຶ້ນ





ໃຫ້ທ່ານປ້ອນຂໍ້ມູນໃສ່ໃນແບບຟອມຂ້າງເທິງນັ້ນເພື່ອໃຫ້ ASSIST ໄດ້ມີຂໍ້ມູນພຽງພໍກ່ຽວກັບບັນຫາການຄ້າທີ່ທ່ານກຳລັງປະສົບຢູ່. ຊ່ອງໃສ່ຂໍ້ມູນທີ່ມີເຄື່ອງໝາຍດາວ (*) ແມ່ນບັງຄັບໃຫ້ປ້ອນຂໍ້ມູນໃສ່. ຖ້າທ່ານບໍ່ແນ່ໃຈວ່າຈະຕື່ມຂໍ້ມູນແບບໃດໃສ່ໃນຊ່ອງປ້ອນຂໍ້ມູນ, ປຸ່ມຕ່າງໆທີ່ເປັນຮູບ ⓘ ໄດ້ມີໄว้ໃຫ້ໃຊ້ສຳລັບເບິ່ງຄຳແນະນຳລະອຽດກ່ຽວກັບວ່າຈະປ້ອນຂໍ້ມູນແບບໃດໃສ່ໃນແຕ່ລະຊ່ອງ. ກະລຸນາກົດປຸ່ມທີ່ເປັນຮູບ ⓘ ເພື່ອຮັບປະກັນວ່າທ່ານສາມາດເຂົ້າໃຈແລະຮູ້ໄດ້ວ່າຈະຕ້ອງປ້ອນຂໍ້ມູນແບບໃດທີ່ຖືກຕ້ອງລົງໃນແບບຟອມ.

ມັນເປັນສິ່ງສຳຄັນທີ່ສຸດທີ່ທ່ານຕ້ອງປ້ອນຂໍ້ມູນໃສ່ໃນຊ່ອງ 'Description'. ທາງ CA ຈະຕ້ອງໄດ້ທຳການກວດສອບວ່າ ຄຳອະທິບາຍຕ່າງໆທີ່ໄດ້ກ່າວໄວ້ໃນຄຳຮ້ອງທຸກນັ້ນແມ່ນມີຄວາມພຽງພໍທີ່ຈະກຳນົດບັນຫາໄດ້ຢ່າງຈະແจ້ງໃນແງ່ຂອງຂໍ້ຕົກລົງກ່ຽວກັບຫົວຂໍ້ສະເພາະຫລືບໍ່. ດັ່ງນັ້ນ, ກະລຸນາໃຫ້ທ່ານຈັດແจງຄຳຮ້ອງທຸກຂອງທ່ານຢ່າງລະມັດລະວັງພ້ອມດ້ວຍຂໍ້ມູນການໂຕ້ຖຽງຕ່າງໆທາງກົດໝາຍ ແລະຫຼັກຖານທີ່ເປັນຈິງເພື່ອຊ່ວຍໃຫ້ທາງ CA ໃນການຕັດສິນໃຈວ່າຈະອະນຸມັດຄຳຮ້ອງທຸກຂອງທ່ານໄດ້ຫຼືບໍ່.

ຂັ້ນຕອນ 3 ຈົ່ງບະກອບແບບຟອມນີ້

ຂ້າງລຸ່ມນີ້ແມ່ນຕົວຢ່າງຂອງແບບຟອມທີ່ໄດ້ປ້ອນຂໍ້ມູນໄວ້ຮຽບຮ້ອຍສຳລັບການສຶກສາກໍລະນີນີ້ໂດຍສະເພາະ.





ASEAN ENTERPRISE

* ASEAN Enterprise Name: Blue Sapphire Consulting Group
* Company Size: 10 to 50
* Phone: +96131415
Website: www.bluesapphirecg.com
* Address: Red Sparrow Street No. 13, City V, Country X
* City: City V — ZIP Code: 12130
* Country: AMS-X

CONTACT PERSON

* Gender: Mr / Mrs / Ms
* First Name: Very — * Last Name: Upset
* Phone: +96131415
* Position: Director
* Email: aseanenterprise0@gmail.com
Address: Red Sparrow Street No. 13, City V, Country X
City: City V — ZIP Code: 12130
Country: AMS-X

COMPLAINT DESCRIPTION

* Country of Legal Registration: AMS-X
* Registration Number: 123456
* Company Registration Proof: Choose File Simulated Comp...ing Group.pdf
* Type of Business: Service provider
* Business Sector: Services
- Services Sector Description: Consultancy
* Type of Problem Encountered: 12 Other Services
* Destination Country: AMS-Y
* Description: I am a director of a consultancy firm in AMS-X. I have been offered a job in a consultancy firm in AMS-Y and intend to move and live there on a permanent basis.
Pursuant to the job offer by the company in AMS-Y, they informed me that it would take about one month for it to secure my work permit. However, the procedure is taking much longer and it is now nearly three months that the permit is withheld by AMS-Y. This is jeoperdizing my chances of getting the job.
Thus, I wish to raise an ASSIST complaint against AMS-Y, through my company in AMS-X, for
Attachment: Choose File No file chosen — + Attachment

I have read and accept the ASSIST rules
I hereby submit this complaint to the Central Administrator of ASSIST and I accept its transmission to the relevant authorities of the ASEAN Member States involved
I'm not a robot
SUBMIT YOUR COMPLAINT

Central Administrator of ASSIST / ASEAN Secretariat - 70A Jl. Sisingamangaraja - Jakarta 12110 - Indonesia
ASSIST - Supported by ARISE - [Disclaimer]

ຂ້າງລຸ່ມນີ້ແມ່ນລາຍລະອຽດຂອງ AE ກ່ຽວກັບຄຳຮ້ອງທຸກຂອງລາວໃນກໍລະນີສຶກສານີ້:

"ຂ້າພະເຈົ້າເປັນຜູ້ອຳນວຍການຂອງບໍລິສັດທີ່ປຶກສາ AMS-X. ຂ້າພະເຈົ້າໄດ້ຖືກສະເໜີໃຫ້ເຮັດວຽກໃນບໍລິສັດທີ່ປຶກສາໃນ AMS-Y ແລະມີຄວາມຕັ້ງໃຈທີ່ຈະຍົກຍ້າຍແລະໄປອາໄສຢູ່ທີ່ນັ້ນໂດຍຖາວອນ.

ອີງຕາມການຕົກຕາມຂອງການສະເໜີວຽກຂອງບໍລິສັດໃນ AMS-Y, ພວກເຂົາໄດ້ແຈ້ງໃຫ້ຂ້ອຍຮູ້ວ່າມັນຕ້ອງໃຊ້ເວລາປະມານ 1 ເດືອນເພື່ອຈະສາມາດອອກໃບອະນຸຍາດເຮັດວຽກໃຫ້ຂ້ອຍ. ເຖິງຢ່າງໃດກໍ່ຕາມ, ຂັ້ນຕອນການອອກໃບອະນຸຍາດດັ່ງກ່າວໄດ້ໃຊ້ເວລາດົນຫລາຍແລະມາຮອດປະຈຸບັນກໍ່ເກືອບ 3 ເດືອນແລ້ວທີ່ໃບອະນຸຍາດໄປຄ້າງຢູ່ທີ່ AMS-Y. ອັນນີ້ເປັນເລື່ອງອັນຕະລາຍຕໍ່ໂອກາດຂອງຂ້າພະເຈົ້າທີ່ຈະໄດ້ວຽກເຮັດ.

ດັ່ງນັ້ນ, ຂ້າພະເຈົ້າຈຶ່ງຕ້ອງການທີ່ຈະຮ້ອງທຸກຕໍ່ AMS-Y, ໂດຍຜ່ານບໍລິສັດຂອງຂ້າພະເຈົ້າຢູ່ AMS-X, ຕໍ່ຄວາມລ່າຊ້າໃນການອອກໃບອະນຸຍາດເຮັດວຽກຂອງຂ້າພະເຈົ້າ. ພື້ນຖານໃນການອ້າງອີງຂອງຄຳຮ້ອງທຸກຂອງຂ້າພະເຈົ້າ ແມ່ນໄດ້ມີຂໍ້ຕົກລົງວ່າດ້ວຍການເຄື່ອນຍ້າຍຂອງບຸກຄົນທຳມະດາ, ເຊິ່ງອະນຸຍາດໃຫ້ມີການເຄື່ອນໄຫວຢ່າງເສລີຂອງບຸກຄົນທີ່ມີຄວາມຊຳນານພາຍໃນອາຊຽນ, ແລະໃນຂອບເຂດຄວາມຕົກລົງວ່າດ້ວຍການບໍລິການການຄ້າ (AFAS). ຂ້າພະເຈົ້າຈຶ່ງໄດ້ຕິດຄັດຕິດເອກະສານການຈົດທະບຽນທຸລະກິດຂອງບໍລິສັດຂອງຂ້າພະເຈົ້າໃນ AMS-X ໃຫ້ຖືກຕ້ອງຕາມຫຼັກການ ເພື່ອຍື່ນຄຳຮ້ອງທຸກພາຍໃຕ້ ASSIST."

ເມື່ອໄດ້ຍື່ນຄຳຮ້ອງທຸກໄປແລ້ວ ດ້ວຍການຄລິກ 'Submit Your Complaint-ຍື່ນຄຳຮ້ອງທຸກຂອງທ່ານ', ໜ້າເວັບຕໍ່ໄປນີ້ທີ່ຢູ່ໃນຂັ້ນຕອນທີ 4 ຈະປາກົດຂຶ້ນມາ.

ຂັ້ນຕອນ 4 ຮັບການແຈ້ງຈາກ ASSIST

ເມື່ອທ່ານໄດ້ຍື່ນຄຳຮ້ອງທຸກເຂົ້າໄປຢູ່ໃນເວັບໄຊທ໌ ASSIST ແລ້ວ, ໜ້າເວັບຕໍ່ໄປນີ້ກໍ່ຈະປາກົດຂຶ້ນ, ເພື່ອແຈ້ງໃຫ້ທ່ານໄດ້ຮູ້ວ່າຈະມີອີເມລຢັ້ງຢືນສົ່ງໄປຫາອີເມລຂອງທ່ານທີ່ທ່ານໄດ້ໃຫ້ໄວ້ໃນແບບຟອມການຮ້ອງທຸກຂອງທ່ານ



ການໄດ້ຮັບການແຈ້ງເຕືອນທາງອີເມລຕາມທີ່ເຫັນຂ້າງເທິງນັ້ນ ຊີ້ໃຫ້ເຫັນວ່າທ່ານຄວນຄລິກທີ່ລິ້ງທີ່ຢູ່ໃນຫນ້າອີເມລຂອງທ່ານ ເພື່ອຢືນຢັນການສົ່ງຄຳຮ້ອງທຸກຂອງທ່ານໃຫ້ກັບ ASSIST.

ຂັ້ນຕອນ 5 ຢືນຢັນການສົ່ງຄຳຮ້ອງທຸກຂອງທ່ານດ້ວຍອີເມລຂອງທ່ານ

(a) ໃຫ້ທ່ານເຂົ້າໄປໃນບັນຊີອີເມລຂອງທ່ານ ທີ່ທ່ານໄດ້ໃຫ້ໄວ້ກັບແບບຟອມການຮ້ອງທຸກ. ທ່ານຈະໄດ້ຮັບອີເມລຈາກ ASSIST ເພື່ອໃຫ້ທ່ານທຳການຢືນຢັນການສົ່ງຄຳຮ້ອງທຸກຂອງທ່ານໂດຍໃຫ້ໄປຄລິກທີ່ລິ້ງທີ່ໄດ້ສົ່ງມາໃຫ້ທາງກັບອີເມລຫລື ຖ້າບໍ່ຢາກຄລິກກໍ່ພຽງແຕ່ທ່ານຄັດລອກເອົາລິ້ງນັ້ນໄປແປະໃສ່ໃນ browser ອິນເຕີເນັດ. ອັນນີ້ແມ່ນຕ້ອງໄດ້ເຮັດຕາມທີ່ ASSIST ໄດ້ຮຽກຮ້ອງມາ ເພື່ອເປັນການຢືນຢັນວ່າ ອີເມລທີ່ທ່ານໄດ້ໃຫ້ໄປນັ້ນຖືກຕ້ອງ. ໝາຍເລກຄຳຮ້ອງທຸກຂອງທ່ານກໍ່ໄດ້ສົ່ງມາໃຫ້ທ່ານດ້ວຍອີເມລນີ້ເຊັ່ນກັນ. ໃນກໍລະນີນີ້, ໝາຍເລກຄຳຮ້ອງທຸກຂອງທ່ານແມ່ນ **16920181030.**

ຂ້າງລຸ່ມນີ້ແມ່ນອີເມລທີ່ທ່ານຈະໄດ້ຮັບຈາກ ASSIST.



Gmail

ASEAN Enterprise <aseanenterprise0@gmail.com>

[ASSIST] Thanks to confirm your complaint #16920181030 submission

No Reply ASSIST <assist@asean.org>
Reply-To: "assist@asean.org" <assist@asean.org>

Tue, Oct 30, 2018 at 1:21 P

ASSOCIATION OF SOUTHEAST ASIAN NATIONS

ASSIST
ASEAN Solutions for Investments, Services and Trade

Dear **Mr Very Upset** ,

Thank you for having filed a complaint on **ASSIST**, the system of ASEAN Solutions for Investments, Services and Trade.

Please **confirm** your complaint **16920181030 on the following link** (or by copy-pasting the following link onto your Internet browser):
http://assist.arsenadevelopment.space/user/confirm_email?email=aseanenterprise0@gmail.com&id=16920181030&code=j6xk5a8g13we

After your confirmation, ASSIST will monitor your complaint and you will be able to access it on the following webpage
http://assist.arsenadevelopment.space/user/login by using your e-mail / tracking ID: **aseanenterprise0@gmail.com / 16920181030**

ASEAN Enterprise / Trade Association / Law Firm : Blue Sapphire Consulting Group (type Enterprise)
Company size : 10 to 50
Phone : +96131415
Website : www.bluesapphireog.com
Address : Red Sparrow Street No. 13 City V Country X
City : City V / Zip Code : 12130

http://assist.asean.org/user/confirm_email

Contact person : Mr Very Upset
http://assist.asean.org/user/login by using your e-mail / tracking ID: aseanenterpriseo@gmail.com / **16920181030**
Email : aseanenterprise0@gmail.com
Address : Red Sparrow Street No. 13 City V Country X
City : City V / Zip Code : 12130
Country : AMS-X

Confidential case code (for law firm or lawyer only):
Country of Legal Registration : AMS-X
Legal Registration Number : 123456
Type of Business : Service provider
Business Sector : Services / Consultancy
Type of problem encountered : Other Services
Destination Country : AMS-Y

Description:
I am a director of a consultancy firm in AMS-X. I have been offered a job in a consultancy firm in AMS-Y and intend to move and live there on a permanent basis. Pursuant to the job offer by the company in AMS-Y, they informed me that it would take about one month for it to secure my work permit. However, the procedure is taking much longer and it is now nearly three months that the permit is withheld by AMS-Y. This is jeopardizing my chances of getting the job. Thus, I wish to raise an ASSIST complaint against AMS-Y, through my company in AMS-X, for delaying the issuing of my work permit. The basis of my complaint is that there is the ASEAN Agreement on Movement of Natural Persons, which allows for free movement of skilled persons within ASEAN, as well as the ASEAN Framework Agreement on Services. I hereby attach my company's business registration in AMS-X as the requirement to lodge a complaint under ASSIST.

Thanking you, ASSIST is at your service.

assist.asean.org

Simulated_Company_Registration_of_Blue_Sapphire_Consulting_Group.pdf
50K

(b) ໃຫ້ທ່ານຄລິກທີ່ລິ້ງທີ່ໄດ້ໃຫ້ມາກັບອີເມລເຊິ່ງຕ້ອງໄດ້ຄລິກ ແລະຫນ້າໃຫມ່ໃນອີເມລນັ້ນກໍ່ຈະປະກົດໃຫ້ເຫັນ.



ASSOCIATION OF SOUTHEAST ASIAN NATIONS
ASSIST
ASEAN Solutions for Investments, Services and Trade

WELCOME TO ASSIST | WHAT IS ASSIST? | FILE A COMPLAINT | FOLLOW A COMPLAINT | PROCESS | FAQ | CONTACT

Email/complaint confirmation valid

Thank you for having confirmed your e-mail.

Your complaint will now be reviewed by the Central Administrator of ASSIST and you shall be notified within maximum 10 working days of whether it is:

1) Accepted and submitted to the Destination Country; or
2) Incomplete and returned to you for revision; or
3) Rejected, if falling outside of the scope of ASSIST or not being a valid complaint.

A reason shall be provided to you in writing in case of outcomes 2) or 3) above.

Central Administrator of ASSIST / ASEAN Secretariat - 70A Jl. Sisingamangaraja - Jakarta 12110 - Indonesia
ASSIST - Supported by ARISE - [Disclaimer]

ການແຈ້ງເຕືອນທີ່ໄດ້ສະແດງໄວ້ຂ້າງເທິງນີ້ຈະແຈ້ງໃຫ້ທ່ານຊາບວ່າ ຄຳຮ້ອງທຸກຂອງທ່ານຈະຖືກທົບທວນໂດຍ CA ແລະ ຫລັງຈາກນັ້ນ ທ່ານຈະໄດ້ຮັບການແຈ້ງກັບມາຫາທ່ານທາງອີເມລ ພາຍໃນເວລາເວລາສູງສຸດ 10 ວັນລັດຖະການ ໂດຍທີ່ການຍື່ນຄຳຮ້ອງທຸກຂອງທ່ານນັ້ນຈະ:

1) ໄດ້ຮັບການຍອມຮັບແລະຖືກສົ່ງຕໍ່ເພື່ອສະເໜີຕໍ່ປະເທດປາຍທາງ; ຫຼື
2) ບໍ່ຄົບຖ້ວນແລະໄດ້ຖືກສົ່ງກັບຄືນມາຫາທ່ານເພື່ອດັດແກ້; ຫຼື
3) ຖືກປະຕິເສດ, ຖ້າຫາກຢູ່ນອກຂອບເຂດຂອງ ASSIST ຫຼື ເປັນການຮ້ອງທຸກທີ່ໃຊ້ການບໍ່ໄດ້.

ຈົ່ງໄປທີ່ບັນຊີອີເມລຂອງທ່ານ.

ຂັ້ນຕອນ 6 ໄດ້ຮັບອີເມລຈາກ ASSIST ເພື່ອໃຫ້ຮູ້ວ່າອີເມລແລະຄຳຮ້ອງທຸກຂອງທ່ານນັ້ນຖືກຕ້ອງ

(a) ໃຫ້ທ່ານໄປທີ່ອີເມລຂອງທ່ານ ແລະ ທ່ານຈະເຫັນມີອີເມລໃໝ່ ຈາກ ASSIST ສົ່ງມາຫາທ່ານ. ອີເມລນີ້ຈະຊີ້ບອກໃຫ້ເຫັນວ່າ ທ່ານຮູ້ວ່າ ທ່ານໄດ້ທຳການຢືນຢັນຄຳຮ້ອງທຸກຂອງທ່ານແລ້ວພ້ອມທັງທາງ CA ຈະກວດສອບຄວາມຖືກຕ້ອງຂອງຄຳຮ້ອງທຸກ, ແລະ ກໍ່ໄດ້ຖືກນຳເຂົ້າໄປເກັບໄວ້ໃນລະບົບພາຍໃນຂອງ ASSIST. ASSIST ຈະກັບມາຕິດຕໍ່ອີກເທື່ອໜຶ່ງພ້ອມດ້ວຍຄຳຕອບທີ່ຈະບອກວ່າ ຄຳຮ້ອງທຸກທີ່ໄດ້ສົ່ງໄປນັ້ນ ໄດ້ຮັບການຍອມຮັບແລ້ວ, ບໍ່ຄົບຖ້ວນ ຫຼື ຖືກປະຕິເສດພາຍໃນ 10 ມື້ລັດຖະການ.


Gmail
ASEAN Enterprise <aseanenterprise0@gmail.com>

[ASSIST] Thanks for your email confirmation for the complaint #16920181030

No Reply ASSIST <assist@asean.org>
Reply-To: "assist@asean.org" <assist@asean.org>
Tue, Oct 30, 2018 at 1:24 P

ASSOCIATION OF SOUTHEAST ASIAN NATIONS
ASSIST
ASEAN Solutions for Investments, Services and Trade

Dear **Mr Very Upset ,**

Thanks for the confirmation of your complaint ID No. **16920181030.**

ASSIST will review your complaint and check its validity and that it has been lodged correctly. You will receive a response indicating whether the complaint is validly lodged, or requires revision, or whether it does not fall within the scope of ASSIST, within a maximum of 10 working days from the date of filing.

